

ກະຊວງແຜນການ ແລະ ການລົງທຶນ
ສະຖາບັນຄົ້ນຄວ້າວິໄຈການພັດທະນາ

# ການຜະລິດ ແລະ ການສະໜອງສິນຄ້າກະສິກຳ ເພື່ອການຫຼຸດຜ່ອນຄວາມທຸກຍາກ

## ກໍລະນີສຶກສາຢູ່ແຂວງອຸດົມໄຊ ແລະ ຫຼວງນ້ຳທາ ສປປ ລາວ

2021

# ການຜະລິດ ແລະ ການສະໜອງສິນຄ້າກະສິກຳເພື່ອການຫຼຸດຜ່ອນຄວາມທຸກຍາກ (ກໍລະນີສຶກສາຢູ່ແຂວງອຸດົມໄຊ ແລະ ຫຼວງນ້ຳທາ, ສປປ.ລາວ)

*Authors: ທ່ານ ປອ ສິດທິຣົດ ຣາຊະພົນ, ທ່ານ ສຸພິດ ດາຣາຈັນທຣາ (Main), ທ່ານ ປອ ທະນົງຊາຍ ສຸກຄຳທັດ (Main), ແລະ ທີມງານພະແນກຄົ້ນຄວ້ານະໂຍບາຍພັດທະນາເຂດແຄວ້ນ ແລະ ຫຼຸດຜ່ອນຄວາມທຸກຍາກ*

## ບົດຄັດຫຍໍ້

ບົດຄົ້ນຄວ້ານີ້ໄດ້ສຶກສາເຖິງບັນດາປັດໄຈໃນການຜະລິດສິນຄ້າກະສິກຳທີ່ມີຜົນກະທົບຕໍ່ກັບຄວາມທຸກຍາກຂອງຊາວກະສິກອນຢູ່ໃນແຂວງຫຼວງນ້ຳທາ ແລະ ອຸດົມໄຊ, ສປປ.ລາວ. ບົດຄົ້ນຄວ້າດັ່ງກ່າວແມ່ນໄດ້ນຳໃຊ້ວິທີການສຶກສາທາງດ້ານຄຸນນະພາບ ແລະ ປະລິມານໄປດ້ວຍກັນ ໂດຍສະເພາະແມ່ນໄດ້ນຳໃຊ້ຮູບແບບ Logit Model ເພື່ອວິເຄາະເຖິງສາຍພົວພັນຂອງບັນດາປັດໄຈທີ່ມີຜົນກະທົບຕໍ່ກັບຄວາມທຸກຍາກ. ຂໍ້ມູນທີ່ຖືກນຳໃຊ້ເຂົ້າໃນການວິໄຈນີ້ ແມ່ນຂໍ້ມູນຈາກການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ ຄັ້ງທີ VI (Lao Expenditure and Consumtpion Survey VI 2018-2019), ລວມທັງບົດລາຍງານ, ບົດຄົ້ນຄວ້າ ແລະ ຂໍ້ມູນທາງດ້ານສະຖິຕິຕ່າງໆ. ຜົນຂອງການສຶກສາຄົ້ນຄວ້າໃນຄັ້ງນີ້ພົບວ່າ ເຖິງແມ່ນວ່າການຜະລິດກະສິກຳຢູ່ໃນໃນແຂວງຫຼວງນ້ຳທາ ແລະ ອຸດົມໄຊ ໄດ້ມີການຂະຫຍາຍຕົວເປັນກ້າວໆ ໂດຍສະເພາະແມ່ນການຜະລິດພືດເປັນສິນຄ້າ ແລະ ການລ້ຽງສັດກໍ່ເລີ່ມມີໜໍ່ແໜງຂອງການຫັນເປັນຟາຣ໌ມເກີດຂຶ້ນ, ແຕ່ການຜະລິດສ່ວນໃຫຍ່ກໍ່ຍັງເປັນຂະໜາດນ້ອຍ, ກະແຈກກະຈາຍ, ຂຶ້ນກັບທຳມະຊາດ ແລະ ຜະລິດຕາມລະດູການ ຊຶ່ງຍັງບໍ່ທັນສາມາດປະກອບສ່ວນເຂົ້າໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນໄດ້ຢ່າງກວ້າງຂວາງ ແລະ ທົ່ວເຖິງໃນທຸກເຂດ. ການຄ້າຂາຍສິນຄ້າກະສິກຳຢູ່ໃນຂົງເຂດດັ່ງກ່າວນີ້ ສ່ວນໃຫຍ່ແມ່ນເປັນສິນຄ້າກະສິກຳ ທີ່ປະຊາຊົນໄດ້ເຮັດສັນຍາການຜະລິດ ແລະ ການຊື້ຂາຍຮ່ວມກັບຝ່າຍຈີນ ເປັນຕົ້ນແມ່ນມັນຕົ້ນ, ກ້ວຍ, ສາລີ, ໝາກໂມ, ເຂົ້າ ແລະ ມັນດ້າງ ກໍ່ຄື 16 ຊະນິດພືດທີ່ຢູ່ພາຍໃຕ້ໂຄງການປູກພືດກະສິກາທົດແທນການປູກຝິ່ນ. ໃນເລື່ອງຂອງການຜະລິດ ແລະ ການຄ້າຂາຍສິນຄ້າກະສິກຳຂອງສອງແຂວງດັ່ງກ່າວ ເມື່ອປຽບທຽບກັນລະຫວ່າງຜູ້ທີ່ທຸກຍາກ ແລະ ຄົນທີ່ພົ້ນທຸກແລ້ວ ເຫັນວ່າກຸ່ມຜູ້ທີ່ທຸກຍາກສາມາດຜະລິດສິນຄ້າກະສິກຳໄດ້ໜ້ອຍກວ່າກຸ່ມຜູ້ທີ່ພົ້ນທຸກ ປະມານ 30% ແລະ ລວມຍອດການຂາຍຜົນຜະລິດກະສິກຳຂອງເຂົາເຈົ້າກໍ່ຕໍ່າກວ່າ 50%. ກຸ່ມຄົນທີ່ດຳລົງຊີວິດຢູ່ໃນຂົງເຂດທີ່ມີຊາຍແດນຕິດກັບ ສປ.ຈີນ ແມ່ນມີຜົນຜະລິດສູງກວ່າກຸ່ມຄົນທີ່ດຳລົງຊີວິດຢູ່ໃນເຂດທີ່ຈະມີສະຖານີລົດໄຟ ລາວ-ຈີນ ຕັ້ງຢູ່ ປະມານ 8 ເທົ່າ. ສຳລັບປັດໄຈສຳຄັນທີ່ສົ່ງຜົນກະທົບຕໍ່ກັບຄວາມທຸກຍາກຂອງຊາວກະສິກອນນັ້ນ ແມ່ນການສຶກສາ, ການມີເນື້ອທີ່ທຳການຜະລິດ, ມີຜົນຜະລິດເປັນສິນຄ້າ ແລະ ໄດ້ຂາຍສິນຄ້າກະສິກຳຂອງຕົນເອງນັ້ນ ໂດຍສະເພາະແມ່ນຊາວກະສິກອນຢູ່ໃນຂົງເຂດທີ່ຢູ່ໃກ້ກັບເຂດການຄ້າຊາຍແດນ ແມ່ນເປັນປັດໄຈສຳຄັນໃນການເຮັດໃຫ້ຄວາມທຸກຍາກຫຼຸດລົງ.

ຈາກຜົນຂອງການສຶກສາດັ່ງກ່າວນີ້ ທີມງານສຶກສາຄົ້ນຄວ້າຈຶ່ງມີຂໍ້ສະເໜີທາງດ້ານນະໂຍບາຍທີ່ສຳຄັນ ຄື: ຕ້ອງໄດ້ສຸມໃສ່ປັບປຸງລະບົບການສຶກສາໃຫ້ດີຂຶ້ນ ແລະ ຂະຫຍາຍຕາໜ່າງການສຶກສາທີ່ດີໄປສູ່ຊົນນະບົດ ເພື່ອສ້າງກາລະໂອກາດໃຫ້ແກ່ຜູ້ທີ່ທຸກຍາກໄດ້ຮັບການຍົກລະດັບຄວາມຮູ້ເພີ່ມສູງຂຶ້ນ; ຍົກສູງປະສິດທິພາບ ແລະ ປະສິດທິຜົນໃນການຜະລິດກະສິກຳເປັນສິນຄ້າ ດ້ວຍການນຳໃຊ້ເນື້ອທີ່ດິນ ແລະ ປັດໄຈການຜະລິດທີ່ມີຢູ່ຢ່າງຈຳກັດໃຫ້ເກີດຜົນປະໂຫຍດສູງສຸດ ໂດຍເອົາໃຈໃສ່ໃນການແນະນຳ-ສົ່ງເສີມໃຫ້ປະຊາຊົນເຮັດການຜະລິດຕາມເຕັກນິກວິຊາການທີ່ຖືກຕ້ອງສອດຄ່ອງກັບສະພາບເສດຖະກິດ ແລະ ສັງຄົມຂອງເຂດນັ້ນໆ; ທົບທວນ ແລະ ຈັດຕັ້ງປະຕິບັດບັນດານະໂຍບາຍຊ່ວຍໜູນດ້ານຕ່າງໆໃຫ້ໄດ້ຢ່າງເປັນຮູບປະທຳ ເປັນຕົ້ນແມ່ນບັນດານິຕິກຳລະອຽດໃນການສົ່ງເສີມການຄ້າຂາຍຢູ່ເຂດຊາຍແດນ, ການຄ້າຂາຍຂ້າມແດນ, ນະໂຍບາຍສິນເຊື່ອ ແລະ ການເຈລະຈາເພື່ອໃຫ້ໄດ້ໂຄຕ້າທີ່ແນ່ນອນຈາກຕະຫຼາດຈີນ; ພິຈາລະນານຳໃຊ້ນະໂຍບາຍເລັ່ງດ່ວນ ແລະ ງ່າຍດາຍ ໃນການຫຼຸດຊ່ອງວ່າງການພັດທະນາລະຫວ່າງຕົວເມືອງ ແລະ ຊົນນະບົດໃຫ້ເປັນຮູບປະທຳ ແລະ ດີຂຶ້ນກວ່າເກົ່າ ເພື່ອເຮັດໃຫ້ຜູ້ທີ່ທຸກຍາກຢູ່ໃນເຂດຊົນນະບົດມີທ່າແຮງດ້ານຄວາມຮູ້, ຄວາມຄິດ ແລະ ຄວາມກະຕືລືລົ້ນໃນການເຮັດໃຫ້ຕົນເອງ ແລະ ຄອບຄົວຫຼຸດພົ້ນອອກຈາກຄວາມທຸກຍາກ ແລະ ດ້ວຍພັດທະນາໄດ້ຢ່າງໄວວາ, ຕໍ່ເນື່ອງ ແລະ ຍືນຍົງ.

ສະຖາບັນຄົ້ນຄວ້າວິໄຈການພັດທະນາ, 2021

# 1. ພາກສະເໜີ

## 1.1. ຄວາມເປັນມາ

ການກະສິກຳເປັນຂະແໜງການໜຶ່ງທີ່ມີບົດບາດສຳຄັນຢູ່ໃນລະບົບເສດຖະກິດ ຂອງ ສປປ.ລາວ ແລະ ເປັນຂະແໜງການພື້ນຖານຢູ່ໃນໂຄງປະກອບເສດຖະກິດແຫ່ງຊາດ ຂອງ ສປປ.ລາວ ໂດຍສະເພາະແມ່ນການຄໍ້າປະກັນສະບຽງອາຫານ ແລະ ການຜະລິດເປັນສິນຄ້າທີ່ຕິດພັນກັບອຸດສາຫະກຳປຸງແຕ່ງ ແລະ ການບໍລິການ. ນັບຕັ້ງແຕ່ກອງປະຊຸມຮ່ວມລະຫວ່າງຄະນະກຳມະການສູນກາງພັກ ແລະ ສະພາລັດຖະມົນຕີ ໃນວັນທີ 15-22 ມິຖຸນາ 1988 ເປັນຕົ້ນມາ, ທຸກໆມະຕິກອງປະຊຸມໃຫຍ່ຂອງພັກໃນແຕ່ລະສະໄໝ ແມ່ນໄດ້ກຳນົດເອົາການກະສິກຳເປັນແນວຮົບນໍ້າເບີໜຶ່ງ ແລະ ສຳຄັນທີ່ສຸດ ໃນການຜະລິດເປັນສິນຄ້າ ແລະ ການລຶບລ້າງຄວາມທຸກຍາກຂອງປະຊາຊົນບັນດາເຜົ່າຢູ່ໃນ ສປປ.ລາວ.

ເຖິງຢ່າງໃດກໍ່ຕາມ, ມາຮອດປັດຈຸບັນນີ້ (2021) ການຜະລິດກະສິກຳຢູ່ໃນເຂດຊົນນະບົດຂອງ ສປປ.ລາວ ສ່ວນໃຫຍ່ແມ່ນຍັງເຮັດຕາມແບບປະເພນີດັ້ງເດີມ, ເປັນການຜະລິດແບບຄອບຄົວຂະໜາດນ້ອຍທີ່ມີເນື້ອທີ່ທຳການຜະລິດ ຈຳກັດ ແລະ ຢູ່ກະແຈກກະຈາຍ, ຜົນຜະລິດບໍ່ໄດ້ຫຼາຍ, ຍັງບໍ່ທັນມີໝໍ່ແໜງໃນການຫັນເປັນອຸດສາຫະກຳທີ່ທັນສະໄໝ ແລະ ຜະລິດຕະພາບຂອງງານຍັງຕໍ່າ ພ້ອມທັງຍັງບໍ່ທັນສາມາດນຳໃຊ້ທ່າແຮງ ຫຼື ຊັບພະຍາກອນທີ່ມີຢູ່ເຂົ້າໃນການຜະລິດໄດ້ຢ່າງເຕັມສ່ວນ. ບັນຫາທີ່ເປັນອຸປະສັກຕົ້ນຕໍໃນການຜະລິດກະສິກຳຂອງຊາວກະສິກອນແມ່ນມີຢູ່ຫຼາຍດ້ານເປັນຕົ້ນແມ່ນມີຄວາມຈຳກັດໃນການເຂົ້າເຖິງແຫຼ່ງທຶນ, ຍັງບໍ່ທັນສາມາດນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຜະລິດ ລວມທັງການບໍລິຫານຈັດການກໍ່ຍັງບໍ່ທັນເປັນລະບົບ. ຊາວກະສິກອນບາງກຸ່ມຍັງເຮັດການຜະລິດຕາມຄຳແນະນຳ, ຕາມການຊັກຊວນ ແລະ ໂຄສະນາຈາກກຸ່ມຄົນທີ່ຫວັງກຳໄລ ໂດຍບໍ່ມີການສຶກສາເຖິງທ່າແຮງ ແລະ ກາລະໂອ ກາດຢ່າງລະອຽດທີ່ຖ້ວນ, ການຄໍ້າປະກັນລາຄາ ແລະ ການຮັບຊື້ຜົນຜະລິດຈາກປະຊາຊົນ ແມ່ນນັກລົງທຶນ ຫຼື ຜູ້ຄ້າເປັນຜູ້ກຳນົດເອງຫຼາຍກວ່າ. ນອກຈາກນັ້ນ, ຊາວກະສິກອນຍັງຂາດຂໍ້ມູນທີ່ດີ ແລະ ມີຄວາມຫຍຸ້ງຍາກໃນການເຂົ້າເຖິງຕະຫຼາດ ເພື່ອຂາຍຜະລິດຕະພັນກະສິກຳຂອງຕົນເອງ, ສ້າງລາຍໄດ້ ແລະ ແກ້ໄຂຄວາມທຸກຍາກໃຫ້ແກ່ຄອບຄົວ.

ເຖິງແມ່ນວ່າໃນໄລຍະຜ່ານມາຈະມີການສຶກສາຄົ້ນຄວ້າກ່ຽວກັບການຜະລິດກະສິກຳເປັນສິນຄ້າ ແລະ ການແກ້ໄຂຄວາມທຸກຍາກເປັນຈຳນວນຫຼາຍໆບົດກໍ່ຕາມ (Thanthathep.k., et al, 2008, Southavilay. B., et al, 2012; Grace, et al., 2014), ແຕ່ການສຶກສາກ່ຽວກັບການສະໜອງສິນຄ້າກະສິກຳ ເພື່ອການຫຼຸດຜ່ອນຄວາມທຸກຍາກຢູ່ໃນແຂວງອຸດົມໄຊ ແລະ ຫຼວງນໍ້າທາແມ່ນຍັງມີຈຳກັດຢູ່. ເພາະສະນັ້ນ, ເພື່ອເປັນການສະໜອງຂໍ້ມູນໃຫ້ແກ່ການປັບປຸງບັນດານະໂຍບາຍສົ່ງເສີມການຜະລິດກະສິກຳເປັນສິນຄ້າ ແລະ ແກ້ໄຂຄວາມທຸກຍາກຢູ່ໃນ 2 ແຂວງດັ່ງກ່າວ ຈຶ່ງມີຄວາມຈຳເປັນຕ້ອງໄດ້ສຶກສາຄົ້ນຄວ້າໃຫ້ເລິກເຊິ່ງ, ກວ້າງຂວາງ ແລະ ມີຄວາມຫຼາກຫຼາຍຂຶ້ນຕື່ມ. ເຫດຜົນທີ່ເລືອກເອົາສອງແຂວງດັ່ງກ່າວນີ້ເປັນເຂດຕົວຢ່າງຂອງສຶກສາ ແມ່ນຍ້ອນວ່າມັນເປັນເຂດທີ່ມີທ່າແຮງທາງດ້ານການຄ້າຊາຍແດນ, ມີເຂດເສດຖະກິດພິເສດບໍ່ເຕັນ-ບໍ່ຫານ ໂດຍຈະມີເຂດຈຸດສຸມໂລຈິສຕິກຢູ່ນາເຕີຍ, ມີເສັ້ນທາງລົດໄຟລາວ-ຈີນແລ່ນຜ່ານ, ມີທ່າແຮງທາງດ້ານການຜະລິດກະສິກຳ,ມີເງື່ອນໄຂທີ່ເໝາະສົມຫຼາຍດ້ານໃນການຂົນສົ່ງສິນຄ້າຂ້າມແດນ ແລະ ການຄ້າຊາຍແດນຊຶ່ງອັນສຳຄັນທີ່ສຸດແມ່ນຢູ່ໃກ້ກັບຕະຫຼາດໃຫຍ່ຂອງພາກພື້ນທີ່ຕ້ອງການຜະລິດຕະພັນກະສິກຳເປັນຈຳນວນຫຼາຍ ໂດຍສະເພາະແມ່ນຕະຫຼາດ ສປ.ຈີນ.

ການສົ່ງເສີມການຜະລິດສິນຄ້າກະສິກຳ ແມ່ນເລື່ອງສຳຄັນທີ່ໄດ້ປຶກສາຫາລືກັນມາແຕ່ດົນນານແລ້ວ; ເຖິງຢ່າງໃດກໍ່ຕາມ, ການສຶກສາ ກ່ຽວກັບການສະໜອງສິນຄ້າກະສິກຳໃຫ້ແກ່ຕະຫຼາດຂອງແຂວງຫຼວງນໍ້າທາ ແລະ ອຸດົມໄຊ ໂດຍສະເພາະຢູ່ໃນເຂດທີ່ໃກ້ກັບຊາຍແດນ ລາວ-ຈີນ ແມ່ນຍັງມີໜ້ອຍ ຢູ່ໃນ ສປປ.ລາວ ເຮົາ. ຜົນຂອງການສຶກສາດັ່ງກ່າວນີ້ຈະເປັນຂໍ້ມູນທາງດ້ານວິທະຍາສາດ ປະກອບໃຫ້ແກ່ການສະເໜີແນະໃນການແກ້ໄຂບັນຫາຄວາມທຸກຍາກ ແລະ ເປັນຂໍ້ມູນໃຫ້ແກ່ການສ້າງຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ກໍ່ຄືແຜນພັດທະນາເສດຖະ ກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ຄັ້ງຕໍ່ໆໄປ. ນອກຈາກນັ້ນ, ບົດສຶກສາຄົ້ນຄວ້ານີ້ ຍັງຈະໄດ້ປະກອບສ່ວນໃຫ້ແກ່ບັນດາວຽກງານການຄົ້ນຄວ້າຕ່າງໆ ເພື່ອສະໜັບສະໜູນໃຫ້ແກ່ການພັດທະນາການກໍາສິກໍາຢູ່ໃນ ສປປ.ລາວ ຕໍ່ໄປ.

### 1.2. ຈຸດປະສົງຂອງການສຶກສາ

ການສຶກສາຄົ້ນຄວ້າໃນຫົວຂໍ້ນີ້ ແມ່ນໄດ້ສຸມໃສ່ຕອບບັນດາຄຳຖາມທີ່ສຳຄັນ ຄື: ❶ ກົນໄກ, ທ່າແຮງ ແລະ ສິ່ງອຳນວຍຄວາມສະດວກທີ່ມີຢູ່ໃນເຂດການສຶກສາ ໄດ້ເປັນປັດໄຈສະໜັບສະໜູນໃຫ້ແກ່ການຜະລິດ ແລະ ການຂາຍສິນຄ້າກະສິກຳຂອງຊາວກະສິກອນຄືແນວໃດແດ່ ເປັນຕົ້ນແມ່ນເຂດການຄ້າຊາຍແດນ, ເຂດເສດຖະກິດພິເສດບໍ່ເຕັນ-ບໍ່ຫານ, ທາງລົດໄຟລາວຈີນ ແລະກົນໄກອື່ນໆ; ❷ ການຜະລິດສິນຄ້າຂອງຊາວກະສິກອນຢູ່ໃນເຂດການສຶກສາ ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດຫຼືບໍ່? ❸ ມີອຸປະສັກອັນໃດແດ່ທີ່ເປັນຂໍ້ຫຍຸ້ງຍາກໃຫ້ແກ່ການຜະລິດ ແລະ ການຂາຍຜະລິດຕະພັນກະສິກຳຂອງຊາວກະສິກອນ? ແລະ ❹ ມີປັດໄຈອັນໃດແດ່ທີ່ສົ່ງຜົນກະທົບຕໍ່ກັບການແກ້ໄຂ ແລະ ຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນໃນຂົງເຂດດັ່ງກ່າວ?

ຈາກທັດສະນະທີ່ໄດ້ກ່າວມາຂ້າງເທິງນັ້ນ, ຈຸດປະສົງສະເພາະຂອງບົດສຶກສາ-ຄົ້ນຄວ້ານີ້ ແມ່ນເພື່ອວິເຄາະ-ວິໄຈເຖິງການຜະລິດສິນຄ້າກະສິກຳຂອງປະຊາຊົນຢູ່ເມືອງສິງ/ແຂວງຫຼວງນ້ຳທາ ແລະ ເມືອງຮຸນ/ແຂວງອຸດົມໄຊ ເປັນຫຼັກ, ສ່ວນເມືອງອື່ນໆໃນທົ່ວແຂວງ ກໍ່ເປັນອັນຊ່ວຍສະໜັບສະໜູນເພີ່ມເຕີມ ດັ່ງລາຍລະອຽດລຸ່ມນີ້:

(1) ເພື່ອສຶກສາເຖິງກົນໄກ, ທ່າແຮງ ແລະ ສິ່ງອຳນວຍຄວາມສະດວກທີ່ມີຢູ່ໃນເຂດການສຶກສາ ອັນທີ່ເປັນເງື່ອນໄຂສະໜັບສະໜູນການຜະລິດ ແລະ ຊື້ຂາຍ-ຈຳໜ່າຍສິນຄ້າກະສິກຳຂອງຊາວກະສິກອນ;

(2) ຄວາມອາດສາມາດໃນການຜະລິດສິນຄ້າຂອງຊາວກະສິກອນ ແລະ ການສະໜອງສິນຄ້າຕາມຄວາມຕ້ອງການຂອງຕະຫຼາດຢູ່ໃນເຂດ, ຂົງເຂດ ແລະ ພາກພື້ນ;

(3) ບັນດາຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການຜະລິດ ແລະ ຄ້າຂາຍສິນຄ້າກະສິກຳຂອງຊາວກະສິກອນ; ແລະ

(4) ປັດໄຈທີ່ມີຜົນກະທົບຕໍ່ກັບຄວາມທຸກຍາກ ຫຼື ລາຍໄດ້ຂອງຊາວກະສິກອນ;

### 1.3. ວິທີວິທະຍາສຳລັບການສຶກສາ-ຄົ້ນຄວ້າ

ວິທີວິທະຍາໃນການສຶກສາ-ຄົ້ນຄວ້າ ແມ່ນໄດ້ນຳໃຊ້ທັງວິທີການສຶກສາທາງດ້ານຄຸນນະພາບ ແລະ ປະລິມານ. ສຳລັບການສຶກສາທາງດ້ານຄຸນນະພາບ ແມ່ນໄດ້ສ້າງແບບສອບຖາມເພື່ອລົງໄປເກັບກຳຂໍ້ມູນດ້ວຍການສຳພາດເປັນກຸ່ມສົນທະນາ ໂດຍການນຳໃຊ້ຄຳຖາມທີ່ສຳຄັນຕໍ່ກັບບັນດາຂະແໜງການທັງຢູ່ຂັ້ນສູນກາງ ແລະ ສອງແຂວງ (ອຸດົມໄຊ ແລະ ຫຼວງນ້ຳທາ). ບັນດາຂະແໜງການທີ່ໄດ້ລົງສາພາດຢູ່ທັງສອງແຂວງມີແມ່ນຄື: ພະແນກແຜນການ ແລະ ການລົງທຶນ, ພະແນກອຸດສາຫະກຳ ແລະ ການຄ້າ, ພະແນກກະສິກຳ ແລະ ປ່າໄມ້, ສະພາການຄ້າ ແລະ ອຸດສາຫະກຳແຂວງ, ລວມທັງສຳພາດບັນດາບໍລິສັດທີ່ຜະລິດກະສິກຳຈຳນວນໜຶ່ງທັງຢູ່ແຂວງອຸດົມໄຊ ແລະ ຫຼວງນ້ຳທາ. ສາລັບການວິໄຈທີ່ໃຊ້ວິທີທາງດ້ານປະລິມານ ແມ່ນໄດ້ນຳໃຊ້ວິທີວິໄຈທາງດ້ານສະຖິຕິ ໂດຍສະເພາະແມ່ນການນຳໃຊ້ຮູບແບບ Logit Model ເພື່ອປະເມີນເບິ່ງບັນດາປັດໄຈ ທີ່ມີຜົນກະທົບຕໍ່ກັບຄວາມທຸກຍາກ. ຂໍ້ມູນທີ່ນຳໃຊ້ໃນການວິໄຈ Logit Model ແມ່ນໄດ້ນຳເອົາຂໍ້ມູນມາຈາກການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ ຄັ້ງທີ VI (Lao Expenditure and Consumtpion Survey VI 2018-2019) ໂດຍສະເພາະແມ່ນຂອງແຂວງຫຼວງນ້ຳທາ ແລະ ອຸດົມໄຊ ຊຶ່ງລາຍລະອຽດແມ່ນໄດ້ອະທິບາຍໄວ້ຢູ່ໃນພາກທີ 3 ຂອງບົດລາຍງານສະບັບນີ້.

ບົດສຶກສາຄົ້ນຄວ້ານີ້ແມ່ນປະກອບດ້ວຍ 5 ພາກຄື: ພາກທີ I ແມ່ນພາກສະເໜີ, ຈຸດປະສົງຂອງການສຶກສາ ແລະ ໂຄງສ້າງຂອງບົດ; ພາກທີ II ແມ່ນການທົບທວນກ່ຽວກັບທິດສະດີ ແລະ ຜົນຂອງການສຶກສາຄົ້ນຄວ້າຜ່ານມາ ກ່ຽວກັບການຜະລິດກະສິກຳເປັນສິນຄ້າ, ການຄ້າຂາຍສິນຄ້າກະສິກຳຜ່ານແດນ, ການແກ້ໄຂຄວາມທຸກຍາກ; ພາກທີ III ແມ່ນການອະທິບາຍໃນການນຳໃຊ້ຮູບແບບຈຳລອງ Logit Model ເພື່ອສຶກສາເຖິງບັນປັດໄຈທີ່ສົ່ງຜົນກະທົບຕໍ່ກັບຄວາມທຸກຍາກ; ພາກທີ IV ແມ່ນການອະທິບາຍກ່ຽວກັບຜົນຂອງການສຶກສາຄົ້ນຄວ້າ ແລະ ພາກທີ V ແມ່ນການສະຫຼຸບ ແລະ ຂໍ້ສະເໜີທາງດ້ານນະໂຍບາຍທີ່ສຳຄັນຕ່າງໆ.

## 2. ທົບທວນເອກະສານອັນນະກຳ ກ່ຽວກັບການຜະລິດກະສິກຳເປັນສິນຄ້າເພື່ອແກ້ໄຂຄວາມທຸກຍາກ

### 2.1. ຄວາມສຳນຶກ

*ການຜະລິດກະສິກຳ:* ແມ່ນການປູກພືດ-ຜັກ-ໝາກໄມ້ ແລະ ການລ້ຽງສັດ-ປະມົງ ເພື່ອຜະລິດເປັນຜະລິດຕະພັນສຳລັບຄວາມຍືນຍົງຄົງຢູ່ຂອງມວນມະນຸດຊາດ. ສູ່ມື້ນີ້, ຜູ້ຄົນໄດ້ນຳໃຊ້ຜະລິດຕະພັນກະສິກຳເປັນຈຳນວນຫຼວງຫຼາຍເພື່ອການຢູ່ລອດ ໂດຍນັບແຕ່ອາຫານການກິນ, ເຄື່ອງນຸ່ງຫົ່ມ ໄປຈົນເຖິງເຈ້ຍ-ສໍ ທີ່ພວກເຮົາໃຊ້ຂຽນໜັງສືຢູ່ທຸກວັນນີ້. ດອກໄມ້ສົດທີ່ພວກເຮົາໃຊ້ປະດັບປະດາສະຖານທີ່ຕ່າງໆນັ້ນ ກໍ່ແມ່ນຜົນຜະລິດທີ່ອອກມາຈາກການກະສິກຳ ແລະ ສ່ວນປະກອບຂອງລົດຍົນທີ່ພວກເຮົາຂີ່ຢູ່ສູ່ມື້ນີ້ ສ່ວນໜຶ່ງກໍ່ມາຈາກຜະລິດຕະພັນເອັນທານອນທີ່ໄດ້ມາຈາກການກະສິກຳ. ການປູກພືດກະສິກຳໃຫ້ເປັນຜະລິດຕະພັນແມ່ນຖືກແບ່ງອອກເປັນສີ່ກຸ່ມ ຄື: ອາຫານ, ເຊື້ອໄຟ, ເສັ້ນໃຍ ແລະ ວັດຖຸດິບ. ປະມານ 11% ຂອງເນື້ອທີ່ດິນຂອງໂລກ ແມ່ນອຸທິດໃຫ້ແກ່ການຜະລິດພືດ-ຜັກ-ໝາກໄມ້ ແລະ ປະມານເກືອບ 26% ແມ່ນຖືກນຳໃຊ້ເຂົ້າໃນການລ້ຽງສັດ ແລະ ປະມົງ ຊຶ່ງລວມແລ້ວກໍ່ເປັນ 37% ຂອງພື້ນທີ່ໂລກທີ່ຖືກນຳໃຊ້ເພື່ອການກະສິກຳ *(JENNIFER CHAIT* Updated June 30, 2020 *ແລະ ຄວາມສຳນຶກຂອງຜູ້ຂຽນເອງ).*

*ການຜະລິດກະສິກຳເປັນສິນຄ້າ:* ແມ່ນການຜະລິດພືດ-ຜັກ-ໝາກໄມ້ ແລະ ການລ້ຽງສັດ-ປະມົງ ທີ່ມີຂະໜາດໃຫຍ່ເພື່ອການຄ້າຂາຍ ໂດຍມີຈຸດປະສົງແຈກຢາຍກະຈາຍໄປຍັງຜູ້ຄ້າສົ່ງ ຫຼື ຮ້ານຄ້າຍ່ອຍຢ່າງກວ້າງຂວາງ ຢູ່ໃນຕະຫຼາດພາຍໃນປະເທດ ແລະ ຕະຫຼາດໂລກ. ການຜະລິດແບບນີ້ແມ່ນເປັນລັກສະນະຂອງການສ້າງທຶນ ແລະ ການດຳເນີນການຕາມຂະບວນການທາງເຕັກໂນໂລຊີທີ່ມີລາຄາແພງ. ສະນັ້ນ, ເຈົ້າທີ່ດິນໃນຟາຣ໌ມແມ່ນມັກຈະເປັນບໍລິສັດການກະເສດຂະໜາດໃຫຍ່ (ໂດຍສະເພາະຢູ່ໃນປະເທດກຳລັງພັດທະນາ). ການເຮັດຟາຣ໌ມເປັນສິນຄ້າຂະໜາດໃຫຍ່, ໃນແງ່ຂອງຂະບວນການບາງຢ່າງອາດຈະມີແນວຄິດທີ່ບໍ່ແຕກຕ່າງຫຍັງໄປຈາກວິສາຫະກິດອຸດສາຫະກຳພໍປານໃດ; ຕົວຢ່າງ: United Fruit Company (ປັດຈຸບັນແມ່ນ Chiquita Brands International); ການເຮັດຟາຣ໌ມເປັນສິນຄ້າ ແມ່ນມັກຈະພົບເຫັນຢູ່ໃນປະເທດອຸດສາຫະກຳຂັ້ນສູງ. ພືດທີ່ຖືກເກັບກ່ຽວໄດ້ອາດຈະຖືກປຸງແຕ່ງຢູ່ໃນສະຖານທີ່ນັ້ນໆ (ຫຼື ສົ່ງໄປຫາໂຮງງານປຸງແຕ່ງທີ່ເປັນຂອງເຈົ້າຂອງຟາຣ໌ມຢູ່ບ່ອນອື່ນ) ແລະ ຕໍ່ຈາກນັ້ນກໍ່ຈະຖືກຂາຍໃຫ້ແກ່ຜູ້ຄ້າຍົກໃນຮູບຂອງຜະລິດຕະພັນສຳເລັດຮູບ ຫຼື ອາດຈະຖືກຂາຍໃຫ້ໄປປຸງແຕ່ງຕໍ່ຢູ່ໃນທີ່ອື່ນໃນຮູບແບບຜະລິດຕະພັນເຄິ່ງສຳເລັດຮູບ.

ການຜະລິດກະສິກຳເປັນສິນຄ້າ ແມ່ນມີຄວາມແຕກຕ່າງຫຼາຍຈາກການຜະລິດກະສິກຳເພື່ອລ້ຽງກຸ້ມຕົນເອງ ເນື່ອງຈາກຈຸດປະສົງຫຼັກຂອງການຜະລິດກະສິກຳເປັນສິນຄ້າ ແມ່ນເພື່ອໃຫ້ໄດ້ຮັບຜົນກຳໄລທີ່ຫຼາຍຂຶ້ນ ຜ່ານການປະຢັດຕໍ່ຂະ ໜາດ, ຄວາມຊ່ຽວຊານພິເສດສະເພາະ, ການນຳໃຊ້ເຕັກນິກການກະສິກຳທີ່ເຂັ້ມທຶນ, ເຕັກໂນໂລຊີທີ່ປະຢັດແຮງງານ ແລະ ການເພີ່ມຜົນຜະລິດສູງສຸດຕໍ່ເຮັກຕາ ຜ່ານການສັງເຄາະ ແລະ ຊັບພະຍາກອນທຳມະຊາດ (ຝຸ່ນ, ແນວພັນລູກປະສົມ , ການຊົນລະປະທານ ແລະ ອື່ນໆ). ໃນຂະນະທີ່ການກະສິກຳເພື່ອກຸ້ມຕົນເອງ ເປັນຮູບແບບເສດຖະກິດທີ່ປະຊາກອນສ່ວນໃຫຍ່ເຮັດວຽກໃນການກະສິກຳເພື່ອລ້ຽງປາກທ້ອງຕົນເອງ ແລະ ຄອບຄົວ ໂດຍມີຄວາມຕ້ອງການໃນການຄ້າຂາຍໜ້ອຍ; ການຜະລິດກະສິກຳເປັນສິນຄ້າ ແມ່ນການກະສິກຳປະເພດໜຶ່ງທີ່ເໝາະສົມກັບຮູບແບບເສດຖະກິດອຸດສາຫະກຳ ຫຼື ຫຼັງອຸດສາຫະກຳ ທີ່ປະຊາກອນສ່ວນໃຫຍ່ບໍ່ໄດ້ເຮັດວຽກຢູ່ໃນການກະສິກຳ ໂດຍອາໄສໃຫ້ຜູ້ອື່ນຜະລິດລ້ຽງ (ມີຜູ້ເຮັດວຽກຢູ່ໃນການກະສິກຳໜ້ອຍ) ດ້ວຍການຊື້ອາຫານ ແລະ ເສັ້ນໃຍມາຮັບໃຊ້ຕົນເອງ ແລະ ຄອບຄົວດ້ວຍເງິນຕາ ໃນຖານະທີ່ເປັນຜູ້ບໍລິໂພກ *(www.definitions.net/definition/Commercial agriculture).*

### 2.2. ທິດທາງ, ນະໂຍບາຍ ແລະ ຍຸດທະສາດໃນການສົ່ງເສີມການຜະລິດກະສິກຳເປັນສິນຄ້າເພື່ອແກ້ໄຂຄວາມທຸກຍາກຂອງພັກ ແລະ ລັດຖະບານ ແຫ່ງ ສປປ.ລາວ.

ຂະແໜງກະສິກຳ ແລະ ປ່າໄມ້ ແມ່ນຂະແໜງການໜຶ່ງທີ່ມີບົດບາດສຳຄັນໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ໂດຍສະເພາະແມ່ນການຄ້ຳປະກັນສະບຽງອາຫານ

, ການຜະລິດກະສິກຳເປັນສິນຄ້າທີ່ຕິດພັນກັບອຸດສາຫະກຳປຸງແຕ່ງ ແລະ ການບໍລິການ. ອັນພົ້ນເດັ່ນທີ່ສຸດ ກໍ່ຄືພາຍຫຼັງທີ່ພັກເຮົາໄດ້ກຳນົດແນວທາງປ່ຽນແປງໃໝ່ເປັນຕົ້ນມາ, ກົນໄກເສດຖະກິດໃໝ່ຢູ່ໃນຂະແໜງການກະສິກຳໄດ້ຖືກວາງອອກຢ່າງຈະແຈ້ງ ຢູ່ໃນກອງປະຊຸມຮ່ວມລະຫວ່າງຄະນະກຳມະການສູນກາງພັກ ແລະ ສະພາລັດຖະມົນຕີ (ວັນທີ 15-22 ມິຖຸນາ 1988) ໂດຍ ທ່ານ ປະທານ ໄກສອນ ພົມວິຫານ ໄດ້ມີທິດຊີ້ນຳວ່າ "**ການຜະລິດກະສິກຳຈະຕ້ອງເປັນແນວຮີບນ້ຳເບີໜຶ່ງ ແລະ ສຳຄັນທີ່ສຸດ**" ແລະ ໄດ້ກຳນົດທິດທາງໃນການຫັນປ່ຽນຈາກເສດຖະກິດທຳຊາດໄປສູ່ການຜະລິດເປັນສິນຄ້າ ຫຼື ເສດຖະກິດຕາມທິດຕະຫຼາດ. ຕັ້ງແຕ່ນັ້ນມາ, ມະຕິກອງປະຊຸມໃຫຍ່ຂອງພັກໃນແຕ່ລະສະໄໝກໍ່ໄດ້ກຳນົດແນວທາງຢ່າງຈະແຈ້ງ ໃນການພັດທະນາກິດຈະກຳການກະສິກຳ ແລະ ປ່າໄມ້ ໂດຍພັກເຮົາໄດ້ກຳນົດວ່າ "**ການກະສິກຳເປັນແນວຮີບນ້ຳເບີໜຶ່ງ ແລະ ສຳຄັນທີ່ສຸດ, ການກະສິກຳ ແລະ ປ່າໄມ້ຍັງເປັນຂະແໜງການພື້ນຖານຢູ່ໃນໂຄງປະກອບເສດຖະກິດແຫ່ງຊາດ, ການຫັນປ່ຽນຈາກເສດຖະກິດທຳມະຊາດໄປສູ່ການຜະລິດເປັນສິນຄ້າ ແມ່ນເປັນບຸລິມະສິດສຳຄັນໃນໄລຍະຂ້າມຜ່ານໄປສູ່ສັງຄົມນິຍົມຂອງປະເທດເຮົາ**".

ກອງປະຊຸມໃຫຍ່ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວໄດ້ຕີລາຄາວ່າ: ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ໄດ້ບັນລຸຜົນສຳເລັດຫຼາຍຢ່າງ. ອັນສຳຄັນແມ່ນພວກເຮົາສາມາດບຸກທະລຸໄດ້ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ທີ່ເຮັດໃຫ້ລາຍໄດ້ຕົວຈິງຂອງປະຊາຊົນເພີ່ມຂຶ້ນ, ໂຄງປະກອບເສດຖະກິດໄດ້ຫັນປ່ຽນຢ່າງຕັ້ງໜ້າໄປຕາມທິດພັດທະນາການຜະລິດກະສິກຳເປັນສິນຄ້າ ຕິດພັນກັບອຸດສາຫະກຳປຸງແຕ່ງ ແລະ ການບໍລິການ; ແຕ່ພັກເຮົາກໍ່ຮັບຮູ້ວ່າການນຳພາ-ຊີ້ນຳຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ກໍ່ຍັງມີຂໍ້ຄົງຄ້າງຈຳນວນບໍ່ໜ້ອຍທີ່ຈະຕ້ອງໄດ້ຕັ້ງໜ້າປັບປຸງແກ້ໄຂ ເປັນຕົ້ນແມ່ນການນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີເຂົ້າໃສ່ການຜະລິດກະສິກຳຍັງຈຳກັດ ເຮັດໃຫ້ສະມັດຕະພາບຂອງການຜະລິດຕ່ຳ, ການສ້າງພື້ນຖານໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝໃນຂົງເຂດກະສິກຳຍັງຊັກຊ້າ. ສະນັ້ນ; ກອງປະຊຸມໃຫຍ່ຄັ້ງທີ X ຂອງພັກຈຶ່ງໄດ້ກຳນົດທິດທາງໜ້າທີ່ລວມ ແລະ ຄາດໝາຍໃຫຍ່ໃນໄລຍະກາງ ແລະ ໄລຍະຍາວທີ່ຕິດພັນກັບຂະແໜງການຜະລິດກະສິກຳເປັນສິນຄ້າໄວ້ຈຳນວນໜຶ່ງດັ່ງລຸ່ມນີ້:

- *ສຳລັບໄລຍະປີ 2020:* ໃຫ້ສາມາດແກ້ໄຂຄວາມທຸກຍາກຂອງປະຊາຊົນໄດ້, ປະເທດຊາດຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ, ໂຄງປະກອບເສດຖະກິດແຫ່ງຊາດມີການຫັນປ່ຽນໄປຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝທີ່ມີຄວາມຍືນຍົງ, ມີປັດໃຈ ແລະ ເງື່ອນໄຂອັນເປັນພື້ນຖານທີ່ໜັກແໜ້ນສົມຄວນ ໃຫ້ແກ່ການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ໂດຍເຮັດໃຫ້ຂະແໜງກະສິກຳ-ປ່າໄມ້ ເພີ່ມຂຶ້ນສະເລ່ຍ 3,2% ຕໍ່ປີ, ກວມເອົາປະມານ 19% ຂອງລວມຍອດຜະລິດຕະພັນແຫ່ງຊາດ (GDP).
- *ສຳລັບປີ 2025:* ໃຫ້ໂຄງປະກອບເສດຖະກິດມີການຫັນປ່ຽນໄປຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ປະຊາຊົນສ່ວນໃຫຍ່ມີຖານະພໍກິນພໍໃຊ້ ແລະ ບັນລຸຄາດໝາຍສະຫະສະວັດດ້ານການພັດທະນາຢ່າງສົມບູນ.
- *ສຳລັບປີ 2030:* ໃຫ້ເສດຖະກິດຕະຫຼາດຕາມທິດສັງຄົມນິຍົມໄດ້ຮັບການພັດທະນາຢ່າງເປັນລະບົບ, ບັນດາພາກສ່ວນເສດຖະກິດທີ່ເປັນກຳລັງແຮງໃຫ້ແກ່ເສດຖະກິດແຫ່ງຊາດມີຄວາມໜັກແໜ້ນ, ມີລະບົບໂຄງລ່າງພື້ນຖານເສດຖະກິດທີ່ເຂັ້ມແຂງ, ສ້າງໂຄງປະກອບເສດຖະກິດທີ່ຖືເອົາການກະສິກຳຕິດແໜ້ນກັບອຸດສາຫະກຳປຸງແຕ່ງ ແລະ ການບໍລິການ *(ເອກະສານຊີ້ແຈງອະທິບາຍເພື່ອເຊື່ອມຊຶມກຳແໜ້ນເນື້ອໃນຂອງມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ, ຄະນະໂຄສະນາອົບຮົມສູນກາງພັກ, 2016).*

ມະຕິກອງປະຊຸມຄົບຄະນະ ຄັ້ງທີ 7 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ X ໄດ້ລະບຸໄວ້ວ່າ: ສຸມໃສ່ພັດທະນາຂົງເຂດກະສິກຳໃຫ້ທັນສະໄໝ, ໂດຍນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີທີ່ເປັນມິດກັບສິ່ງແວດລ້ອມເຂົ້າໃນການຜະລິດກະສິກຳ ແລະ ໃຫ້ສອດຄ່ອງກັບສະພາບຂອງດິນຟ້າອາກາດ ແນໃສ່ສ້າງແຫຼ່ງວັດຖຸດິບໃຫ້ພຽງພໍ ແລະ ມີຄຸນນະພາບສູງ ເພື່ອຮັບໃຊ້ໃຫ້ແກ່ການປຸງແຕ່ງ; ພ້ອມກັນນີ້, ກໍ່ເນັ້ນໃສ່ການຜະລິດຜະລິດຕະພັນສົດ, ສະອາດ ແລະ ປອດ

ສານພິດ ເພື່ອສົ່ງອອກໄປຕ່າງປະເທດ, ສົ່ງອອກກັບທີ່ ແລະ ບໍລິໂພກຢູ່ພາຍໃນປະເທດ; ຫັນປ່ຽນການຜະລິດພືດກະສິກຳຊະນິດດຽວ ໄປສູ່ການຜະລິດກະສິກຳແບບປະສົມປະສານຫຼາຍຊະນິດ, ກໍ່ສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງກະສິກຳຢູ່ຊົນນະບົດໃຫ້ມີຄວາມເຂັ້ມແຂງ *(ມະຕິກອງປະຊຸມຄົບຄະນະ ຄັ້ງທີ 7 ຂອງຄະນະບໍລິຫານງານສູນກາງພັກສະໄໝທີ X).*

ແຜນຍຸດທະສາດການພັດທະນາດ້ານກະສິກຳ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030 ໄດ້ລະບຸວ່າ: ຕ້ອງຮັບປະກັນການຄໍ້າປະກັນດ້ານສະບຽງອາຫານຜ່ານການຜະລິດກະສິກຳທີ່ມີຄວາມຍືນຍົງ, ສະອາດ ແລະ ປອດໄພ; ຜະລິດສິນຄ້າກະສິກຳທີ່ສາມາດປະກອບສ່ວນເຂົ້າໃນການສ້າງເສດຖະກິດແຫ່ງຊາດ ຕາມທິດຫັນເປັນອຸດສາຫະກຳ ແລະທັນສະໄໝ. ເພື່ອໃຫ້ບັນລຸໄດ້ເປົ້າໝາຍດັ່ງກ່າວ, ລັດຖະບານໄດ້ມີຄວາມໝາຍໝັ້ນປັ້ນມືທີ່ຈະສ້າງຄວາມເຂັ້ມແຂງດ້ວຍຕົນເອງ ໂດຍສຸມໃສ່ຍົກສູງການຜະລິດກະສິກຳເປັນສະບຽງອາຫານ ແລະ ເປັນສິນຄ້າໃຫ້ຫຼາຍຂຶ້ນ.

ແຜນພັດທະນາຂະແໜງການກະສິກຳ ແລະ ປ່າໄມ້ ໄລຍະ 5 ປີ (2016-2020) ແລະ ແຜນງານກະສິກຳຊີວະວິທະຍາແຫ່ງຊາດ ໄລຍະ II (2015-2025) ໄດ້ສະແດງໃຫ້ເຫັນເຖິງຄວາມພະຍາຍາມຂອງລັດຖະບານໃນການພັດທະນາເສດຖະກິດ ແລະ ຊັບພະຍາມະນຸດຂອງຂະແໜງການກະສິກຳ. ແຜນພັດທະນາຂະແໜງກະສິກຳ ແລະ ປ່າໄມ້ ໄລຍະ 5 ປີ (2016-2020) ແມ່ນແນໃສ່ຊຸກຍູ້ການປະກອບສ່ວນຂອງຂະແໜງກະສິກຳທີ່ມີທ່າອ່ຽງຫຼຸດລົງໃນໂຄງປະກອບເສດຖະກິດແຫ່ງຊາດໃຫ້ກັບມາດີຂຶ້ນກວ່າເກົ່າ ໂດຍໄດ້ວາງຈຸດປະສົງ ແລະ ເປົ້າໝາຍ ເພື່ອຫັນປ່ຽນການກະສິກຳຢູ່ໃນ ສປປ. ລາວ ໃຫ້ກ້າວໄປສູ່ການກະສິກຳແບບທັນສະໄໝ, ມີຄວາມຫຼາກຫຼາຍ ແລະ ເພີ່ມສະມັດຕະພາບໃນການຜະລິດ *(ການປະເມີນການຈັດຕັ້ງປະຕິບັດແຜນດຳເນີນງານອິສະຕັນບູນສຳລັບປະເທດດ້ອຍພັດທະນາ, 2011-2020 ຢູ່ໃນ ສປປ ລາວ).*

ຍຸດທະສາດການຫັນເປັນອຸດສາຫະກຳ ແລະ ທັນສະໄໝຂອງ ສປປ.ລາວ ໄດ້ກຳນົດໄວ້ວ່າ: ການຫັນເປັນອຸດສາຫະກຳ ແລະ ທັນສະໄໝໃນຂະແໜງການກະສິກຳ-ປ່າໄມ້ ແມ່ນຄວນເລັ່ງໃສ່: (1) ຫັນການຜະລິດກະສິກຳຂະໜາດນ້ອຍ, ເລື່ອນລອຍ, ກະແຈກກະຈາຍ ໄປເປັນຊົນລະກະເສດຂະໜາດໃຫຍ່ທີ່ນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ, ມີປະສິດທິພາບ ແລະ ປະສິດທິຜົນສູງ; (2) ຫັນໄປສູ່ການຜະລິດກະສິກຳປອດສານພິດທີ່ມີມູນຄ່າເພີ່ມສູງ, ແລະມີຄວາມເປັນມິດຕໍ່ກັບສັງຄົມ ແລະ ສິ່ງແວດລ້ອມ; (3) ສົ່ງເສີມກຸ່ມການຜະລິດ ແລະ ສະຫະກອນ ຫຼື ເສດຖະກິດຮ່ວມມືຂອງປະຊາຊົນໃນຂະແໜງກະສິກຳ ທັງອຳນວຍຄວາມສະດວກໃຫ້ເຂົາເຈົ້າສາມາດເຂົ້າເຖິງແຫຼ່ງທຶນ, ເຕັກນິກ-ເຕັກໂນໂລຊີທີ່ທັນສະໄໝ ແລະ ຂໍ້ມູນຂ່າວສານກ່ຽວການຕະຫຼາດທີ່ຫຼາກຫຼາຍໄດ້ງ່າຍຂຶ້ນ; (4) ສົ່ງເສີມການລົງທຶນເຂົ້າໃນການນຳໃຊ້ລະບົບສາງ ແລະ ລະບົບຂົນສົ່ງເຢັນທີ່ທັນສະໄໝເຂົ້າໃນການຈັດເກັບ ແລະ ເຄື່ອນຍ້າຍສິນຄ້າກະສິກຳ ຕິດພັນກັບລະບົບການຈຳໜ່າຍ-ເກັບຊື້ຂະໜາດໃຫຍ່ທີ່ທັນສະໄໝ; (5) ເພີ່ມທະວີການຈັດຕັ້ງປະຕິບັດພາລະບົດບາດຂອງໜ່ວຍງານສົ່ງເສີມກະສິກຳໃຫ້ຫຼາຍຂຶ້ນ ແລະ ທົ່ວເຖິງ; ແລະ (6) ພັດທະນາຂະແໜງກະສິກຳຕິດພັນຢ່າງສະໜິດແໜ້ນກັບການພັດທະນາອຸດສາຫະກຳປຸງແຕ່ງກະສິກຳ ແລະ ການບໍລິການ.

ສຳລັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝໃນຂະແໜງການປຸງແຕ່ງຜະລິດຕະພັນກະສິກຳ ແລະອາຫານ ຄວນເລັ່ງໃສ່: (1) ຍົກສູງປະສິດທິພາບ ແລະ ປະສິດທິຜົນຂອງການຜະລິດ, ເພີ່ມຂີດຄວາມສາມາດໃນການປຸງແຕ່ງ ແລະ ການແຂ່ງຂັນໃຫ້ສູງຂຶ້ນ; (2) ພັດທະນາການປຸງແຕ່ງຜະລິດຕະພັນກະສິກຳ ແລະ ອາຫານແບບໃໝ່ທີ່ຕິດພັນກັບຕ່ອງໂສ້ການຜະລິດທີ່ມີມູນຄ່າເພີ່ມສູງ *(ບົດຄົ້ນຄວ້າໃນຫົວຂໍ້: "ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຢູ່ ສປປ ລາວ", ສະພາວິທະຍາສາດສັງຄົມແຫ່ງຊາດ, ໂຄງການຄົ້ນຄວ້າວິທະຍາສາດສັງຄົມລະດັບຊາດ, ວັນທີ 21 ພຶດສະພາ 2019, ສະບັບປັບປຸງ).*

## 2.3. ຮູບແບບຂອງການຜະລິດກະສິກຳເປັນສິນຄ້າຢູ່ໃນ ສປປ.ລາວ

ການຜະລິດກະສິກຳເປັນສິນຄ້າຢູ່ໃນ ສປປ.ລາວ ໂດຍງ່າຍໆແລ້ວແມ່ນໄດ້ແບ່ງອອກເປັນ 4 ຮູບແບບ/ລັກສະນະຕົ້ນຕໍ ຄື: 1) ການຜະລິດຕາມຮູບແບບທີ່ຄົວເຮືອນ/ຄອບຄົວຜະລິດເອງ; 2) ການຜະລິດຕາມຮູບແບບກຸ່ມການຜະລິດ

ແລະ ສະຫະກອນການຜະລິດ; 3) ການຜະລິດຕາມຮູບແບບກະສິກຳຕາມສັນຍາ; ແລະ 4) ການຜະລິດຕາມຮູບແບບຟາຣ໌ມຂະໜາດໃຫຍ່ ໂດຍບໍລິສັດ/ວິສາຫະກິດ.

**(1) ການຜະລິດກະສິກຳເປັນສິນຄ້າຕາມຮູບແບບທີ່ຄົວເຮືອນ/ຄອບຄົວຜະລິດເອງ:** ເປັນການລົງທຶນດ້ານປັດໄຈການຜະລິດຂອງຄົວເຮືອນ/ຄອບຄົວເອງທັງໝົດ ແລະ ໃນເມື່ອໄດ້ຜົນຜະລິດແລ້ວ ຊາວກະສິກອນກໍ່ຈະນຳເອົາຜົນຜະລິດຂອງຕົນໄປຈຳໜ່າຍຢູ່ໃນຕະຫຼາດທົ່ວໄປ ຊຶ່ງເປັນຮູບແບບຂອງການຜະລິດກະສິກຳເປັນສິນຄ້າທີ່ເປັນປະເພນີດັ້ງເດີມທີ່ສຸດ ໂດຍທີ່ຊາວກະສິກອນຈະຕ້ອງໄດ້ຮັບຜິດຊອບຄວາມສ່ຽງດ້ານການຜະລິດ ແລະ ການຕະຫຼາດດ້ວຍຕົນເອງທັງໝົດ ເນື່ອງຈາກຂໍ້ມູນກ່ຽວກັບຕົ້ນທຶນຂອງການຜະລິດ, ເຕັກນິກຂອງການຜະລິດ, ຄຸນນະພາບຂອງຜົນຜະລິດ, ປະລິມານຂອງຜົນຜະລິດ ແລະ ຄວາມຕ້ອງການຂອງຕະຫຼາດບໍ່ມີຄວາມຊັດເຈນ.

**ຮູບສະແດງທີ 1: ການຜະລິດກະສິກຳເປັນສິນຄ້າຕາມຮູບແບບທີ່ຄົວເຮືອນ/ຄອບຄົວຜະລິດເອງ**




*ແຫຼ່ງຂໍ້ມູນ: ອາດໂດຍທີມງານສຶກສາ ໂດຍອີງຕາມຄວາມສຳພຶກຂ້າງເທິງ*

**(2) ການຜະລິດກະສິກຳເປັນສິນຄ້າຕາມຮູບແບບກຸ່ມການຜະລິດ ແລະ ສະຫະກອນການຜະລິດ:**

- *ການຜະລິດກະສິກຳເປັນສິນຄ້າຕາມຮູບແບບກຸ່ມການຜະລິດ:* ກຸ່ມການຜະລິດກະສິກຳເປັນສິນຄ້າ ແມ່ນການຈັດຕັ້ງລວມໝູ່ຂອງປະຊາຊົນຜູ້ທີ່ມີອາຊີບຜະລິດກະສິກຳປະເພດດຽວກັນເປັນສິນຄ້າ (ຍັງບໍ່ເປັນນິຕິບຸກຄົນ) ເຊັ່ນ: ກຸ່ມປູກພືດ-ຜັກປອດສານພິດ, ກຸ່ມລ້ຽງສັດ, ກຸ່ມລ້ຽງປາ, ກຸ່ມປຸງແຕ່ງລິດຕະພັນກະສິກຳ ແລະ ກຸ່ມບໍລິການເລື່ອງການຜະລິດກະສິກຳ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະມັກໃຈເຂົ້າຮ່ວມ ເພື່ອຈຸດປະສົງຮ່ວມມືຊ່ວຍເຫຼືອຊຶ່ງກັນແລະກັນ ແລະ ຮັບຜິດຊອບດ້ວຍຕົນເອງລະຫວ່າງສະມາຊິກ ແລະ ຄອບຄົວສະມາຊິກດ້ວຍກັນ ທາງດ້ານການຜະລິດ ແລະ/ຫຼື ການບໍລິການ. ພ້ອມກັນກ້າວໄປສູ່ກົນໄກກາລະໂອກາດທີ່ເທົ່າທຽມກັນໃນການເຂົ້າເຖິງນະໂຍບາຍສົ່ງເສີມ, ທຶນ, ເຕັກນິກ, ຂໍ້ມູນຂ່າວສານ, ການຕະຫຼາດ ແລະ ການອອມຊັບ (ເພື່ອເປັນກອງທຶນ); ເພີ່ມອຳນາດຕໍ່ລອງໃນການຊື້-ຂາຍຜົນຜະລິດກັບຜູ້ຄ້າດ້ວຍການຮ່ວມກັນຊື້ປັດໄຈການຜະລິດ ແລະ ຮ່ວມກັນຂາຍຜົນຜະລິດ ເພື່ອປັບປຸງລາຍຮັບຂອງສະມາຊິກໃຫ້ດີຂຶ້ນເທື່ອລະກ້າວ ແລະ ກ້າວໄປສູ່ການຫຼຸດພົ້ນອອກຈາກຄວາມທຸກຍາກ *(ສັງລວມຫຍໍ້ມາຈາກ ກົມສົ່ງເສີມສະຫະກອນ ແລະ ພັດທະນາຊົນນະບົດ, ກະຊວງກະສິກຳ ແລະ ປ່າໄມ້)*.

**ຮູບສະແດງທີ 2:** **ການຜະລິດກະສິກຳເປັນສິນຄ້າຕາມຮູບແບບກຸ່ມການຜະລິດ**




*ແຫຼ່ງຂໍ້ມູນ: ວາດໂດຍທີມງານສຶກສາ ໂດຍອີງຕາມຄວາມສຳນຶກຂ້າງເທິງ*

**ຮູບສະແດງທີ 3:** **ການຜະລິດກະສິກຳເປັນສິນຄ້າຕາມຮູບແບບສະຫະກອນການຜະລິດ**




*ແຫຼ່ງຂໍ້ມູນ: ວາດໂດຍທີມງານສຶກສາ ໂດຍປັບປຸງມາຈາກກົມສົ່ງເສີມສະຫະກອນ ແລະ ພັດທະນາຊົນນະບົດ, ກະຊວງກະສິກຳ ແລະ*

*ການຜະລິດກະສິກຳເປັນສິນຄ້າຕາມຮູບແບບສະຫະກອນການຜະລິດ:* ແມ່ນການຈັດຕັ້ງທຸລະກິດລວມໝູ່ທີ່ມີຖານະເປັນນິຕິບຸກຄົນຂອງຜູ້ປະກອບອາຊີບດຽວກັນດ້ານກະສິກຳ ທີ່ສ້າງຕັ້ງຂຶ້ນດ້ວຍສະ ມັກໃຈເຂົ້າຮ່ວມ ເພື່ອຮ່ວມມື ຊ່ວຍເຫຼືອຊຶ່ງກັນແລະກັນ ທາງດ້ານທຶນຮອນ, ປະສົບການ, ເຕັກນິກ ແລະ ການຕະຫຼາດ ໃນການດຳເນີນທຸລະກິດການລ້ຽງສັດ, ການປູກຝັງ, ການປະມົງ, ການປຸງແຕ່ງ/ຫຸ້ມຫໍ່ ແລະ ການບໍລິການດ້ານກະສິກຳ. ພ້ອມກັນກ້າວໄປສູ່ກົນໄກການ ລະໂອກາດທີ່ເທົ່າທຽມກັນໃນການເຂົ້າເຖິງນະໂຍບາຍສົ່ງເສີມ, ທຶນ, ເຕັກນິກ, ຂໍ້ມູນຂ່າວສານ, ການຕະຫຼາດ ແລະ ອຳນາດຕໍ່ລອງໃນການຊື້-ຂາຍຜົນຜະລິດກັບຜູ້ຄ້າ ເພື່ອປັບປຸງລາຍຮັບຂອງສະມາຊິກໃຫ້ດີຂຶ້ນ ແລະ ກ້າວໄປສູ່ການຫຼຸດພົ້ນອອກຈາກຄວາມທຸກຍາກ. ສະຫະກອນມີຄວາມເປັນເອກະລາດໃນການດຳເນີນທຸລະກິດ, ຄຸ້ມຄອງໂດຍສະມາຊິກບົນ

ຫຼັກການລວມສູນປະຊາທິປະໄຕທີ່ເທົ່າທຽມກັນ (ໜຶ່ງສະມາຊິກໜຶ່ງສຽງ) ແລະ ມີການຄຸ້ມຄອງດ້ວຍລະບຽບການຂອງລັດ ແລະ ຂອງສະຫະກອນເອງ, ສະມາຊິກທຸກຄົນເປັນເຈົ້າຂອງສະຫະກອນຮ່ວມກັນ ແລະ ໄດ້ຮັບຜົນປະໂຫຍດຮ່ວມກັນຢ່າງຍຸຕິທຳ *(ສັງລວມຫຍໍ້ມາຈາກ ກົມສົ່ງເສີມສະຫະກອນ ແລະ ພັດທະນາຊົນນະບົດ, ກະຊວງກະສິກຳ ແລະ ປ່າໄມ້)*.

**(3) ການຜະລິດກະສິກຳເປັນສິນຄ້າຕາມຮູບແບບການຜະລິດກະສິກຳຕາມສັນຍາ**

ແມ່ນຮູບແບບການສົ່ງເສີມການຜະລິດກະສິກຳອີກແບບໜຶ່ງ ທີ່ເກີດຂຶ້ນດ້ວຍຄວາມຍິນຍອມ, ການລວມຕົວ ແລະ ການຮ່ວມມືກັນ ລະຫວ່າງຜູ້ປະກອບການ (ຜູ້ຊື້ຜົນຜະລິດ) ແລະ ຊາວກະສິກອນ (ຜູ້ຂາຍຜົນຜະລິດ) ຊຶ່ງມີການເຮັດສັນຍານຳກັນທັງທີ່ເປັນປາກເປົ່າ ແລະ ເປັນລາຍລັກອັກສອນກໍ່ໄດ້ ໂດຍມີການລະບຸເງື່ອນໄຂກ່ຽວກັບການຜະລິດ, ປະລິມານ, ຄຸນນະພາບ, ການຈັດການ ແລະ ການຕະຫຼາດໄວ້ລ່ວງໜ້າ ກ່ອນທີ່ຈະລົງມືທຳການຜະລິດ ເພື່ອຮັບປະກັນໃຫ້ເກີດຄວາມສອດຄ່ອງກັນລະຫວ່າງການຜະລິດ ແລະ ການຕະຫຼາດ ອັນເປັນປະໂຫຍດຕໍ່ກັບທັງສອງຝ່າຍ.

ອົງການອາຫານ ແລະ ການກະເສດໂລກ (FAO, 2012) ໄດ້ໃຫ້ນິຍາມກ່ຽວກັບການຜະລິດກະສິກຳຕາມສັນຍາໄວ້ວ່າ: ມັນແມ່ນຫົວໜ່ວຍທຸລະກິດກະສິກຳທີ່ມີການຮ່ວມລົງທຶນ ລະຫວ່າງຜູ້ປະກອບການກັບຊາວກະສິກອນ ພາຍໃຕ້ເງື່ອນໄຂດ້ານການຜະລິດ ແລະ ການຕະຫຼາດທີ່ຕົກລົງເຫັນດີຮ່ວມມກັນ. ນອກຈາກນີ້, Glover (1987), Kirsten ແລະ Sartorius (2002) ແລະ Wang et al. (2014) ໄດ້ຍົກໃຫ້ເຫັນວ່າ: ການຜະລິດກະສິກຳຕາມສັນຍາ ແມ່ນມີການຕົກລົງນຳກັນກ່ຽວກັບດ້ານຈຳນວນ, ຄຸນນະພາບ, ກຳນົດເວລາໃນການສະໜອງຜະລິດຕະພັນ, ການນຳໃຊ້ປັດໄຈການຜະລິດ, ລາຄາ ແລະ ຮູບແບບຂອງການຊຳລະສະສາງ ຊຶ່ງສ່ວນໃຫຍ່ແມ່ນຈະອີງໃສ່ລາຄາຕະຫຼາດໃນອະນາຄົດເປັນຫຼັກ.

ຈຸດປະສົງຂອງການເຮັດການຜະລິດກະສິກຳຕາມສັນຍາ ແມ່ນເພື່ອຊ່ວຍກະຈາຍຄວາມສ່ຽງດ້ານການຜະລິດ ແລະ ການຕະຫຼາດ, ທັງເປັນເຄື່ອງມືໃນການຫຼຸດຜ່ອນຕົ້ນທຶນການດຳເນີນທຸລະກິດກະສິກຳ ຄື: 1) ຜູ້ຜະລິດຍັງເປັນເຈົ້າກຳມະສິດໃນກິດຈະການຂອງຕົນເອງຢູ່, ຫຼຸດຜ່ອນຕົ້ນທຶນໃນການຊອກສະແຫວງຫາຂໍ້ມູນຂ່າວສານ ແລະ ຕົ້ນທຶນຂອງການໄດ້ລາຄາຂາຍຜະລິດຕະພັນກະສິກຳທີ່ສົມດູນຄືນມາ, ໄດ້ຮັບປັດໄຈການຜະລິດ ແລະ ເຕັກນິກຈາກຜູ້ຊື້ກ່ອນລ່ວງໜ້າ ແລະ ມີຕະຫຼາດຮອງຮັບທີ່ແນ່ນອນ; 2) ຜູ້ຊື້ບໍ່ຈຳເປັນທີ່ຈະສ່ຽງລົງທຶນດ້ວຍຕົນເອງທັງໝົດ ແຕ່ກໍ່ໄດ້ຮັບຜົນຜະລິດທີ່ມີຄຸນນະພາບ ແລະ ປະລິມານຕາມທີ່ຕົນເອງຕ້ອງການ.

ໂດຍທົ່ວໄປແລ້ວ, ການຜະລິດກະສິກຳຕາມສັນຍາ ແມ່ນຖືກຈັດຕັ້ງປະຕິບັດເປັນສອງຮູບແບບ ຄື: ສັນຍາການຕະຫຼາດ (MC) ຫຼື ເອີ້ນວ່າ ສັນຍາຊື້-ຂາຍຜົນຜະລິດກໍ່ໄດ້ ແລະ ສັນຍາການຜະລິດ (PC) ຊຶ່ງຊາວລາວເຮົາມັກຈະເອີ້ນຕິດປາກກັນວ່າສັນຍາສອງສິ້ນນັ້ນເອງ. ພາຍໃຕ້ສັນຍາການຕະຫຼາດ ຫຼື ສັນຍາຊື້-ຂາຍ ແມ່ນຊາວກະສິກອນຈະດຳເນີນການຜະລິດກະສິກຳຢ່າງເປັນເອກະລາດດ້ວຍຕົນເອງ ຊຶ່ງຢູ່ໃນສັນຍາລະຫວ່າງຊາວກະສິກອນ ແລະ ຜູ້ຊື້ ສ່ວນໃຫຍ່ແມ່ນຈະລະບຸແຕ່ດ້ານຈຳນວນ, ຄຸນນະພາບ ແລະ ກຳນົດເວລາໃນການສະໜອງຜະລິດຕະພັນ ພາຍໃຕ້ເງື່ອນໄຂລາຄາທີ່ແນ່ນອນໃດ ໜຶ່ງຊຶ່ງຕົກລົງກັນໄວ້ກ່ອນລ່ວງໜ້າ *(Key, 2005, ແລະ Mac-Donald et al., 2004)*. ສ່ວນສັນຍາການຜະລິດ ແມ່ນຜູ້ຊື້/ຄູ່ສັນຍາ ຈະເຂົ້າມາມີສ່ວນຮ່ວມຢູ່ໃນຂອດການຜະລິດ ດ້ວຍການສະໜອງເຕັກນິກຄວາມຮູ້ດ້ານການກະສິກຳ ແລະ ປັດໄຈການຜະລິດທີ່ຈຳເປັນໃຫ້ກ່ອນລ່ວງໜ້າໃນຮູບແບບສິນເຊື່ອ ເພື່ອໃຫ້ໄດ້ຮັບຜົນຜະລິດທີ່ມີປະລິມານ, ຄຸນນະພາບ ແລະ ສົ່ງມອບໄດ້ຕາມເວລາທີ່ຕ້ອງການ ແລ້ວຈຶ່ງຫັກເອົາຄ່າປັດໄຈການຜະລິດຄືນໃນເມື່ອມີການຊື້-ຂາຍສິນຄ້າແລ້ວ. ການຜະລິດກະສິກຳຕາມສັນຍາໃນຮູບແບບຫຼັງນີ້ ແມ່ນເປັນທີ່ນິຍົມແຜ່ຫຼາຍຢູ່ໃນໝູ່ປະເທດດ້ອຍພັດທະນາ ແລະ ປະເທດກຳລັງພັດທະນາ (ລວມທັງ ສປປ.ລາວ) ທີ່ມີຊາວກະສິກອນຜູ້ທຸກຍາກເປັນຈຳນວນຫຼາຍ ເນື່ອງຈາກມັນໄດ້ຊ່ວຍແກ້ໄຂຈຸດບົກຜ່ອງຂອງຕະຫຼາດ ເປັນຕົ້ນແມ່ນເລື່ອງທີ່ພົວພັນກັບແຮງງານ, ປັດໄຈການຜະລິດ, ເຕັກໂນໂລຊີ, ສິນເຊື່ອ, ການປະກັນໄພ, ຕະຫຼາດຜະລິດຕະພັນ ແລະ ລວມທັງຕະຫຼາດຂໍ້ມູນຂ່າວສານ.

**ຮູບສະແດງທີ 4**: **ການຜະລິດກະສິກຳເປັນສິນຄ້າຕາມຮູບແບບການຜະລິດກະສິກຳຕາມສັນຍາ**




*ແຫຼ່ງຂໍ້ມູນ: ວາດໂດຍທີມງານສຶກສາ ໂດຍອີງຕາມຄວາມສຳນຶກຂ້າງເທິງ*

**(4) ການຜະລິດກະສິກຳເປັນສິນຄ້າຕາມຮູບແບບຟາຣ໌ມຂະໜາດໃຫຍ່ ໂດຍບໍລິສັດ/ວິສາຫະກິດ:**

ວິທີການຜະລິດກະສິກຳເປັນສິນຄ້າໃນຮູບແບບນີ້ ແມ່ນເປັນວິທີທີ່ດີທີ່ສຸດສຳລັບຜູ້ລົງທຶນທີ່ຈະໄດ້ຮັບຜະລິດຕະພັນກະສິກຳທີ່ມີຄຸນນະພາບຕາມທີ່ຕົນເອງຕ້ອງການ ແລະ ສາມາດຕອບສະໜອງໃຫ້ແກ່ຂອດການປຸງແຕ່ງ ຫຼື ຕະຫຼາດຂາຍຍົກໄດ້ຕາມປະລິມານ ແລະ ກຳນົດເວລາທີ່ຕົນເອງມີຄວາມຕ້ອງການ. ການຜະລິດກະສິກຳເປັນສິນຄ້າໃນຮູບແບບນີ້ ແມ່ນຜູ້ລົງທຶນເປັນຜູ້ດຳເນີນທຸລະກິດກະສິກຳດ້ວຍຕົນເອງໃນທຸກຂັ້ນຕອນ ໂດຍມີທີ່ດິນເປັນກຳມະສິດຂອງຕົນເອງ ຫຼື ໄດ້ມາຈາກການເຊົ່າ/ສຳປະທານ ແລ້ວກໍ່ຈ້າງແຮງງານກະສິກຳມາດຳເນີນການຜະລິດຢູ່ໃນຟາຣ໌ມນັ້ນໆ. ເພື່ອຮັບປະກັນດ້ານຄຸນນະພາບຂອງຜົນຜະລິດກະສິກຳຂອງຕົນ ຜູ້ລົງທຶນຈະນຳໃຊ້ປັດໄຈການຜະລິດ ເຊັ່ນ: ເຕັກນິກ, ເມັດພັນ, ຝຸ່ນວິທະຍາສາດ/ຊີວະພາບ ແລະ ອື່ນໆ... ຈາກເຄືອຂ່າຍທີ່ຕົນເອງເຊື່ອຖືໄດ້, ແຕ່ການຜະລິດກະສິກຳເປັນສິນຄ້າດ້ວຍວິທີນີ້ ແມ່ນມີຄວາມຕ້ອງການເງິນລົງທຶນເປັນຈຳນວນຫຼາຍ ແລະ ຜູ້ລົງທຶນຈະເປັນຜູ້ຮັບຜິດຊອບຕໍ່ຄວາມສ່ຽງດ້ານທຸລະກິດທີ່ອາດຈະເກີດຂຶ້ນພຽງແຕ່ຜູ້ດຽວ. ເຖິງຢ່າງໃດກໍ່ຕາມ, ຖ້າຫາກຜູ້ລົງທຶນມີເນື້ອທີ່ດິນ, ເງິນລົງທຶນ ຫຼື ຜະລິດຕະພັນທີ່ບໍ່ພຽງພໍຕາມຄວາມຕ້ອງການ ເຂົາເຈົ້າກໍ່ມັກຈະດຳເນີນການຜະລິດກະສິກຳຕາມສັນຍາຮ່ວມກັບຊາວກະສິກອນສ່ວນບຸກຄົນຄວບຄູ່ກັນໄປດ້ວຍ.

**ຮູບສະແດງທີ 5**: **ການຜະລິດກະສິກຳຕາມຮູບແບບຟາຣ໌ມຂະໜາດໃຫຍ່ ໂດຍບໍລິສັດ/ວິສາຫະກິດ**




*ແຫຼ່ງຂໍ້ມູນ: ອາດໂດຍທີມງານສຶກສາ ໂດຍອີງຕາມຄວາມສຳນຶກຂ້າງເທິງ*

## 2.4. ຂະບວນການຫັນປ່ຽນຈາກການຜະລິດກະສິກຳແບບກຸ້ມກິນ ໄປສູ່ການຜະລິດເປັນສິນຄ້າ ເພື່ອແກ້ໄຂຄວາມທຸກຍາກຢູ່ໃນ ສປປ.ລາວ

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ ແລະ ສ້າງຕັ້ງເປັນ ສາທາລະນາລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 02 ທັນວາ 1975, ການຜະລິດສະບຽງອາຫານຂອງ ສປປ.ລາວ ແມ່ນຍັງບໍ່ທັນສາມາດກຸ້ມຕົນເອງໄດ້, ກຳລັງການຜະລິດຕົ້ນຕໍແມ່ນຊາວກະສິກອນຂະໜາດນ້ອຍ ແລະ ກະແຈກກະຈາຍ; ຂາດແຄນນັກວິຊາການດ້ານການກະສິກຳ, ຄວາມໝັ້ນຄົງດ້ານສະບຽງອາຫານກໍ່ຍັງບໍ່ທັນສາມາດຮັບປະກັນໄດ້ (ໂດຍສະເພາະແມ່ນເຂົ້າກິນ) ຊຶ່ງສ່ວນໃຫຍ່ແມ່ນນຳເຂົ້າສະບຽງອາຫານຈາກຕ່າງປະເທດ, ສິນຄ້າສົ່ງອອກກໍ່ມີພຽງແຕ່ຜະລິດຕະພັນເຄື່ອງປ່າຂອງດົງພຽງຢ່າງດຽວ.

ໃນຊ່ວງໄລຍະ 10 ປີ ເບື້ອງຕົ້ນ (1976-1987) ຫຼັງຈາກການປົດປ່ອຍ, ສະຫະກອນກະເສດໄດ້ຮັບການຈັດຕັ້ງຂຶ້ນພາຍໃຕ້ການນຳພາ-ຊີ້ນຳ ແລະ ໃຫ້ການອຸດໜູນຖົມຊຸມໂດຍລັດຖະບານ. ໃນໄລຍະເບື້ອງຕົ້ນຂອງແຜນງານການຫັນເປັນສະຫະກອນກະເສດນັ້ນ ເບິ່ງຄືວ່າຂະແໜງກະສິກຳໄດ້ມີການພັດທະນາດີຢູ່, ແຕ່ຂະແໜງອຸດສາຫະກຳ ແລະ ການບໍລິການພັດບໍ່ມີການເຕີບໂຕ ເພື່ອສະໜັບສະໜູນການເຕີບໂຕຂອງຂະແໜງກະສິກຳເລີຍ ຈຶ່ງເຮັດໃຫ້ຂະແໜງກະສິກຳມີການຢຸດສະງັກດ້ວຍການມີປັດໄຈການຜະລິດ ແລະ ຜົນຜະລິດທີ່ຕໍ່າ.

ເພື່ອແກ້ໄຂບັນຫາດັ່ງກ່າວ, ກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກປະຊາຊົນປະຕິວັດລາວ (1986) ຈຶ່ງໄດ້ນຳສະ ເໜີກົນໄກເສດຖະກິດໃໝ່ພ້ອມດ້ວຍຈິນຕະນາການໃໝ່ ໂດຍການນຳໃຊ້ລະບົບຕະຫຼາດເປີດ ຊຶ່ງເນື້ອແທ້ຂອງມັນກໍ່ແມ່ນຄວາມພະຍາຍາມປ່ຽນແປງຈາກລະບົບການວາງແຜນເສດຖະກິດແບບລວມສູນຕາມຄຳສັ່ງ ໄປສູ່ການວາງແຜນເສດຖະກິດຕາມທິດຕະຫຼາດ. ເຖິງຢ່າງໃດກໍ່ຕາມ, ໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ II (1986-1990) ລັດຖະບານກໍ່ຍັງໄດ້ໃຫ້ການສົ່ງເສີມການພັດທະນາກະສິກຳຢ່າງແຂງແຮງ ດ້ວຍການຫັນເປັນທັນສະໄໝ ແລະ ຫັນເປັນການຄ້າ, ແລະ ສົ່ງເສີມໃຫ້ສະຫະກອນກະເສດດຳເນີນທຸລະກິດດ້ວຍຕົວຂອງມັນເອງ ແລະ ຂະຫຍາຍທຸລະກິດ

ຂອງມັນໄປສູ່ຂະແໜງການອື່ນທີ່ບໍ່ແມ່ນພຽງແຕ່ການກະສິກຳນຳ ເຊັ່ນ: ອຸດສາຫະກຳ, ການຄ້າ, ສິນເຊື່ອ, ຫັດຖະກຳ ແລະ ອື່ນໆ ໂດຍປັດສະຈາກການອຸດໜູນຖົມຊຸມໃດໆຈາກລັດຖະບານຕໍ່ໄປອີກ, ແຕ່ວ່າບັນດາກິດຈະກຳຂອງສະຫະກອນກະເສດເຫຼົ່ານັ້ນກໍ່ຍັງບໍ່ໄປບໍ່ມາຢູ່ ເນື່ອງຈາກເຂົາເຈົ້າຂາດປະສົບປະການດ້ານການບໍລິຫານຈັດການຕະຫຼາດ ແລະ ມີຄວາມກົດດັນທາງດ້ານການເງິນ ຊຶ່ງໃນທີ່ສຸດຫຼາຍຫົວໜ່ວຍສະຫະກອນກະເສດກໍ່ລົ້ມລະລາຍລົງໃນທ້າຍຊຸມປີ 1980 ແລະ ຕົ້ນຊຸມປີ 1990.

ເພາະສະນັ້ນ, ລັດຖະບານຈິ່ງໄດ້ຈັດກອງປະຊຸມກ່ຽວກັບ “**ການປ່ຽນແປງເສດຖະກິດທຳມະຊາດໄປສູ່ເສດຖະກິດຕະຫຼາດ**” ຂຶ້ນ ໃນປີ 1988 ແລະ ລັດຖະບານໄດ້ນຳສະເໜີແຜນງານໃໝ່ທີ່ເອີ້ນວ່າ “ **ການສ້າງເສດຖະກິດຊິນນະບົດໃໝ່**” ຊຶ່ງແຜນງານນີ້ແມ່ນໝາຍເຖິງການສ້າງເສດຖະກິດຊົນນະບົດພາຍໃຕ້ກະແສເສດຖະກິດຕະຫຼາດ *(ໄກສອນ ພົມວິຫານ; ວິທະຍານິພົນເລືອກເຟັ້ນ, 1987).* ເພື່ອການສ້າງເສດຖະກິດຊົນນະບົດໃໝ່, ລັດຖະບານໄດ້ປະກາດໃຫ້ມີການປະຕິຮູບສະຫະກອນກະເສດພາຍໃຕ້ສອງຫຼັກການ ຄື: 1) ຈັດສັນທີ່ດິນຄືນໃໝ່ໃຫ້ແກ່ສະມາຊິກທຸກຄົນຢ່າງເທົ່າທຽມກັນ ຕາມສັດສ່ວນຂອງຈຳນວນສະມາຊິກໃນຄົວເຮືອນ ແລ້ວໃຫ້ສະມາຊິກທຸກຄົນສຸມໃສ່ການຜະລິດກະສິກຳຢູ່ໃນເຂດທີ່ດິນສະເພາະຂອງຕົນ[1], ແລະ 2) ຂະຫຍາຍທຸລະກິດຂອງສະຫະກອນກະເສດພາຍໃຕ້ເສດຖະກິດຕະຫຼາດ ໂດຍໃຫ້ສະຫະກອນກະເສດສາມາດຂະຫາຍກິດຈະກຳທຸລະກິດສະເພາະຂອງເຂົາເຈົ້າໃນຂະແໜງການອື່ນ, ເປັນຕົ້ນແມ່ນການຕະຫຼາດ ແລະ ການຄ້າ.

ແຕ່ກໍ່ໜ້າເສຍດາຍ, ເນື່ອງຈາກເຂົາເຈົ້າບໍ່ມີປະສົບປະການ, ມີການບໍລິຫານຈັດການທີ່ຜິດພາດ, ຂາດແຄນບຸກຄະລາກອນທີ່ມີທັກສະສີມື; ແລະ ບົບການຄົມມະນາຄົມຂົນສົ່ງ, ໂທລະຄົມມະນາຄົມ-ສື່ສານ, ສາງເກັບມ້ຽນສິນຄ້າ ແລະ ອື່ນໆມີຄວາມຫຍຸ້ງຍາກ ຈິ່ງເຮັດໃຫ້ບັນດາສະຫະກອນເຫຼົ່ານັ້ນບໍ່ສາມາດດຳລົງຄົງຢູ່ຍາວນານໄດ້ ແລະ ໃນທີ່ສຸດບໍ່ດົນກໍ່ລົ້ມລະລາຍລົງ.

ຈາກທ້າຍຊຸມປີ 1990, ຂະແໜງການກະສິກຳໂດຍທົ່ວໄປ ແມ່ນຄ່ອຍໆໄດ້ຮັບການພັດທະນາຜ່ານການເຊື່ອມໂຍງເຂົ້າກັບຕະຫຼາດໃນຂົງເຂດ ໂດຍສະເພາະແມ່ນຕະຫຼາດຂອງປະເທດເພື່ອນບ້ານໃກ້ຄຽງ ເຊັ່ນ: ໄທ, ຫວຽດນາມ ແລະ ຈີນ. ໃນປັດຈຸບັນ, ລະບົບການຜະລິດກະສິກຳຢູ່ໃນເຂດທົ່ງພຽງ ແລະ ເຂດລຽບຕາມແຄມແມ່ນ້ຳຂອງ ແມ່ນໄດ້ມີການພັດທະນາດີຂຶ້ນຖ້າທຽບກັບຂົງເຂດອື່ນ ເນື່ອງຈາກມັນມີກາລະໂອກາດໃນການເຂົ້າເຖິງຕະຫຼາດຫຼາຍກວ່າ ແລະ ຕະຫຼາດກໍ່ຂ້ອນຂ້າງເຮັດໜ້າທີ່ໄດ້ດີກວ່າ, ແລະ ສະພາບການເຊື່ອມໂຍງກັບພື້ນຖານໂຄງລ່າງ (ການຂົນສົ່ງ ແລະ ການສື່ສານ) ກໍ່ສະດວກສະບາຍກວ່າເຂດພູດອຍ. ອີກອັນໜຶ່ງ, ສະພາບພູມີສາດທາງການກະສິກຳສຳລັບການເຮັດເປັນລະບົບຟາຣ໌ມຢູ່ໃນເຂດທົ່ງພຽງກໍ່ເໝາະສົມຫຼາຍກວ່າເຂດພູດອຍ ໂດຍສະເພາະແມ່ນເລື່ອງຄວາມອຸດົມສົມບູນຂອງດິນ, ຄວາມງ່າຍດາຍໃນການເຮັດເປັນຟາຣ໌ມ, ແລະ ການເຂົ້າເຖິງເຕັກໂນໂລຊີ ກໍ່ຄືປັດໄຈການຜະລິດທີ່ເໝາະສົມອື່ນໆ.

ຈາກທ່າແຮງດ້ານຊັບພະຍາກອນທຳມະຊາດຂອງປະເທດ ແລະ ປະເພນີການຜະລິດຂອງປະຊາຊົນທີ່ສືບທອດກັນມາໃນແຕ່ລະສະຖານທີ່ ສະແດງໃຫ້ເຫັນວ່າການຜະລິດສິນຄ້າກະສິກຳໄດ້ມີການຂະຫຍາຍຕົວຢ່າງແຂງແຮງ ຊຶ່ງເປັນຈຸດເລີ່ມຕົ້ນສຳລັບການຜະລິດແບບເປັນກຸ່ມ, ເປັນສະມາຄົມ ແລະ ເປັນສະຫະກອນ; ໂດຍສະເພາະແມ່ນນັບຕັ້ງແຕ່ໄດ້ມີການນຳໃຊ້ກົນໄກເສດຖະກິດໃໝ່ເປັນຕົ້ນມາ ຊຶ່ງຜົນໄດ້ຮັບທີ່ພົ້ນເດັ່ນນັ້ນແມ່ນການປູກພືດອຸດສາຫະກຳ ເຊັ່ນ: ຕົ້ນຢາງພາລາ ແລະ ພືດເສດຖະກິດອື່ນໆ ລວມທັງເຂົ້າ, ສາລີ, ກາເຟ, ຊາ, ກ້ວຍ, ອ້ອຍ, ເຜືອກມັນ, ຢາສູບ, ມັນຕົ້ນ, ພືດຜັກ, ໝ!ກໄມ້ ແລະ ອື່ນໆ. ຜົນໄດ້ຮັບທີ່ສຳຄັນນັ້ນ ແມ່ນໄດ້ມີການນຳໃຊ້ແນວພັນທີ່ໄດ້ຮັບການປັບປຸງໃໝ່ຢ່າງກວ້າງຂວາງ ເພື່ອເພີ່ມຜະລິດຕະພາບ ແລະ ມາດຕະຖານຂອງການຜະລິດໃຫ້ຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດ.

ແຜນຍຸດທະສາດການພັດທະນາດ້ານກະສິກຳ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030 ໄດ້ວາງຄາດໝາຍໄວ້ວ່າ: ສູ້ຊົນເຮັດໃຫ້ການຜະລິດສິນຄ້າກະສິກຳມີການຂະຫຍາຍຕົວ ເພື່ອສ້າງປັດໄຈພື້ນຖານໃຫ້ແກ່ການຫັນເປັນອຸດສາ

---

[1] ບັນດາສະຫະກອນກະເສດສາມາດສົ່ງຄືນທີ່ດິນໃຫ້ແກ່ສະມາຊິກຜູ້ທີ່ເປັນເຈົ້າຂອງເດີມ, ແຕ່ກໍ່ຮຽກຮ້ອງໃຫ້ຜູ້ທີ່ເປັນເຈົ້າຂອງທີ່ດິນເດີມນັ້ນ ແບ່ງປັນທີ່ດິນຂອງເຂົາເຈົ້າໃຫ້ແກ່ສະມາຊິກຄົນອື່ນທີ່ບໍ່ມີທີ່ດິນເປັນຂອງຕົນເອງເລີຍ.

ຫະກຳ ແລະ ທັນສະໄໝເທື່ອລະກ້າວ, ຮັບປະກັນໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ແນໃສ່ການເຂົ້າເຖິງຕະຫຼາດພາຍໃນ, ພາກພື້ນ ແລະ ສາກົນ ໂດຍຕິດພັນກັບການປັບປຸງກຸ່ມຂອງຊາວກະສິກອນ, ສະມາຄົມຜູ້ຜະລິດ ແລະ ປຸງແຕ່ງກະສິກຳ ໂດຍສຸມຄວາມພະຍາຍາມ ແລະ ເອົາໃຈໃສ່ ເພື່ອເຮັດໃຫ້ການຜະລິດກະສິກຳເປັນສິນຄ້າຕົ້ນຕໍ ດັ່ງຕໍ່ໄປນີ້:

(1) ໃນຈຳນວນເຂົ້າເປືອກທັງໝົດນັ້ນ ແມ່ນຕ້ອງຜະລິດເຂົ້າສານເພື່ອຂາຍຢູ່ໃນຕະຫຼາດພາຍໃນ ແລະ ສົ່ງອອກໃຫ້ໄດ້ປະມານ 1 ລ້ານໂຕນ ໄປຄຽງຄູ່ກັບການສົ່ງເສີມການປູກເຂົ້າທີ່ມີທ່າແຮງສູງຢູ່ໃນແຕ່ລະທ້ອງຖິ່ນ ເຊັ່ນ: ເຂົ້າກ່ຳ, ເຂົ້າໄກ່ນ້ອຍ, ເຂົ້າຫອມລາວ ແລະ ອື່ນໆ ຢູ່ໃນເຂດທີ່ມີທ່າແຮງ ແລະ ມີຄວາມເໝາະສົມ ໄປຄຽງຄູ່ກັບເຂົ້າທີ່ໄດ້ຮັບການປັບປຸງແນວພັນ ແລະ ຄຸນນະພາບໃໝ່ທີ່ຕະຫຼາດມີຄວາມຕ້ອງການສູງ ເຊັ່ນ: ເຂົ້າ TDK, ເຂົ້າທ່າສະໂນຄຳ, ເຂົ້າໂພນງາມ ແລະ ເຂົ້າຫອມອື່ນໆຢູ່ໃນເຂດທົ່ງພຽງ. ເພີ່ມອັດຕາສ່ວນຂອງການປູກເຂົ້າທີ່ບໍ່ແມ່ນເຂົ້າໜຽວໃຫ້ກວມເອົາ 30% ຂອງຜົນຜະລິດເຂົ້າທັງໝົດ. ໃນນີ້ແມ່ນລວມທັງການສຸມໃສ່ການຜະລິດເຂົ້າເພື່ອສົ່ງອອກຕາມມາດຕະຖານຂອງ GAP ໂດຍມຸ່ງເນັ້ນໃສ່ຕະຫຼາດຢູ່ໃນຂົງເຂດພາກພື້ນ ແລະ ສາກົນ. ສຳລັບເຂດທົ່ງພຽງຂະໜາດນ້ອຍ ແລະ ຂະໜາດກາງຢູ່ໃນບັນດາແຂວງພາກເໜືອ ແມ່ນສຸມໃສ່ການຜະລິດເພື່ອສົ່ງອອກໄປປະເທດຈີນ ແລະ ປະເທດເພື່ອນບ້ານໃກ້ຄຽງ ໂດຍນຳໃຊ້ແນວພັນເຂົ້າທີ່ຕອບສະໜອງກັບຄວາມຕ້ອງການຂອງຕະຫຼາດ.

(2) ໃນສ່ວນຂອງພືດອື່ນໆ ແມ່ນຜະລິດສາລີອາຫານສັດໃຫ້ໄດ້ 1,3 ລ້ານໂຕນ, ກາເຟ 120.000 ໂຕນ, ອ້ອຍ ຫຼາຍກວ່າ 2 ລ້ານໂຕນ, ມັນຕົ້ນ 1,5 ລ້ານໂຕນ, ຖົ່ວປະເພດຕ່າງໆ 50 ພັນໂຕນ. ນອກຈາກນັ້ນ, ແມ່ນຜະລິດພືດອື່ນໆທີ່ມີທ່າແຮງຕອບສະໜອງຕາມຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ສົ່ງອອກ.

(3) ໃນເລື່ອງຂອງສັດລ້ຽງ ແມ່ນຫັນປ່ຽນຈາກການລ້ຽງສັດແບບດັ້ງເດີມ ຫຼື ແບບທຳມະຊາດໄປສູ່ການລ້ຽງແບບເປັນຟາຣ໌ມ ໃຫ້ກວມເອົາ 30% ຂອງຜົນຜະລິດສັດທັງໝົດ. ສຸມໃສ່ການລ້ຽງສັດພັນປະສົມເພື່ອຈຸດປະສົງທາງການຄ້າແນໃສ່ຕອບສະໜອງຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ສືບຕໍ່ສົ່ງອອກສັດໃຫຍ່ ເຊັ່ນ: ງົວ ແລະ ຄວາຍ ໄປປະເທດເພື່ອນບ້ານໃກ້ຄຽງ ຊຶ່ງການສົ່ງອອກຊີ້ນສັດຈະຕ້ອງໃຫ້ບັນລຸໄດ້ຢ່າງໜ້ອຍ 10.000-15.000 ໂຕນ ໃນປີ 2020. ເພື່ອຮັບປະກັນໃຫ້ສັດ (ງົວ, ຄວາຍ ແລະ ແບ້) ເຕີບໃຫຍ່ ແມ່ນຕ້ອງຂະຫຍາຍຟາຣ໌ມປູກຫຍ້າໃຫ້ຫຼາຍຂຶ້ນ ແລະ ການຜະລິດອາຫານສັດກໍ່ຕ້ອງດຳເນີນເປັນລັກສະນະຂະບວນການ. ຢູ່ພາຍໃນທົ່ວຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງຮັບຜິດຊອບໃນການພັດທະນາຟາຣ໌ມພັນຫຍ້າທີ່ມີຄຸນນະພາບ ເນື່ອງຈາກພວກມັນຈະຖືກໃຊ້ເປັນສະຖານທີ່ທົດລອງ ລວມທັງເປັນການຂະຫຍາຍຊະນິດພັນຫຍ້າເພື່ອສົ່ງເສີມການປຸງແຕ່ງອາຫານສັດ.

ມາຮອດປີ 2020, ການຜະລິດກະສິກຳເປັນສິນຄ້າໄດ້ມີການຂະຫຍາຍກວ້າງອອກ ແລະ ເພີ່ມຂຶ້ນເປັນກ້າວໆ ຖ້າທຽບໃສ່ປີ 2000 ໂດຍສັງເກດເຫັນວ່າມັນໄດ້ຫັນປ່ຽນໄປສູ່ອັນໃໝ່ໃນຫຼາຍດ້ານ ໂດຍສະເພາະແມ່ນໄດ້ມີການເຈລະຈາດ້ານເຕັກນິກ ແລະ ເປີດຕະຫຼາດຫຼາຍລາຍການສິນຄ້າຮ່ວມກັບຫຼາຍປະເທດໃນອາຊຽນ, ສປ.ຈີນ ແລະ ອີຢູ. ໃນໄລຍະ 5 ປີຜ່ານມາ (2016-2020), ການສົ່ງອອກສິນຄ້າກະສິກຳໄປຕ່າງປະເທດໂດຍສະເລັ່ຍໃນແຕ່ລະປີ ແມ່ນປະມານ 694,5 ລ້ານໂດລາສະຫະລັດ ກວມເອົາປະມານ 13% ຂອງການສົ່ງອອກທັງໝົດ ແລະ ມີອັດສ່ວນເພີ່ມຂຶ້ນໃນລະດັບປະມານ 15,3% *(ກະຊວງກະສິກຳ ແລະ ປ່າໄມ້, 2021)*. ໃນນັ້ນ, ສິນຄ້າສົ່ງອອກທີ່ສາຄັນ 10 ອັນດັບຕົ້ນແມ່ນໝາກກ້ວຍ, ມັນຕົ້ນ, ຝຸ່ນ (ປຸຍ), ກາເຟ, ໝາກໄມ້, ເຂົ້າ, ສາລີ, ຜະລິດຕະພັນອຸດສາຫະກຳຈາກທັນຍາພືດ, ກະລໍ່າປີ ແລະ ຜັກບົ່ວ-ກະທຽມ (ລາຍລະອຽດຢູ່ໃນຕາຕະລາງທີ 1). ຕະຫຼາດທີ່ສຳຄັນຂອງສິນຄ້າດັ່ງກ່າວ ກໍ່ຍັງແມ່ນປະເທດຈີນ, ໄທ ແລະ ຫວຽດນາມ. ໃນຮູບສະແດງທີ 6 ສະແດງໃຫ້ເຫັນວ່າ ໃນປີ 2020 ການສົ່ງອອກໝາກກ້ວຍ ສ່ວນໃຫຍ່ແມ່ນສົ່ງໄປ ສປ.ຈີນ ຊຶ່ງມີມູນຄ່າສູງເຖິງ 206 ລ້ານໂດລາສະຫະລັດ, ສົ່ງໄປໄທ 14,8 ລ້ານໂດລາສະຫະລັດ, ສ່ວນ ຫວຽດນາມ ແມ່ນມີພຽງແຕ່ 6,24 ລ້ານໂດລາສະຫະລັດ. ຢາງພາລາກໍ່ສາມາດສົ່ງອອກໄປ ຈີນ ແລະ ຫວຽດນາມ ໄດ້ປະມານ 108 ລ້ານໂດລາສະຫະລັດ ແລະ 105 ລ້ານ ໂດລາສະຫະລັດ ຕາມລຳດັບ. ສິນຄ້າທີ່ພົ້ນເດັ່ນອີກອັນໜຶ່ງ ແມ່ນການສົ່ງອອກມັນຕົ້ນໄປປະເທດໄທທີ່ມີມູນຄ່າ 182 ລ້ານໂດລາສະຫະລັດ, ໄປຫວຽດນາມ 20 ລ້ານໂດລາສະຫະລັດ ແລະ ສປ.ຈີນ 6,2 ລ້ານໂດລາສະຫະລັດ.

ສໍາລັບການລ້ຽງສັດໃນປີ 2019 ເຫັນວ່າ ພວກເຮົາມີຟາຣ໌ມລ້ຽງສັດຫຼາຍກວ່າ 1.322 ແຫ່ງ; ໃນນັ້ນ ມີຟາຣ໌ມລ້ຽງຄວາຍ 7 ແຫ່ງ (ມີຄວາຍ 750 ໂຕ), ຟາຣ໌ມລ້ຽງງົວ 170 ແຫ່ງ (ມີງົວ 43.000 ໂຕ), ຟາຣ໌ມລ້ຽງໝູພັນຫຼາຍແຫ່ງ (ມີແມ່ພັນ 23.200 ແມ່ ຊຶ່ງສາມາດຜະລິດລູກໝູໄດ້ 415.000 ໂຕ), ຟາຣ໌ມລ້ຽງແບ້ 63 ແຫ່ງ (ມີແບ້ 15.300 ໂຕ), ຟາຣ໌ມລ້ຽງໄກ່ພັນໄຂ່ ແລະ ພັນຊີ້ນ 380 ແຫ່ງ (ມີໄກ່ພັນໄຂ່ ແລະ ພັນຊີ້ນ 6.400.000 ໂຕ), ຟາຣ໌ມລ້ຽງເປັດພັນໄຂ່ ແລະ ພັນຊີ້ນ 108 ແຫ່ງ (ມີເປັດພັນໄຂ່ ແລະ ພັນຊີ້ 225.000 ໂຕ) ແລະ ມີຟາຣ໌ມລ້ຽງນົກກະທາ 19 ແຫ່ງ (ມີນົກກະທາ 200.000 ໂຕ) *(ກະຊວງກະສິກໍາ ແລະ ປ່າໄມ້, 2020)*.

ການລ້ຽງປາໃນໜອງຂອງຄອບຄົວ ແລະ ຟາຣ໌ມເອກະຊົນ ແມ່ນສາມາດສະໜອງຜົນຜະລິດປາໄດ້ຫຼາຍກວ່າ 25.000 ໂຕນ. ການລ້ຽງປາໃນກະຊັງຕາມລໍາແມ່ນໍ້າຂອງ, ແມ່ນໍ້າສາຂອງແມ່ນໍ້າຂອງ ແລະ ອ່າງເກັບນໍ້າຕ່າງໆ ລວມມີ 7.400 ກະຊັງ ຊຶ່ງສາມາດສະໜອງຜະລິດຕະພັນປາໄດ້ 40.000 ໂຕນ. ນອກຈາກນັ້ນ, ຍັງມີປາທໍາມະຊາດທີ່ເປັນເສດຖະກິດ ແລະ ສົ່ງອອກໄປສູ່ຕະຫຼາດຂອງປະເທດເພື່ອນບ້ານໃກ້ຄຽງປະມານ 10.000-12.000 ໂຕນ (ກປ, 2020).

**ຕາຕະລາງທີ 1: ການສົ່ງອອກສິນຄ້າກະສິກໍາຂອງ ສປປ,ລາວ ໃນໄລຍະ 5 ປີ (2016-2020)**

| ລ/ດ | ໝວດສິນຄ້າ | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|---|
| 1 | ໝາກກ້ວຍ | 197.81 | 167.86 | 112.00 | 197.84 | 227.44 |
| 2 | ມັນຕົ້ນ | 81.22 | 96.84 | 85.49 | 111.49 | 209.63 |
| 3 | ຝຸ່ນ (ປຸຍ) | 16.11 | 69.54 | 118.84 | 114.88 | 192.04 |
| 4 | ກາເຟ (ບໍ່ທັນໄດ້ປຸງແຕ່ງ) | 67.00 | 98.10 | 96.70 | 64.32 | 85.89 |
| 5 | ໝາກໄມ້ (ໝາກໂມ, ໝາກນອດ, ໝາກຂາມ...) | 29.50 | 50.24 | 55.83 | 89.94 | 69.79 |
| 6 | ເຂົ້າ | 33.67 | 31.17 | 31.37 | 24.37 | 52.72 |
| 7 | ສາລີ | 29.51 | 45.59 | 31.65 | 42.52 | 35.21 |
| 8 | ຜະລິດຕະພັນອຸດສາຫະກໍາຈາກທັນຍາພືດ | 37.09 | 46.82 | 12.62 | 26.99 | 18.25 |
| 9 | ກະລໍາປີ | 26.52 | 9.03 | 14.12 | 16.78 | 12.58 |
| 10 | ຜັກບົ່ວ, ກະທຽມ | 3.44 | 5.60 | 6.39 | 10.07 | 9.05 |
| 11 | ພືດຜັກ | 6.52 | 5.75 | 8.63 | 29.75 | 8.63 |
| 12 | ຖົ່ວດິນ, ຖົ່ວເຫຼືອງ | 14.84 | 3.62 | 6.62 | 9.11 | 8.55 |
| 13 | ເມັດພືດ, ໝາກໄມ້ທີ່ມີນໍ້າມັນ, ເຟືອງ ແລະ ຫຍ້າ | 2.50 | 3.13 | 2.88 | 3.57 | 4.97 |
| 14 | ເຄື່ອງເທດ | 1.10 | 4.02 | 2.21 | 3.67 | 3.83 |
| 15 | ໝາກເດືອຍ | 1.51 | 0.90 | 1.34 | 1.04 | 2.27 |
| 16 | ຊາ (ບໍ່ທັນໄດ້ປຸງແຕ່ງ) | 0.59 | 0.69 | 0.89 | 1.52 | 1.33 |
| 17 | ຕົ້ນໄມ້ ແລະ ພືດອື່ນໆທີ່ມີຊີວິດ | 0.46 | 0.25 | 0.38 | 1.43 | 0.54 |
| 18 | ແຂມແຫ້ງ, ບໍສາ | 0.10 | 0.18 | 0.17 | 0.26 | 0.32 |
| 19 | ນໍ້າຫອມ, ເຄື່ອງສໍາອາງ | 0.15 | 0.27 | 0.03 | 0.78 | 0.12 |
| 20 | ສິ່ງປຸງແຕ່ງຈາກພືດຜັດ ແລະ ໝາກໄມ້ | 0 | 0.19 | 0.33 | 0.23 | 0.06 |
| 21 | ທັນຍາພືດອື່ນໆ (ນອກຈາກເຂົ້າ, ສາລີ ແລະ ໝາກເດືອຍ) | 0.34 | 0.30 | 0 | 0.24 | 0 |
| | **ການສົ່ງອອກ ສິນຄ້າກະສິກໍາທັງໝົດ** | **550.01** | **640.08** | **588.48** | **750.79** | **943.23** |
| | **ອັດຕາສ່ວນການສົ່ງອອກສິນຄ້າກະສິກໍາ** | **12.98** | **13.10** | **10.88** | **12.80** | **15.29** |
| | **ມູນຄ່າການສົ່ງອອກທັງໝົດຂອງ ສປປ.ລາວ** | **4,236.23** | **4,887.88** | **5,410.15** | **5,864.14** | **6,168.27** |

*ແຫຼ່ງຂໍ້ມູນ: ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ*

**ຮູບສະແດງທີ 6: ສິນຄ້າກະສິກໍາທີ່ສົ່ງອອກໄປສູ່ປະເທດຄູ່ຄ້າ**













*ແຫຼ່ງຂໍ້ມູນ: ກະຊວງອຸດສາຫະກໍາ ແລະ ການຄ້າ, 2021*

## 2.5. ຕ່ອງໂສ້ການຜະລິດ ແລະ ການຄ້າສິນຄ້າກະສິກຳຢູ່ໃນ ສປປ.ລາວ

ຄຳວ່າຕ່ອງໂສ້ການຜະລິດ ແລະ ການຄ້າສິນຄ້າກະສິກຳ ກໍ່ຄືຕ່ອງໂສ້ຄຸນຄ່າທາງການກະສິກຳນັ້ນເອງ ຊຶ່ງຄຳໆນີ້ ແມ່ນໄດ້ຮັບຄວາມນິຍົມເປັນຄັ້ງທຳອິດໃນໜັງສືຂອງ ທ່ານ Michael Porter ທີ່ຕີພິມເຜີຍແຜ່ໃນປີ 1985 ເພື່ອໃຊ້ສະແດງໃຫ້ເຫັນວ່າບໍລິສັດຈະສາມາດບັນລຸສິ່ງທີ່ເຂົາເຈົ້າເອີ້ນວ່າ "ຄວາມໄດ້ປຽບໃນການແຂ່ງຂັນ" ນັ້ນໄດ້ຄືແນວໃດ ດ້ວຍການເພີ່ມຄຸນຄ່າຢູ່ພາຍໃນອົງກອນຂອງເຂົາເຈົ້າ, ຕໍ່ຈາກນັ້ນມາຄຳໆນີ້ກໍ່ຖືກນຳມາໃຊ້ເພື່ອຈຸດປະສົງໃນການພັດທະນາການກະສິກຳ ແລະ ມາຮອດປັດຈຸບັນນີ້ກໍ່ກາຍເປັນທີ່ນິຍົມຢ່າງຫຼວງຫຼາຍໃນໝູ່ຜູ້ທີ່ເຮັດວຽກຢູ່ໃນຂະແໜງການກະສິກຳ ໂດຍມີອົງການຊ່ວຍເຫຼືອທີ່ເພີ່ມຂຶ້ນເປັນຈຳນວນຫຼາຍ (ທັງທີ່ເປັນທະວິພາຄີ ແລະ ພະຫຸພາຄີ) ເພື່ອໃຊ້ເປັນແນວທາງໃນການແຊກແຊງການພັດທະນາຂອງເຂົາເຈົ້າ.

**ຮູບສະແດງທີ 7: ຕ່ອງໂສ້ຄຸນຄ່າທາງການກະສິກຳ**




ໝາກຫົວໃຈຂອງແນວຄວາມຄິດຕ່ອງໂສ້ຄຸນຄ່າທາງການກະສິກຳ ແມ່ນແນວຄິດຂອງນັກສະແດງທີ່ໄດ້ເຊື່ອມຕໍ່ຕາມຕ່ອງໂສ້ຕັ້ງແຕ່ການຜະລິດໄປຈົນເຖິງການສົ່ງມອບສິນຄ້າໃຫ້ແກ່ຜູ້ບໍລິໂພກ ໂດຍຜ່ານແຕ່ລະລຳດັບຂອງບັນດາກິດຈະກຳຕ່າງໆ. ເຖິງແນວໃດກໍ່ຕາມ, ຕ່ອງໂສ້ "ແນວຕັ້ງ" ນີ້ ແມ່ນບໍ່ສາມາດເຮັດໜ້າທີ່ໄດ້ຢ່າງໂດດດ່ຽວ ແລະ ສິ່ງສຳຄັນອັນໜຶ່ງຂອງແນວທາງຕ່ອງໂສ້ຄຸນຄ່າ ແມ່ນມັນຍັງຈະພິຈາລະນາເຖິງຜົນກະທົບ "ແນວນອນ" ທີ່ມີຕໍ່ຕ່ອງໂສ້ນຳອີກ ເຊັ່ນ: ການຈັດຫາປັດໄຈນຳເຂົ້າ ແລະ ການເງິນ, ການສະໜັບສະໜູນສົ່ງເສີມ ແລະ ສະພາບແວດລ້ອມທີ່ເປີດໃຊ້ງານຢູ່ທົ່ວໄປ. ວິທີນີ້ແມ່ນເຫັນວ່າມີປະໂຫຍດຫຼາຍ, ໂດຍສະເພາະຢ່າງຍິ່ງແມ່ນສຳລັບຜູ້ໃຫ້ທຶນ, ໃນນັ້ນມັນໄດ້ສົ່ງຜົນໃຫ້ມີການພິຈາລະນາເຖິງປັດໄຈທັງໝົດທີ່ສົ່ງຜົນກະທົບຕໍ່ຄວາມສາມາດຂອງຊາວກະສິກອນ ໃນການເຂົ້າເຖິງຕະຫຼາດທີ່ມີກຳໄລ ຊຶ່ງນຳໄປສູ່ການແຊກແຊງຕ່ອງໂສ້ທີ່ກວ້າງຂວາງຂຶ້ນ. ມັນໄດ້ຖືກນຳໃຊ້ທັງສຳລັບການຍົກລະດັບຕ່ອງໂສ້ທີ່ມີຢູ່ ແລະ ສຳລັບຜູ້ໃຫ້ທຶນ ເພື່ອກຳນົດກາລະໂອກາດທາງການຕະຫຼາດສຳລັບຊາວກະສິກອນຂະໜາດນ້ອຍ (ຮູບສະແດງທີ 7).

ວຽກງານພັດທະນາຕ່ອງໂສ້ຄຸນຄ່າສ່ວນຍ່ອຍທີ່ສຳຄັນ ແມ່ນກ່ຽວຂ້ອງກັບວິທີການເຊື່ອມໂຍງຜູ້ຜະລິດເຂົ້າກັບບໍລິສັດຕ່າງໆ ແລະ ຈາກນັ້ນຈຶ່ງເຂົ້າສູ່ຕ່ອງໂສ້ຄຸນຄ່າ, ໃນຂະນະດຽວກັນນີ້ກໍ່ມີຕົວຢ່າງຂອງຕ່ອງໂສ້ຄຸນຄ່າທີ່ຄົບວົງຈອນ ທີ່ບໍ່ກ່ຽວຂ້ອງກັບຜູ້ຖືຄອງທີ່ດິນຂະໜາດນ້ອຍ (ລາຍຍ່ອຍ) ເຊັ່ນ: Unilever ໄດ້ດຳເນີນກິດຈະການສວນຊາ ແລະ ໂຮງງານແປຮູບຊາຢູ່ໃນປະເທດເຄນຢາ, ຫຼັງຈາກນັ້ນຈຶ່ງນຳໄປຜະສົມ ແລະ ຫຸ້ມຫໍ່ຢູ່ໃນເອີຣົບ ກ່ອນທີ່ຈະຂາຍເປັນຊາຍີ່ຫໍ້ Lipton, Brooke Bond ຫຼື PG Tips (*Agricultural value chain - Wikipedia*). ຕ່ອງໂສ້ຄຸນຄ່າທາງການກະສິກຳຈຳນວນຫຼາຍແມ່ນກ່ຽວຂ້ອງກັບການຂາຍໃຫ້ແກ່ບໍລິສັດໂດຍຊາວກະສິກອນອິດສະຫຼະ ຊຶ່ງການຕຽມການດັ່ງກ່າວນັ້ນແມ່ນມັກຈະກ່ຽວຂ້ອງກັບການເຮັດການກະສິກຳຕາມສັນຍາ ຊຶ່ງຊາວກະສິກອນຕ້ອງຈັດຫາພືດຜົນ ຫຼື ຜະລິດຕະພັນສັດຕາມຈຳນວນທີ່ຕົກລົງກັນໄວ້ກ່ອນ ໂດຍພິຈາລະນາຈາກມາດຕະຖານ, ຄຸນນະພາບ ແລະ ຂໍ້ກຳນົດໃນການຈັດສົ່ງຜະລິດຕະພັນໃຫ້ແກ່ຜູ້ຊື້ ຊຶ່ງມັກຈະເປັນລາຄາທີ່ກຳນົດໄວ້ລ່ວງໜ້າ ໂດຍບໍລິສັດຕ່າງໆມັກຈະຕົກລົງໃຫ້ການສະໜັບສະ

ໜູນຊາວກະສິກອນ ຜ່ານການຈັດຫາປັດໄຈການຜະລິດ, ການກຽມດິນ, ໃຫ້ຄຳແນະນຳໃນການຂະຫຍາຍ ແລະ ການຂົນສົ່ງຜະລິດຕະພັນໄປຍັງສະຖານທີ່ຂອງຕົນ.

ຕ່ອງໂສ້ຄຸນຄ່າ (ການຜະລິດ ແລະ ການຄ້າຜະລິດຕະພັນກະສິກຳ) ແຕ່ລະສາຍ ແມ່ນມີຄວາມແຕກຕ່າງກັນເລັກໜ້ອຍ ຕົວຢ່າງເຊັ່ນ: ຕ່ອງໂສ້ມູນຄ່າສິນຄ້າກະສິກຳສ່ວນໃຫຍ່ຢູ່ໃນ ສປປ.ລາວ (ເບິ່ງຢູ່ໃນຮູບສະແດງທີ 8) ແມ່ນພວກເຮົາສາມາດເວົ້າໄດ້ວ່າຊາວກະສິກອນຜູ້ຜະລິດ ແລະ ສະຫະກອນທີ່ເຂົາເຈົ້າເປັນເຈົ້າຂອງ ຫຼື ທີ່ເຂົາເຈົ້າຂາຍຜົນຜະລິດໃຫ້ , ຜູ້ຄ້າ, ບໍລິສັດແປຮູບ ແລະ ຜູ້ຫຼິ້ນບົດບາດຢູ່ໃນຕະຫຼາດຕ່າງໆ ແມ່ນເປັນຜູ້ເຊື່ອມໂຍງຫຼັກຢູ່ໃນຕ່ອງໂສ້ຄຸນຄ່າ ທີ່ນອກເໜືອໄປຈາກຜູ້ບໍລິໂພກ, ແຕ່ກໍ່ຍັງມີການເຊື່ອມໂຍງທີ່ສຳຄັນອື່ນໆອີກ ຊຶ່ງໃນທີ່ນີ້ແມ່ນລວມທັງຮ້ານຄ້າ ແລະ ຜູ້ທີ່ຂາຍປັດໄຈການຜະລິດໃຫ້ແກ່ຊາວກະສິກອນ ເຊັ່ນ: ແນວພັນ, ຝຸ່ນ, ສານເຄມີກະສິກຳ ແລະ ເຄື່ອງມືອື່ນໆ. ນອກຈາກນີ້, ກໍ່ຍັງມີຜູ້ຄ້າສົ່ງຜົນຜະລິດສົດ, ຜູ້ຂົນສົ່ງ ແລະ ຜູ້ຫຼິ້ນບົດບາດອື່ນໆອີກ. ແນ່ນອນວ່າການເຊື່ອມໂຍງຕ່າງໆເຫຼົ່ານີ້ ແມ່ນໄດ້ຮັບຜົນກະທົບຈາກສະພາບແວດລ້ອມຂອງນະໂຍບາຍໃນລະດັບປະເທດ ແລະ ສາກົນ.

**ຮູບສະແດງທີ 8: ຕ່ອງໂສ້ຄຸນຄ່າທາງການກະສິກຳຢູ່ໃນ ສປປ.ລາວ**




*ແຫຼ່ງຂໍ້ມູນ: ວາດໂດຍທີມງານສຶກສາ*

ຢູ່ເບື້ອງຊ້າຍມືຂອງ ຮູບສະແດງທີ 8 ແມ່ນຂັ້ນຕອນຕ່າງໆໃນການເຮັດໜ້າທີ່ຂອງລະບົບຕ່ອງໂສ້ຄຸນຄ່າຂອງຜະລິດຕະພັນກະສິກຳຢູ່ໃນ ສປປ.ລາວ. ຂັ້ນຕອນທຳອິດແມ່ນການສະໜອງປັດໄຈນຳເຂົ້າສູ່ການຜະລິດ, ຕໍ່ຈາກນັ້ນກໍ່ແມ່ນການຜະລິດ, ການທ້ອນໂຮມ (ລວມທັງການອະນາໄມ ແລະ ການຈັດເກດ), ການປຸງແຕ່ງ ແລະ ສຸດທ້າຍແມ່ນການຂາຍຍ່ອຍ. ຢູ່ໃນເຂດທີ່ເປັນສີເທົ່ານັ້ນ ແມ່ນບັນດາຕົວລະຄອນຢູ່ໃນຕ່ອງໂສ້ຄຸນຄ່າທີ່ກ່ຽວຂ້ອງກັນຢູ່ໃນແຕ່ລະຂັ້ນຕອນ, ແຕ່

ໃນບາງກໍລະນີກໍ່ອາດຈະມີຕົວລະຄອນດຽວກັນທີ່ຮ່ວມສະແດງຢູ່ໃນຫຼາຍກວ່າໜຶ່ງເວທີ. ສ່ວນທີ່ຢູ່ທາງເບື້ອງຂວາມືຂອງຮູບນັ້ນ ແມ່ນບັນດາສະຖາບັນຕ່າງໆທີ່ໃຫ້ການສະໜັບສະໜູນບັນດາຕົວລະຄອນຢູ່ໃນຕ່ອງໂສ້ຄຸນຄ່າທາງການກະສິກຳ.

## 2.6 ສະພາບລວມຂອງເຂດພື້ນທີ່ການສຶກສາ

ແຂວງຫຼວງນ້ຳທາ ແລະ ອຸດົມໄຊ ຕັ້ງຢູ່ພາກຕາເວັນຕົກສຽງເໜືອຂອງ ສປປ.ລາວ, ມີເໜືອທີ່ທັງໝົດ 24.761 ກິໂລຕາແມັດ, ກວມເອົາປະມານ 10,4% ຂອງເນື້ອທີ່ທົ່ວປະເທດ. ສອງແຂວງດັ່ງກ່າວຕັ້ງຢູ່ຈຸດຍຸດທະສາດສຳຄັນທີ່ເປັນໃຈກາງຂອງບັນດາແຂວງພາກໜືອຂອງລາວ ແລະ ເປັນໃຈກາງທາງຜ່ານຕາເວັນອອກ-ຕາເວັນຕົກ ແລະ ເໜືອ-ໃຕ້ ໂດຍມີເສັ້ນທາງຫຼວງແຫ່ງຊາດ ເລກທີ 13 ເໜືອ ຕັດຜ່ານແຂວງອຸດົມໄຊ ແລະ ຫຼວງນ້ຳທາ ໄປຫາ ສປ.ຈີນ, ເສັ້ນທາງ 2E-2W ແຕ່ຊາຍແດນ ສສ.ຫວຽດນາມ ຜ່ານແຂວງອຸດົມໄຊ ໄປຫາປະເທດໄທ ແລະ ມຽນມາ ແລະ ເສັ້ນທາງ R3 ແຕ່ແຂວງບໍ່ແກ້ວຜ່ານແຂວງຫຼວງນ້ຳທາໄປຮອດດ່ານຊາຍແດນສາກົນ ບໍ່ເຕັນ-ບໍ່ຫານ. ສິ່ງສຳຄັນທີ່ສຸດອີກອັນໜຶ່ງ ແມ່ນເຂດດັ່ງກ່າວມີເສັ້ນທາງລົດໄຟ ລາວ-ຈີນ ແລ່ນຜ່ານເປັນໄລຍະທາງ 143,5 ກມ ແລະ ມີ 5 ສະຖານີ (ສະຖານີບໍ່ເຕັນ, ນາເຕີຍ , ເມືອງນາໝໍ້, ເມືອງໄຊ, ເມືອງງາ)[2], ພ້ອມດຽວກັນນັ້ນ, ເຂດດັ່ງກ່າວຈະມີເສັ້ນທາງດ່ວນແຕ່ນະຄອນຫຼວງວຽງຈັນ-ບໍ່ເຕັນ ຜ່ານແຂວງດັ່ງກ່າວໃນອະນາຄົດອັນໃກ້ນີ້. ນອກຈາກນັ້ນ, ສອງແຂວງນີ້ຍັງມີດ່ານຊາຍແດນ ເຂົ້າ-ອອກ ກັບ ສປ.ຈີນ (ມົນທົນຢຸນນານ) ຢູ່ 4 ດ່ານຄື: ດ່ານຊາຍແດນສາກົນບໍ່ເຕັນ-ບໍ່ຫານ, ດ່ານທ້ອງຖິ່ນປາງໄຮ, ດ່ານປະເພນີບ້ານມອມ ( ຫຼວງນ້ຳທາ) ແລະ ດ່ານຊາຍແດນທ້ອງຖິ່ນພູຫຼັກຄຳ (ອຸດົມໄຊ). ດ້ວຍປັດໄຈການກໍ່ສ້າງພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຄືດັ່ງກ່າວ, ແຂວງອຸດົມໄຊ ແລະ ຫຼວງນໍ້າທາ ຈຶ່ງກາຍເປັນໃຈກາງການພັດທະນາທາງດ້ານເສດຖະກິດ, ການລົງທຶນ, ການຄ້າ, ວັດທະນະທຳ-ສັງຄົມ, ການບໍລິການ, ການທ່ອງທ່ຽວ ລວມໄປເຖິງການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຂອງປະເທດ ກໍ່ຄືບັນດາແຂວງໃນພາກເໜືອຂອງ ສປປ.ລາວ.

**ຮູບສະແດງທີ 9: ແຜນທີ່ແຂວງຫຼວງນໍ້າທາ ແລະ ອຸດົມໄຊ**




[2] ບົດສະຫຼຸບປະຈຳເດືອນ 7 ປີ 2018, ຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ, ກະຊວງໂຍທາທິການ ແລະ ຂົນສົ່ງ

ໃນໄລຍະ 5 ປີ ຜ່ານມາ (2016-2020), ເສດຖະກິດຂອງສອງແຂວງດັ່ງກ່າວໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ຊຶ່ງມີລະດັບການຂະຫຍາຍຕົວໂດຍສະເລັ່ຍຢູ່ທີ່ 7,85% (ຫຼືປະມານ 388 ລ້ານໂດລາສະຫະລັດ) ທຽບໃສ່ນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ ແລະ ສະຫວັນນະເຂດ ແມ່ນ 9,61%; 7,7% ແລະ 9,62% ຕາມລຳດັບ *(ສູນສະຖິຕິແຫ່ງຊາດ)*. ລາຍໄດ້ສະເລັ່ຍຕໍ່ຫົວຄົນເພີ່ມຂຶ້ນຈາກ 1.481 ໂດລາສະຫະລັດ ໃນປີ 2016 ມາເປັນ 1.624 ໂດລາ ໃນປີ 2020 ຫຼື ເພີ່ມຂຶ້ນປະມານ 8%. ໃນນັ້ນ, ຂະແໜງກະສິກຳ ແລະ ປ່າໄມ້ ແມ່ນມີການຂະຫຍາຍຕົວໂດຍສະເລ່ຍຢູ່ໃນລະດັບ 6,79%, ສ່ວນຂະແໜງອຸດສາຫະກຳ ແລະ ຂະແໜງການບໍລິ ແມ່ນຢູ່ໃນລະດັບ 7,76% ແລະ 10,05% ຕາມລຳດັບ (ເບິ່ງຢູ່ໃນຕາຕະລາງທີ 2).

**ຕາຕະລາງທີ 2: ການຂະຍາຍຕົວທາງເສດຖະກິດຂອງ ແຂວງອຸດົມໄຊ ແລະ ຫຼວງນ້ຳທາ (2016-2020)**

| ແຂວງ | ໂຄງປະກອບເສດຖະກິດ | ຫ.ໜ | 2016 | 2017 | 2018 | 2019 | 2020 | ສະເລັ່ຍ |
|---|---|---|---|---|---|---|---|---|
| ຫຼວງນ້ຳທາ | ການຂະຫຍາຍຕົວຂອງເສດຖະກິດຕາມລາຄາໃນປີ | ລ້ານໂດລາ | 280,19 | 302,16 | 333,99 | 328,06 | 366,40 | 322,71 |
| | ອັດຕາການຂະຫຍາຍຕົວຂອງເສດຖະກິດ | % | 9,01 | 8,96 | 8,99 | 8,83 | 7,01 | 8,56 |
| | ກະສິກຳ | % | 4,81 | 7,75 | 7,47 | 9,55 | 8,84 | 7,68 |
| | ອຸດສາຫະກຳ | % | 11,94 | 11,68 | 14,39 | 7,82 | 7,87 | 10,74 |
| | ການບໍລິການ | % | 13,80 | 9,29 | 8,43 | 7,94 | 3,10 | 8,51 |
| | ລາຍໄດ້ຕໍ່ຫົວຄົນ | ໂດລາ | 1.565 | 1.656 | 1.796 | 1.731 | 1.897 | 1.729 |
| ອຸດົມໄຊ | ການຂະຫຍາຍຕົວຂອງເສດຖະກິດຕາມລາຄາໃນປີ | ລ້ານໂດລາ | 437,34 | 461,29 | 448,73 | 459,71 | 466,24 | 454,66 |
| | ອັດຕາການຂະຫຍາຍຕົວຂອງເສດຖະກິດ | % | 7,50 | 7,60 | 7,23 | 7,92 | 5,44 | 7,14 |
| | ກະສິກຳ | % | 5,30 | 7,17 | 6,95 | 5,06 | 5,05 | 5,91 |
| | ອຸດສາຫະກຳ | % | 3,97 | 4,95 | 3,07 | 6,44 | 5,46 | 4,78 |
| | ການບໍລິການ | % | 14,23 | 14,82 | 12,31 | 11,09 | 5,55 | 11,60 |
| | ລາຍໄດ້ຕໍ່ຫົວຄົນ | ໂດລາ | 1.397 | 1.394 | 1.388 | 1.352 | 1.350 | 1.376 |
| ລວມທັງສອງແຂວງ | ການຂະຫຍາຍຕົວຂອງເສດຖະກິດຕາມລາຄາໃນປີ | ລ້ານໂດລາ | 358,76 | 381,73 | 391,36 | 393,88 | 416,32 | 388,69 |
| | ອັດຕາການຂະຫຍາຍຕົວຂອງເສດຖະກິດ | % | 8,26 | 8,28 | 8,11 | 8,38 | 6,23 | 7,85 |
| | ກະສິກຳ | % | 5,06 | 7,46 | 7,21 | 7,30 | 6,94 | 6,79 |
| | ອຸດສາຫະກຳ | % | 7,96 | 8,32 | 8,73 | 7,13 | 6,67 | 7,76 |
| | ການບໍລິການ | % | 14,02 | 12,06 | 10,37 | 9,51 | 4,33 | 10,05 |
| | ລາຍໄດ້ຕໍ່ຫົວຄົນ | ໂດລາ | 1.481 | 1.525 | 1.592 | 1.542 | 1.624 | 1.553 |

*ແຫຼ່ງຂໍ້ມູນ: ສູນສະຖິຕິປະຈຳແຂວງອຸດົມໄຊ ແລະ ຫຼວງນ້ຳທາ, ສປປ.ລາວ*

# 3. ຮູບແບບຈຳລອງຜົນກະທົບຕໍ່ກັບລາຍໄດ້ຂອງຄົວເຮືອນ

## 3.1 ຂໍ້ມູນ

ນອກຈາກການວິເຄາະທາງດ້ານຄຸນນະພາບ, ບົດສຶກສາຄົ້ນຄວ້ານີ້ຍັງໄດ້ນຳໃຊ້ວິທີການວິໄຈທາງດ້ານປະລິມານ ໂດຍນຳໃຊ້ຂໍ້ມູນຈາກການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ ຄັ້ງທີ VI (Lao Comsumption and Expenditure Survey - LECS VI, 2018/2019) ຂອງສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ. ການສຳຫຼວດດັ່ງກ່າວ ແມ່ນໄດ້ນຳໃຊ້ແບບສອບຖາມສຳລັບການເກັບກຳຂໍ້ມູນຢູ່ໃນ 634 ບ້ານ (10.029 ຄົວເຮືອນ) ເພື່ອໃຊ້ເປັນຕົວແທນຂອງທົ່ວປະເທດ. ຂໍ້ມູນຂອງບັນດາຕົວປ່ຽນຕ່າງໆແມ່ນໄດ້ກຳນົດເອົາໄລຍະເວລາ 12

ເດືອນ ໂດຍເລີ່ມແຕ່ ເດືອນມິຖຸນາ 2018 ຫາ ເດືອນມິຖຸນາ 2019. ສໍາລັບຂໍ້ມູນທີ່ໃຊ້ໃນການວິໄຈ ແມ່ນໄດ້ຄັດເລືອກເອົາຂໍ້ມູນເປັນລາຍຄົວເຮືອນ ແລະ ລາຍບຸກຄົນຂອງແຂວງອຸດົມໄຊ ແລະ ຫຼວງນໍ້າທາເທົ່ານັ້ນ ໂດຍມີຈໍານວນຕົວຢ່າງທັງໝົດ 1.051 ຄົວເຮືອນ (4.938 ຄົນ) ຢູ່ໃນ 66 ບ້ານ. ບັນດາຕົວປ່ຽນທີ່ໃຊ້ເຂົ້າໃນການສຶກສານີ້ແມ່ນມີຕົວປ່ຽນຂອງລັກສະນະຂອງຄົວເຮືອນ (ຂະໜາດຂອງຄົວເຮືອນ, ອາຍຸ, ຊົນເຜົ່າ, ລະດັບການສຶກສາ, ເພດ, ສະຖານະພາບຂອງການສົມລົດ, ອາຊີບ ແລະ ຄວາມທຸກຍາກ), ສະພາບການຜະລິດກະສິກໍາ (ເນື້ອທີ່ທໍາການຜະລິດ ແລະ ຜົນຜະລິດ), ການເຂົ້າເຖິງແຫຼ່ງເງິນກູ້; ຕົວປ່ຽນ (dummy) ຂອງເຂດການຄ້າຊາຍແດນ ແລະ ສະຖານີລົດໄຟ (ສໍາລັບຕົວປ່ຽນນີ້ແມ່ນໄດ້ເລືອກເອົາຂໍ້ມູນຈາກຈໍານວນຕົວຢ່າງຢູ່ໃນເມືອງທີ່ຕິດກັບເຂດການຄ້າຊາຍແດນ ແລະ ເມືອງທີ່ມີສະຖານີລົດໄຟຕັ້ງຢູ່). ສ່ວນຂໍ້ມູນມືສອງແມ່ນໄດ້ນໍາໃຊ້ຜົນຂອງບົດຄົ້ນຄວ້າ, ບົດສຶກສາ-ວິໄຈຕ່າງໆ (ລວມທັງຂໍ້ມູນດ້ານສະຖິຕິ), ນະໂຍບາຍ ແລະ ລະ ບຽບຫຼັກການຕ່າງໆ ຜ່ານການເກັບກໍາສັງລວມມາຈາກການສໍາພາດພາກລັດ ແລະ ເອກະຊົນທີ່ກ່ຽວຂ້ອງຂອງສອງແຂວງດັ່ງກ່າວ ເປັນຕົ້ນແມ່ນພະແນກແຜນການ ແລະ ການລົງທຶນ, ພະແນກກະສິກໍາ ແລະ ປ່າໄມ້, ພະແນກອຸດສາຫະກໍາ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກໍາຂັ້ນແຂວງ ລວມທັງສູນກັກກັນພືດທີ່ດ່ານຊາຍແດນ ບໍ່ເຕັນ-ບໍ່ຫານ. ພ້ອມກັນນັ້ນ, ຍັງໄດ້ລົງໄປສໍາພາດກຸ່ມລ້ຽງງົວ, ກຸ່ມປູກອ້ອຍຢູ່ເມືອງສິງ/ ແຂວງຫຼວງນໍ້າທາ ແລະ ບໍລິສັດປູກອ້ອຍຢູ່ເມືອງຮຸນ/ ແຂວງອຸດົມໄຊ. ນອກຈາກນັ້ນ, ຍັງໄດ້ເກັບກາຂໍ້ມູນຈາກບັນດາຂະແໜງການທີ່ກ່ຽວຂ້ອງຢູ່ຂັ້ນສູນກາງ; ລວມທັງສັງ ລວມບັນດາເອກະສານ, ບົດຄົ້ນຄວ້າ ແລະ ບົດລາຍງານຕ່າງໆຈາກວາລະສານການຄົ້ນຄວ້າ ແລະ ເວບໄຊຍ໌ຕ່າງໆ ເພື່ອປະກອບເຂົ້າໃນການຂຽນບົດສຶກສາຄົ້ນຄວ້ານີ້.

ຕາຕະລາງທີ 3 ແມ່ນການອະທິບາຍກ່ຽວກັບບັນດາຕົວປ່ຽນທີ່ໃຊ້ເຂົ້າໃນການວິໄຈ. ການເລືອກບັນດາຕົວປ່ຽນດັ່ງກ່າວນີ້ ແມ່ນໄດ້ອີງໃສ່ຂໍ້ມູນ ແລະ ຜົນຂອງການຄົ້ນຄວ້າທີ່ກ່ຽວຂ້ອງ ຊຶ່ງມີລາຍລະອຽດ ດັ່ງລຸ່ມນີ້:

- **ຕົວປ່ຽນຄວາມທຸກຍາກ (Poor)** ແມ່ນຄິດໄລ່ມາຈາກສອງຂັ້ນຕອນ ຄື: ຂັ້ນຕອນທີໜຶ່ງ ແມ່ນຄິດໄລ່ເອົາຄ່າໃຊ້ຈ່າຍໃນການຊົມໃຊ້ຕົວຈິງຕໍ່ບຸກຄົນ ຊຶ່ງເທົ່າກັບຜົນລວມຂອງການໃຊ້ຈ່າຍທາງດ້ານອາຫານ (ການຊື້ອາ ຫານຈາກຕະຫຼາດ ແລະ ການບໍລິໂພກຂອງຕົນເອງ) ແລະ ການໃຊ້ຈ່າຍທີ່ບໍ່ແມ່ນອາຫານ (ເຄື່ອງນຸ່ງຫົ່ມ ແລະ ເກີບ, ເຄື່ອງອຸປະໂພກ ແລະ ນໍ້າມັນ, ເຄື່ອງໃຊ້ໃນຄົວເຮືອນ, ຢາປົວພະຍາດ, ການຄົມມະນາຄົມຂົນສົ່ງ ແລະ ສື່ສານ, ການສຶກສາ, ເຄື່ອງໃຊ້ສອຍສ່ວນຕົວ, ງານສັງຄົມ-ວັດທະນະທໍາ, ເຫຼົ້າ ແລະ ຢາສູບ, ຄ່າເຊົ່າເຮືອນ ແລະ ຄ່າໃຊ້ຈ່າຍອື່ນໆ) ຫານໃຫ້ຂະໜາດຂອງຄົວເຮືອນ. ຂັ້ນຕອນທີ 2 ແມ່ນຄິດໄລ່ເອົາຄ່າໃຊ້ຈ່າຍໃນການຊົມໃຊ້ຕົວຈິງຕໍ່ບຸກຄົນ ທຽບໃສ່ເສັ້ນຄວາມທຸກຍາກຕາມມາດຖານ; ຖ້າຄ່າການຊົມໃຊ້ສູງກວ່າເສັ້ນຄວາມຄວາມທຸກຍາກແມ່ນຖືວ່າພົ້ນທຸກ ແລະ ຖ້າຕໍ່າກວ່າເສັ້ນຄວາມທຸກຍາກແມ່ນຖືວ່າຍັງທຸກຍາກຢູ່. Poor = 1 ແມ່ນທຸກຍາກ, 0 ແມ່ນອື່ນໆ.
- **HH Size:** ແມ່ນຈໍານວນສະມາຊິກພາຍໃນຄົວເຮືອນ ຊຶ່ງມີຄ່າສະເລັ່ຍເທົ່າກັບ 6 ຄົນ ຕໍ່ຄົວເຮືອນ;
- **Age:** ແມ່ນອາຍຸຂອງແຕ່ບຸກຄົນທີ່ຢູ່ພາຍໃນຄົວເຮືອນ ຊຶ່ງມີຄ່າສະເລັ່ຍເທົ່າກັບ 26 ປີ;
- **Education:** ແມ່ນຈໍານວນຂອງປີຮຽນ ຊຶ່ງມີຄ່າສະເລັ່ຍເທົ່າກັບ 1,6 ປີ, ນີ້ສະແດງໃຫ້ເຫັນວ່າປະຊາຊົນສ່ວນໃຫຍ່ (ປະມານ 80%) ແມ່ນມີລະດັບການສຶກສາທີ່ຕໍ່າຫຼາຍ;
- **Gender:** ແມ່ນເພດ (0 = ຍິງ ແລະ 1 = ຊາຍ);
- **Married:** ແມ່ນສະຖານະພາບໃນການສົມລົດ (1 = ແຕ່ງງານແລ້ວ, 0 = ສະຖານະພາບອື່ນໆ);
- **Ethnic minor:** ແມ່ນຕົວປ່ຽນ Dummy ຂອງຊົນເຜົ່າ (1 = ກຸ່ມຊົນເຜົ່າ (ຂະມຸ, ໄປູ, ສີງມູນ,ລາເມດ, ຊາເຕົາ, ມົ້ງ, ອິວມຽນ, ອາຂ່າ, ຜູ້ນ້ອຍ, ຣາຫູ, ໂລໂລ, ຫໍ້ ແລະ ອື່ນໆ; 0 = ກຸ່ມຊົນເຜົ່າລາວລຸ່ມ (ລາວ, ໄຕ, ຜູ້ໄທ , ລື້, ຢວນ, ຢັ້ງ ແລະ ໄທເໜືອ);
- **Dummy Job:** ແມ່ນອາຊີບ (1 = ບຸກຄົນມີທີ່ອາຊີບສອງຢ່າງຂຶ້ນໄປ, 0 = ບຸກຄົນທີ່ມີອາຊີບດຽວ ແລະ ບໍ່ມີອາຊີບ);
- **Big Animal:** ແມ່ນຈໍານວນສັດລ້ຽງໃຫຍ່ທີ່ມີຢູ່ຂອງແຕ່ລະບຸກຄົນ (ງົວ, ຄວາຍ, ແບ້, ໝູ ແລະ ອື່ນໆ);

- **Asset Value:** ແມ່ນມູນຄ່າຂອງຊັບສິນຂອງບຸກຄົນ ໂດຍສະເລັ່ຍແມ່ນມີຢູ່ປະມານ 44,5 ລ້ານກີບ;
- **Loan:** ແມ່ນເງິນກູ້ຢືມເພື່ອນໍາໃຊ້ເຂົ້າໃນການຜະລິດ ຊຶ່ງມີຄ່າສະເລັ່ຍຢູ່ປະມານ 1,5 ລ້ານກີບ ຕໍ່ຄົນ. ໃນນີ້, ມີພຽງແຕ່ 24% ຂອງຈໍານວນຕົວຢ່າງທີ່ໄດ້ມີການກູ້ຢືມເງິນ;
- **Off farm:** ແມ່ນອາຊີບທີ່ບໍ່ແມ່ນການກະສິກາ (1 = ອາຊີບທີ່ບໍ່ແມ່ນການກະສິກໍາ (ພະນັກງານເອກະຊົນ, ພະນັກງານລັດ, ກໍາມະກອນ, ທຸລະກິດ, ການຄ້າ, ການຂົນສົ່ງ, ຫັດຖະກໍາ ແລະ ພະນັກງານບໍານານ), 0 = ອາຊີບກະສິກໍາ (ປູກຝັງ, ລ້ຽງສັດ, ປາມົງ ແລະ ການເກັບເຄື່ອງປ່າຂອງດົງ);
- **Urban:** ແມ່ນຕົວປ່ຽນຂອງບຸກຄົນທີ່ດໍາລົງຊີວິດຢູ່ໃນຕົວເມືອງ (1 = ຕົວເມືອງ, 0 = ຊົນນະບົດ);

ຕາຕະລາງທີ 3: ຕົວປ່ຽນ ແລະ ຄ່າສະຖິຕິຂອງບັນດາຕົວປ່ຽນ

| No. | Variables | Obs | Mean | Std. Dev. | Min | Max |
|---|---|---|---|---|---|---|
| 1 | Poor (Head) | 4.938 | 0,2274 | 0,4192 | 0 | 1 |
| 2 | HH size (Head) | 4.938 | 6,2535 | 2,6808 | 1 | 17 |
| 3 | Age (Head) | 4.938 | 26,6355 | 19,0202 | 0 | 90 |
| 4 | Education (year) | 4.938 | 1,6549 | 2,7822 | 0 | 19 |
| 5 | Gender (Head) | 4.938 | 0,4939 | 0,5000 | 0 | 1 |
| 6 | Married (Head) | 4.938 | 0,4605 | 0,4985 | 0 | 1 |
| 7 | Ethnic minor | 4.938 | 0,7953 | 0,4036 | 0 | 1 |
| 8 | Dummy Job | 4.938 | 0,0614 | 0,2400 | 0 | 1 |
| 9 | Big Animal | 4.938 | 1,2969 | 2,7488 | 0 | 33 |
| 10 | Asset Value (million kip) | 4.938 | 44,50 | 349,00 | 0 | 9.000 |
| 11 | Loan | 4.938 | 1.596.017 | 6.270.715 | 0 | 99.000.000 |
| 12 | Off farm | 4.938 | 0,2017 | 0,4013 | 0 | 1 |
| 13 | Urban | 4.938 | 0,2456 | 0,4305 | 0 | 1 |
| 14 | Local_market | 4.938 | 0,2319 | 0,4221 | 0 | 1 |
| 15 | Agriculture Extention | 4.938 | 0,3730 | 0,4837 | 0 | 1 |
| 16 | Distance City | 4.938 | 36,3804 | 35,3632 | 0 | 96 |
| 17 | Border District | 4.938 | 0,3032 | 0,4597 | 0 | 1 |
| 18 | Rail Station District | 4.938 | 0,4117 | 0,4922 | 0 | 1 |
| 19 | Rail Station*Border District | 4.938 | 0,2143 | 0,4103 | 0 | 1 |
| 20 | Planted Area | 4.938 | 0,9993 | 1,1681 | 0 | 12 |
| 21 | Products | 4.938 | 7,409 | 34,454 | 0 | 310.000 |
| 22 | Sold Product Value | 4.938 | 5.846.969 | 21.700.000 | 0 | 480.000.000 |
| 23 | Sold Product*Local market | 4.938 | 932.072 | 9.161.706 | 0 | 160.000.000 |
| 24 | Sold Product*border District | 4.938 | 3.107.619 | 16.300.000 | 0 | 250.000.000 |
| 25 | Rail Station*Product | 4.938 | 653 | 2.091 | 0 | 26.000 |
| 26 | Border District*Product | 4.938 | 5.638 | 34.427 | 0 | 310.000 |

*ແຫຼ່ງຂໍ້ມູນ: LECS VI*

- **Local market:** ແມ່ນຕົວປ່ຽນຕະຫຼາດພາຍໃນບ້ານ (1 = ມີຕະຫຼາດຢູ່ພາຍໃນບ້ານ, 0 = ບໍ່ມີ);
- **Agriculture Extention:** ແມ່ນຕົວປ່ຽນທີ່ລະບຸວ່າໄດ້ມີພະນັກງານກະສິກໍາລົງມາແນະນາໃຫ້ປະຊາຊົນໃນການເຮັດກະສິກໍາ (1 = ມາແນະນໍາທາງດ້ານກະສິກໍາຫຼາຍກວ່າໜຶ່ງຄັ້ງ, 0 = ບໍ່ໄດ້ມາແນະນໍາ);
- **Distance City:** ແມ່ນໄລຍະທາງແຕ່ບ້ານຫາເທດສະບານຂອງແຂວງ;

- **Border District:** ແມ່ນເມືອງດ່ານຊາຍແດນ (1 = ຈຳນວນບຸກຄົນທີ່ດຳລົງຊີວິດຢູ່ໃນເມືອງທີ່ມີດ່ານຊາຍແດນ ຫຼື ເຂດການຄ້າຊາຍແດນທີ່ຕິດກັບປະເທດຈີນ, 0 = ອື່ນໆ);
- **Rail Station District**: ແມ່ນເມືອງສະຖານີລົດໄຟ (1 = ບຸກຄົນທີ່ດຳລົງຊີວິດຢູ່ໃນເມືອງທີ່ມີສະຖານີລົດໄຟຕັ້ງຢູ່, 0 = ອື່ນໆ);
- **Planted Area:** ແມ່ນເນື້ອທີ່ປູກຝັງ, ໂດຍສະເລັ່ຍແມ່ນມີຢູ່ 0,9 ເຮັກຕາຕໍ່ຄົນ
- **Products:** ແມ່ນຜົນຜະລິດທີ່ເກັບກ່ຽວໄດ້, ໂດຍສະເລັ່ຍແມ່ນປະມານ 7,4 ໂຕນຕໍ່ຄົນ
- **Sold Product Value:** ແມ່ນມູນຄ່າຂອງຜົນຜະລິດທີ່ໄດ້ຂາຍ, ໂດຍສະເລັ່ຍແມ່ນປະມານ 5,8 ລ້ານກີບຕໍ່ຄົນ

## 3.2 ຮູບແບບຈຳລອງເສດຖາມິຕິ

ການສຶກສາດ້ານຄວາມທຸກຍາກໃນໄລຍະຫຼາຍປີ*ຜ່ານມາ*ໄດ້ພິສູດໃຫ້ເຫັນວ່າ ຄວາມທຸກຍາກ*ແມ່ນ*ມີການເພີ່ມຂຶ້ນ ຍ້ອນຕົວຊີ້ວັດດ້ານລາຍຮັບຂອງປະຊາຊົນມີການຫຼຸດລົງ (ລາຍຮັບຕໍ່າລົງ) ແລະ ປັດໄຈທີ່ເປັນຄຸນລັກສະນະຕ່າງໆຂອງບຸກຄົນ ເປັນຕົ້ນແມ່ນລະດັບການສຶກສາ ແລະ ສະຖານະພາບ*ຂອງ*ການຈ້າງງານ ກໍ່ມີຜົນກະທົບຕໍ່ກັບການດຳລົງຊີວິດຂອງຄົນຜູ້ທີ່ທຸກຍາກ *(SEN, 1978* ແລະ *William. L and John B. White 1998)***.** ສະນັ້ນ, ໃນໄລຍະຫຼາຍປີຕໍ່ມາ, ເພື່ອເຮັດໃຫ້ການພິສູດຜົນກະທົບຂອງຄວາມທຸກຍາກມີຄວາມຈະແຈ້ງ ແລະ ຫຼາກຫຼາຍຍິ່ງຂຶ້ນ *ກໍ່*ໄດ້ມີຫຼາຍການສຶກສາທີ່ຍົກໃຫ້ເຫັນເຖິງຄວາມທຸກຍາກໃນຫຼາຍມິຕິ ແລະ ມີຫຼາຍວິທີໃນການຄິດໄລ່ຕື່ມ. ໃນນັ້ນ, Forster, Greer ແລະ Thorbecke (FGT) ໄດ້ນຳສະເໜີວິທີການວັດແທກຄວາມທຸກຍາກໃນຫຼາຍເງື່ອນໄຂໃໝ່ຂອງຄອບຄົວ (ຄົວເຮືອນ) ຊຶ່ງບັນດາເງື່ອນໄຂດັ່ງກ່າວ ແມ່ນສາມາດປ່ຽນເປັນຕົວຊີ້ວັດໃນລະດັບຂອງຄົວເຮືອນທີ່ທຸກຍາກໄດ້ "aversion to poverty" *(Forster, Greer* ແລະ *Thorbecke, 1984*). ຕົວຊີ້ວັດດັ່ງກ່າວ ແມ່ນໝາຍເຖິງຄວາມທຸກຍາກທີ່ວັດແທກໄດ້ ໂດຍອີງໃສ່ໄລຍະຫ່າງລະຫວ່າງລາຍຮັບຕົວຈິງຂອງຄົວເຮືອນທີ່ທຸກຍາກ ແລະ ເສັ້ນຄວາມທຸກຍາກ ຊຶ່ງບໍ່ແມ່ນຈຳນວນຄົວເຮືອນທີ່ຢູ່ໃນລະຫວ່າງຂອບເຂດຂອງເສັ້ນຄວາມທຸກຍາກດັ່ງກ່າວ. ດັ່ງນັ້ນ, FGT ຈຶ່ງແມ່ນວິທີການປະເມີນຄວາມທຸກຍາກ ໂດຍການນຳໃຊ້ຕົວປ່ຽນກ່ຽວກັບຄວາມບໍ່ພຽງພໍ*ດ້ານ*ລາຍຮັບຂອງຄົວເຮືອນ ທຽບໃສ່ເສັ້ນຄວາມທຸກຍາກຂອງເຂົາເຈົ້າເອງ. ວິທີການດັ່ງກ່າວນີ້ ແມ່ນໃຊ້ເພື່ອປະເມີນບັນດາຕົວປ່ຽນກ່ຽວກັບການຂາດແຄນອາຫານ, ຄຸນລັກສະນະຂອງຄວາມທຸກຍາກໃນຮູບແບບຕ່າງໆ *ຢູ່*ໃນປະເທດເກນຢາ *(Gree and Thorbacke, 1986),* ບັງກະລາເທດ *(AHMED et al., 1991),* ອິນໂດເນເຊຍ *(RAVALLION and BIDANI, 1994)*, ເອທິໂອເປຍ *(BIGSTEN et al., 2003)*, ແລະ ເອທິໂອເປຍ *(Ayalneh.B., Kornad. H ແລະ Benedikt.K., 2005).*

ໃນບົດສຶກສາ*ຄົ້ນຄວ້າ*ກ່ຽວກັບການປະເມີນຄວາມທຸກຍາກຢູ່ໃນແຂວງຫຼວງນ້ຳທາ ແລະ ອຸດົມໄຊ ໂດຍການນຳໃຊ້ຂໍ້ມູນການສຳຫຼວດຈາກ LECS VI ນີ້, ພວກເຮົາໄດ້ນຳໃຊ້ຮູບແບບການວັດແທກຕົວຊີ້ວັດຄວາມທຸກຍາກຂອງ *FTG (1984)* ຊຶ່ງ $P_\alpha$ ແມ່ນຕົວປ່ຽນຄວາມທຸກຍາກ *ໂດຍ*ສະແດງອອກຢູ່ໃນສົມຜົນ ດັ່ງລຸ່ມນີ້:

$$P_\alpha(y,z) = \frac{1}{n}\sum_{i=1}^{q}\left(\frac{g_i}{z}\right)^\alpha \qquad (1)$$

ໂດຍທີ່ $y$ ແມ່ນຄ່າຂອງຄວາມຢູ່ດີກິນດີທີ່ວັດແທກໄດ້ຂອງແຕ່ລະຄົວເຮືອນ, $y_1, y_2, y_3 ... y_n$; ໃນນີ້ $n$ ແມ່ນຈຳນວນບຸກຄົນທີ່ໃຊ້ເປັນຕົວຢ່າງໃນການສຶກສາ. $z$ ແມ່ນເສັ້ນຄວາມທຸກຍາກ, $q$ ແມ່ນຈຳນວນຄົນທຸກຍາກ, $g_i$ ແມ່ນສະແດງເຖິງຕຳລາຂອງບັນດາຕົວປ່ຽນທີ່ເປັນຄຸນລັກສະນະຕ່າງໆຂອງບຸກຄົນທີ່ໄດ້ເລືອກມານຳໃຊ້*ເຂົ້າ*ໃນການວິເຄາະ. ຕົວຢ່າງ: ຖ້າ $x_i$ ແມ່ນຕົວປ່ຽນຕ່າງໆທີ່ເປັນຄຸນລັກສະນະຂອງບຸກຄົນ $i$; ສະນັ້ນ $g_i = z_i x_i$ ຖ້າ $x_i < z$; $g_i = 0$, ຖ້າ $x_i \geq z$, ແລະ $\alpha$ ແມ່ນຄ່າສຳປະສິດຂອງຕົວປ່ຽນຄວາມທຸກຍາກ ($\alpha \geq 0$) *(FGT, 1984).*

ເພື່ອສຶກສາເຖິງຄຸນລັກສະນະຕ່າງໆຂອງຄວາມທຸກຍາກຢູ່ໃນບົດ*ຄົ້ນຄວ້ານີ້*, ຮູບແບບຈຳລອງໂອກາດທີ່ໜ້າຈະເກີດຂຶ້ນໄດ້ ແມ່ນໄດ້ນຳໃຊ້ເພື່ອວັດແທກໃຫ້ເຫັນວ່າຈຳນວນຕົວຢ່າງທີ່ຢູ່ລຸ່ມເສັ້ນຄວາມທຸກຍາກນັ້ນ ແມ່ນມີສາເຫດທີ່ເກີດຂຶ້ນຍ້ອນປັດໄຈໃດທີ່ມີຜົນກະທົບຕໍ່ມັນ. ການົດຕົວປ່ຽນຂຶ້ນກັບ (Dependent Variable) ທີ່ສາຄັນ*ຢູ່ໃນບົດສຶກສານີ້* ແມ່ນຕົວປ່ຽນຂອງບຸກຄົນທີ່ຖືກຄິດໄລ່ວ່າແມ່ນບຸກຄົນຜູ້ທີ່ທຸກຍາກ ຫຼື ບໍ່ທຸກຍາກ ຊຶ່ງການປະເມີນດັ່ງກ່າວແມ່ນຕ້ອງໄດ້ນຳໃຊ້ Logit Model ເພື່ອວິໄຈຂໍ້ມູນທີ່ໄດ້ກ່າວມາຂ້າງເທິງນັ້ນ. Y=1 ແມ່ນບຸກຄົນທີ່ບໍ່ແມ່ນຜູ້ທີ່ທຸກຍາກ, ສ່ວນ Y= 0 ແມ່ນບຸກຄົນຜູ້ທີ່ທຸກຍາກ. ບັນດາຕົວປ່ຽນເອກະລາດ (Independent Variables) ແມ່ນ $x_i$ ຊຶ່ງຮູບແບບຂອງ Logit Model ດັ່ງກ່າວ ແມ່ນໄດ້ສະແດງອອກ*ຢູ່ໃນ*ສົມຜົນລຸ່ມນີ້:

$$Y_i^* = X_i^* \beta_i + u_i \qquad (2)$$

ໃນນີ້, $Y_i^*$ ແມ່ນຕົວປ່ຽນທີ່ວັດແທກຄວາມທຸກຍາກ, $u_i$ ແມ່ນຄ່າຜິດດ່ຽງ (*stochastic error term)* ແລະ $\beta_i$ ແມ່ນບັນດາຄ່າສາປະສິດຂອງບັນດາຕົວປ່ຽນເອກະລາດ ທີ່ເປັນຄຸນລັກສະນະຕ່າງໆຂອງຕົວຢ່າງທີ່ຕ້ອງໄດ້ຄິດໄລ່. ໂດຍອີງຕາມ *Greene (1993)*, *Ayalneh. B., et (2005)* ແລະ ສົມມຸດວ່າ ການກະຈາຍແບບສະສົມຂອງຄ່າຕົວປ່ຽນທີ່ຜິດດ່ຽງ $u_i$ ແມ່ນ logistic ຕາມຮູບແບບທີ (2) ທີ່ໄດ້ກຳນົດນຳໃຊ້ນີ້. ໃນກໍລະນີນີ້, ຄ່າໂອກາດຂອງຄວາມທຸກຍາກ ແມ່ນສາມາດປະເມີນໄດ້*ມາ*ຈາກ ສົມຜົນລຸ່ມນີ້:

$$P(Y_i = 1) = \frac{exp(X_i^* \beta)}{1+exp(X_i^* \beta)} \qquad (3)$$

Maddala (1993) ໄດ້ນຳສະເໜີກ່ຽວກັບວິທີການຄິດໄລ່ຄ່າ Marginal Effect ຂອງບັນດາຕົວປ່ຽນເອກະລາດ (independent variables $X_i^*$) ໃນສົມຜົນທີ່ສະແດງອອກໃນຮູບແບບຂອງ Logit Model*.* ເນື່ອງຈາກວ່າສົມຜົນເສັ້ນຊື່ແມ່ນມີຄ່າ Marginal Effect ເປັນຄ່າຄົງທີ່. ດັ່ງນັ້ນ, ໃນຮູບແບບຂອງ Logit Model ພວກເຮົາຕ້ອງໄດ້ຄິດໄລ່ຄ່າ Marginal Effect ຈາກບັນດາຕົວສາປະສິດຕ່າງໆ $\beta_i$ ເພື່ອປະເມີນຄ່າໂອກາດທີ່ຈະເກີດຂຶ້ນຢູ່ໃນລະດັບຕ່າງໆ ຕາມການປ່ຽນແປງຂອງບັນດາຕົວປ່ຽນເອກະລາດ ຊຶ່ງສະແດງອອກຢູ່ໃນສົມຜົນ ດັ່ງລຸ່ມນີ້:

$$\frac{\partial P(Y_i=1)}{\partial X_i^*} = \frac{exp(X_i^* \beta)}{[1+\exp(X_i^* \beta)]} \beta_k \qquad (4)$$

ຈາກບັນດາສົມຜົນຕາມຮູບແບບດັ່ງກ່າວ, ຜົນຂອງການວິເຄາະແມ່ນໄດ້ສະແດງລາຍລະອຽດໄວ້ຢູ່ໃນພາກທີ 4 ຂ້າງລຸ່ມນີ້ ໂດຍແຍກອອກເປັນສອງຂັ້ນຕອນ ຄື: ຂັ້ນຕອນທີໜຶ່ງ ແມ່ນຈະໄດ້ອະທິບາຍເຖິງບັນດາຕົວປ່ຽນຕ່າງໆ ໃນຮູບແບບເສດຖາມິຕິ Logit Model ຊຶ່ງສະແດງອອກຢູ່ໃນຕາຕະລາງທີ 6 ທັງໃນສາມຮູບແບບ ທີ່ມີຄວາມເປັນໄປໄດ້ໃນການພົວພັນທາງດ້ານສະຖິຕິກັບຄວາມທຸກຍາກ ຊຶ່ງອາດຈະມີທັງສາຍພົວພັນທາງບວກ ແລະ ທາງລົບ. ສ່ວນຂັ້ນຕອນທີສອງແມ່ນການວິເຄາະ Marginal Effect ຂອງບັນດາຕົວປ່ຽນດັ່ງກ່າວ ທີ່ຜົນກະທົບຕໍ່ກັບຄວາມທຸກຍາກ ຊຶ່ງຜົນຂອງການວິເຄາະດັ່ງກ່າວແມ່ນສະແດງອອກໃນຕາຕະລາງທີ 7.

# 4. ຜົນຂອງການສຶກສາຄົ້ນຄວ້າ

## 4.1 ທ່າແຮງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆທີ່ເປັນເງື່ອນໄຂໃນການສະໜັບສະໜູນການຜະລິດ ແລະ ການຂາຍສິນຄ້າກະສິກຳຂອງຊາວກະສິກອນ

ນອກເໜືອຈາກທິດທາງ, ນະໂຍບາຍ ແລະ ຍຸດທະສາດລວມໃນການສົ່ງເສີມການຜະລິດກະສິກຳເປັນສິນຄ້າເພື່ອແກ້ໄຂຄວາມທຸກຍາກຂອງພັກ ແລະ ລັດຖະບານ ແຫ່ງ ສປປ.ລາວ ທີ່ໄດ້ທົບທວນໄວ້ຢູ່ໃນ ຂໍ້ 2.2 ນັ້ນແລ້ວ. ສປ

ປ.ລາວ ຍັງໄດ້ດຳເນີນການຂັບເຄື່ອນນະໂຍບາຍການຜະລິດກະສິກຳຕາມສັນຍາໂດຍພາກເອກະຊົນຢ່າງຕໍ່ເນື່ອງ ຊຶ່ງທັງສອງແຂວງນີ້ກໍ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ ເພື່ອສະໜັບສະໜູນການຄ້າຜະລິດຕະພັນກະສິກຳກັບຕ່າງປະເທດໃນຮູບແບບ 2+3 ຕາມທີ່ນາຍົກລັດຖະມົນຕີ ແຫ່ງ ສປປ.ລາວ ໄດ້ເນັ້ນໜັກໄວ້ ໃນປີ 2007 ໂດຍມີການແບ່ງກຳໄລລະຫວ່າງຜູ້ລົງທຶນ ແລະ ຊາວກະສິກອນຢ່າງສົມສ່ວນ ເພື່ອຮັບປະກັນໃຫ້ການລົງທຶນໃນທຸກໂຄງການຜະລິດກະສິກຳຕາມສັນຍາມີຄວາມສາມາດສ້າງກຳໄລໃຫ້ແກ່ຊາວກະສິກອນໄດ້.

ແຂວງອຸດົມໄຊ ແລະ ແຂວງຫຼວງນ້ຳທາ ມີຊາຍແດນຕິດຈອດກັນບັນດາແຂວງພາກເໜືອຂອງລາວ, ປະເທດມຽນມາ ແລະ ພາກໃຕ້ຂອງມົນທົນຢຸນນານ (ສປ.ຈີນ) ທີ່ເປັນຕະຫຼາດໃຫຍ່ສຳລັບການສົ່ງອອກສິນຄ້າກະສິກຳ; ມີເສັ້ນທາງຜ່ານເຊື່ອມຕໍ່ກັບດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ເພື່ອອອກໄປສູ່ ສສ.ຫວຽດນາມ, ສປ.ຈີນ, ໄທ ແລະ ມຽນມາ (ສຳລັບດ່ານຊາຍແດນທີ່ຕິດຈອດກັບ ສປ.ຈີນ ຂອງທັງສອງແຂວງ ແມ່ນມີຢູ່ຈຳນວນ 4 ດ່ານ ຄື: ດ່ານທ້ອງຖິ່ນພູຫຼັກຄຳ (ອຸດົມໄຊ), ດ່ານສາກົນ ບໍ່ເຕັນ-ບໍ່ຫານ, ດ່ານທ້ອງຖິ່ນປາງໄຮ ແລະ ດ່ານປະເພນີບ້ານມອມ (ຫຼວງນ້ຳທາ); ນອກຈາກນີ້ກໍ່ຍັງມີດ່ານສາກົນ ລາວ-ມຽນມາ ອີກໜຶ່ງແຫ່ງຢູ່ທີ່ຂົວມິດຕະພາບ ລາວ-ມຽນມາ (ຫຼວງນ້ຳທາ).

ທັງສອງແຂວງນີ້ແມ່ນມີເຂດເສດຖະກິດຢູ່ 2 ແຫ່ງ ຄື: ເຂດເສດຖະກິດພິເສດ ບໍ່ເຕັນ-ບໍ່ຫານ (ຫຼວງນ້ຳທາ) ແລະ ກຳລັງຈະມີເຂດອຸດສາຫະກຳ ແລະ Smart City ຢູ່ເມືອງນາໝໍ້ (ອຸດົມໄຊ). ພ້ອມກັນນັ້ນ, ກໍ່ກຳລັງຈະມີເສັ້ນທາງລົດໄຟຄວາມໄວສູງ ແລະ ເສັ້ນທາງດ່ວນອອກຈາກດ່ານ (ເຂດເສດຖະກິດພິເສດ) ບໍ່ເຕັນ-ບໍ່ຫານ (ຫຼວງນ້ຳທາ) ຕັດຜ່ານແຂວງອຸດົມໄຊ, ຫຼວງພະບາງ, ວຽງຈັນ (ວັງວຽງ) ໄປຫານະຄອນຫຼວງວຽງຈັນ ແລ້ວເຊື່ອມຕໍ່ກັບເສັ້ນທາງລົດໄຟ ແລະເສັ້ນທາງຫຼວງຂອງໄທທີ່ຈັງຫວັດໜອງຄາຍ ແລະ ນິຄົມອຸດສາຫະກຳອຸດອນທານີ, ປະເທດໄທ. ນອກຈາກນັ້ນ, ແຂວງຫຼວງນ້ຳທາຍັງມີ 2 ທົ່ງພຽງນ້ອຍ (ນ້ຳທາ ແລະ ເມືອງສິ), ມີລະບົບຊົນລະປະທານທີ່ອຳນວຍຄວາມສະດວກໃຫ້ແກ່ການປູກພືດລະດູແລ້ງເປັນສິນຄ້າຂອງຊາວກະສິກອນ.

ໃນດ້ານການຜະລິດ ແລະ ການຄ້າຂາຍສິນຄ້າກະສິກຳ, ແຂວງຫຼວງນ້ຳທາ ແລະ ອຸດົມໄຊ, ຂອງ ສປປ.ລາວ ແລະ ມົນທົນຢຸນນານ ຂອງ ສປ.ຈີນ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການຂອງທັງສອງປະເທດ ບົນພື້ນຖານປະຕິບັດຕາມອະນຸສັນຍາ ກ່ຽວກັບຂໍ້ກຳນົດເງື່ອນໄຂດ້ານສຸຂະອານາໄມ ແລະ ສຸຂະອານາໄມພືດ (SPS) ຂອງອົງການການຄ້າໂລກ ຊຶ່ງສອງຝ່າຍໄດ້ລົງນາມເຊັນສັນຍາຮ່ວມກັນສຳລັບການສົ່ງອອກພືດ ແລະ ຜະລິດຕະພັນພືດ ຈຳນວນ 6 ພືດ ຄື: ມັນຕົ້ນ (2013), ກ້ວຍ (2013), ເຂົ້າສານ (2015), ສາລີ (2016), ໝາກໂມ (2019) ແລະ ມັນດ້າງ (2019). ໃນປີ 2020 ມູນຄ່າການສົ່ງອອກສິນຄ້າ 6 ພືດດັ່ງກ່າວ ຈາກ ສປປ.ລາວ ໄປ ຫາ ສປ.ຈີນ ມີທັງໝົດ 231 ລ້ານໂດລາສະຫະລັດ ທຽບໃສ່ປີ 2019 ເພີ່ມຂຶ້ນ 27,6% (ມູນຄ່າສົ່ງອອກ ປີ 2019 ແມ່ນ 181 ລ້ານໂດລາສະຫະລັດ) ຫຼືເທົ່າກັບ 41% ຂອງມູນຄ່າການສົ່ງອອກຜະລິດຕະພັນກະສິກຳ ແລະ ໄມ້ທັງໝົດໃນປີ 2019 (560,8 ລ້ານໂດລາສະຫະລັດ), ໃນນີ້ ພືດທີ່ມີມູນຄ່າສົ່ງອອກຫຼາຍກວ່າໝູ່ແມ່ນ ໝາກກ້ວຍ 170 ລ້ານໂດລາສະຫລັດ, ຮອງລົງມາແມ່ນສາລີອາຫານສັດ 28 ລ້ານໂດລາສະຫະລັດ, ໝາກໂມ 26 ລ້ານໂດລາສະຫະລັດ, ມັນດ້າງ 10 ລ້ານໂດລາສະຫະລັດ ແລະ ເຂົ້າ 5 ລ້ານໂດລາສະຫະລັດ *(ກະຊວງກະສິກຳ ແລະ ປ່າໄມ້, 2021)*.

ນອກຈາກນີ້, ສປປ.ລາວ ຍັງໄດ້ຮ່ວມມືກັບ ສປ.ຈີນ (ມົນທົນຢູນານ) ໃນການປະຕິບັດສັນຍາການຄ້າຊາຍແດນໃນການສົ່ງອອກພືດ ແລະ ຜະລິດຕະພັນພືດຕາມສັນຍາການຄ້າຊາຍແດນ ພາຍໃຕ້ໂຄງການຮ່ວມມື ລາວ-ຈີນ ປູກພືດທົດແທນການປູກຝິ່ນ ຕາມນະໂຍບາຍຂອງສອງປະເທດ ຊຶ່ງໄດ້ກຳນົດໂກຕ້າໃນແຕ່ລະປີທີ່ແຕກຕ່າງກັນໃຫ້ 5 ແຂວງພາກເໜືອຂອງ ສປປ.ລາວ ຄື: ແຂວງຜົ້ງສາລີ, ອຸດົມໄຊ, ຫຼວງນ້ຳທາ, ບໍ່ແກ້ວ ແລະ ຫຼວງພະບາງ. ໂຄງການດັ່ງກ່າວໄດ້ກຳນົດໃຫ້ 16 ລາຍການພືດ ຄື: ໝາກເດືອຍ, ໝາກຖົ່ວເບີ, ຖົ່ວຍາວ, ຖົ່ວເຫຼືອງສົດ, ຖົ່ວຂຽວ, ຖົ່ວດຳ, ໝາກເຜັດສົດ, ໝາກມ່ວງຫິມມະພານ, ໝາກໂຕ່ນ, ຫົວພຸກແຫ້ງ, ໝາກຖົ່ວດິນ, ໝາກແໜ່ງ, ໝາກສະໝອງ, ເກດສະໜາ, ມັນປ່າ ແລະ ພືດເປັນຢາ. ໃນປີ 2020 ການສົ່ງອອກພືດທົດແທນການປູກຝິ່ນດັ່ງກ່າວໄປ ສປ.ຈີນ ຜ່ານດ່ານກັກກັນພືດສາກົນ ບໍ່ເຕັນ-ບໍ່ຫານ ແຂວງຫຼວງນ້ຳທາ ແລະ ດ່ານກັກກັນພືດສາກົນລານຕຸຍ ແຂວງຜົ້ງສາລີ ມີມູນຄ່າທັງໝົດ 17,6 ລ້ານໂດລາສະຫະລັດ

*(ກະຊວງກະສິກຳ ແລະ ປ່າໄມ້, 2021)*. ເຖິງວ່າມູນຄ່າການຄ້າສິນຄ້າດັ່ງກ່າວ ຈະບໍ່ສູງປານໃດເມື່ອທຽບໃສ່ 6 ພືດ ທີ່ໄດ້ເຊັນສັນຍາຮ່ວມກັນກ່ອນໜ້ານັ້ນ ແຕ່ໂຄງການດັ່ງກ່າວກໍ່ເປັນເງື່ອນໄຂອັນດີໃນການຊ່ວຍຫຼຸດຜ່ອນການປູກຝິ່ນ, ການເຮັດໄຮ່ແບບເລື່ອນລອຍ ແລະ ເຮັດໃຫ້ປະຊາຊົນຊາວກະສິກອນທີ່ຢູ່ໃນຂົງເຂດດັ່ງກ່າວ ມີທາງເລືອກເພີ່ມຕື່ມໃນການເຮັດກະສິກຳແບບຍືນຍົງ.

ອີກດ້ານໜຶ່ງ, ສປປ.ລາວ ໄດ້ຮັບໂຄຕ້າພິເສດໃນການສົ່ງອອກສິນຄ້າກະສິກຳໄປ ສປ.ຈີນ 2 ລາຍການ ຄື: ເຂົ້າ 50.000 ໂຕນ/ປີ ແລະ ງົວ 500.000 ໂຕ/ປີ, ແຕ່ໃນໄລຍະຜ່ານມາແມ່ນຍັງບໍ່ທັນສາມາດສົ່ງງົວໄປຂາຍຢູ່ ສປ.ຈີນ ໄດ້ເທື່ອ ເນື່ອງຈາກສະຖານທີ່ກັກກັນງົວ (ຫອມງົວ) ຍັງບໍ່ທັນເປັນລະບົບ. ແຕ່ມາຮອດຕົ້ນປີ 2021 ນີ້, ສປ.ຈີນ ໄດ້ປະກາດຮັບຮອງເອົາເຂດປອດພະຍາດປາກເປື່ອຍລີ້ນເລັບໃນເນື້ອທີ່ 5,6 ກິໂລຕາແມັດ ທີ່ຕັ້ງຢູ່ບ້ານນາຄຳ, ເມືອງສິງ, ແຂວງຫຼວງນ້ຳທາ ທີ່ເປັນເງື່ອນໄຂໃນການສົ່ງອອກງົວຢ່າງເປັນທາງການແລ້ວ ໂດຍຜ່ານສູນກັກກັນສັດຢູ່ເຂດປອດພະຍາດດັ່ງກ່າວ.

ສຳລັບອຸດສາຫະກຳແປຮູບຜະລິດຕະພັນກະສິກຳຢູ່ພາຍໃນ 2 ແຂວງ ເພື່ອຮອງຮັບຜົນຜະລິດກະສິກຳຂອງຊາວກະສິກອນກໍ່ມີຢູ່ແລ້ວຈຳນວນໜຶ່ງ, ເປັນຕົ້ນແມ່ນໂຮງງານຜະລິດທົ່ວອາຫານສັດທີ່ມີກຳລັງການຜະລິດ 50.000 ໂຕນຕໍ່ປີ (ປັດຈຸບັນຜະລິດໄດ້ພຽງແຕ່ 4.000-5.000 ໂຕຕໍ່ປີ ຍ້ອນການຕະຫຼາດຍັງບໍ່ທັນກວ້າງຂວາງ), ແຮງງານປຸງແຕ່ງຊາຕົ້ມນ້ຳ (ຢູ່ເມືອງນາໝໍ້, ແຂວງອຸດົມໄຊ), ໂຮງງານປຸງແຕ່ງຢາງພາລາ ແລະ ຢາສູບຂັ້ນຕົ້ນ (ຢູ່ແຂວງຫຼວງນ້ຳທາ) ແລະ ຍັງມີໂຮງງານປຸງແຕ່ງຜົນຜະລິດກະສິກຳອື່ນໆອີກຈຳນວນໜຶ່ງຢູ່ໃນທັງ 2 ແຂວງ, ມີຟາຣ໌ມລ້ຽງຫອມ ແລະ ກັກກັນງົວຂະໜາດໃຫຍ່ 3 ແຫ່ງ ຢູ່ແຂວງຫຼວງນ້ຳທາ ເພື່ອສົ່ງອອກໄປຈີນ ອັນຈະກາຍເປັນການສົ່ງເສີມ ແລະ ຮອງຮັບການລ້ຽງງົວ ແລະ ການປູກຫຍ້າລ້ຽງງົວຂອງປະຊາຊົນ ຊຶ່ງຈະເປັນກິດຈະກຳທາງການກະສິກຳໃໝ່ທີ່ເກີດຂຶ້ນສຳລັບຊາວກະສິກອນຢູ່ໃນສອງແຂວງນີ້. ອັນສຳຄັນທີ່ສຸດແມ່ນມີຕະຫຼາດໃຫຍ່ ຂອງ ສປ.ຈີນ ທີ່ກຳລັງຮອງຮັບຜົນຜະລິດພືດ ແລະ ສັດລ້ຽງ ຂອງ ສປປ.ລາວ ເປັນຈຳນວນຫຼວງຫຼາຍ ເປັນຕົ້ນແມ່ນມີໂຮງງານຂ້າສັດທັນສະໄໝ ແລະ ໂຮງງານນ້ຳຕານຂະໜາດໃຫຍ່ຢູ່ຟາກຝັ່ງຊາຍແດນຈີນເຂດເມືອງພົງ (ເມືອງພຸງ) ທີ່ຫ່າງຈາກຊາຍແດນເມືອງສິງເຂົ້າໄປພຽງບໍ່ເທົ່າໃດກິໂລແມັດ.

## 4.2 ການຜະລິດ ແລະ ການສະໜອງສິນຄ້າກະສິກຳຂອງຊາວກະສິກອນ

ໃນໄລຍະທົດສະວັດກວ່າໆທີ່ຜ່ານມານີ້ ສັງເກດເຫັນວ່າການຜະລິດສິນຄ້າກະສິກຳຂອງຊາວກະສິກອນຢູ່ແຂວງອຸດົມໄຊ ແລະ ຫຼວງນ້ຳທາ ແມ່ນມີການຂະຫຍາຍຕົວຂຶ້ນເປັນກ້າວໆ ເນື່ອງຈາກເລີ່ມມີໜໍ່ແໜງໃນການຫັນເປັນກຸ່ມການຜະລິດ ແລະ ຄ້າຂາຍ, ລວມທັງການຜະລິດຊີ້ນ ແລະ ປາ ກໍ່ເລີ່ມມີການຫັນເປັນຟາຣ໌ມແດ່ແລ້ວ. ພືດສິນຄ້າທີ່ຜະລິດຫຼາຍຢູ່ໃນເຂດນີ້ແມ່ນຢາງພາລາ, ກ້ວຍ, ອ້ອຍ, ມັນຕົ້ນ, ສາລີ, ເຂົ້າ, ໝາກໂມ, ມັນດ້າງ, ໝາກອຶ, ໝາກແຕງ, ຊາຕົ້ມນ້ຳ ແລະ ພືດຕະກູນຖົ່ວ. ເຖິງຢ່າງໃດກໍ່ຕາມ, ໂດຍລວມແລ້ວການຜະລິດກະສິກຳເປັນສິນຄ້າຂອງ 2 ແຂວງນີ້ ສ່ວນໃຫຍ່ກໍ່ຍັງແມ່ນການຜະລິດຂະໜາດນ້ອຍ, ກະແຈກກະຈາຍ, ຂຶ້ນກັບທຳມະຊາດ ແລະ ຜະລິດຕາມລະດູການເປັນສ່ວນໃຫຍ່; ຍັງເປັນການຜະລິດທີ່ມີສະມັດຕະພາບຕໍ່າ, ຄຸນນະພາບບໍ່ສູງ, ຍັງບໍ່ມີການແບ່ງເຂດຜະລິດສະເພາະເພື່ອສະໜອງວັດຖຸດິບໃຫ້ແກ່ອຸດສາຫະກຳປຸງແຕ່ງ. ການຜະລິດກະສິກຳຍັງບໍ່ທັນເປັນຕ່ອງໂສ້ທີ່ຄົບວົງຈອນ, ການຜະລິດຍັງບໍ່ທັນຕິດພັນກັບການປຸງແຕ່ງ ແລະ ຕະຫຼາດພໍປານໃດ, ການຈັດຕັ້ງການຜະລິດບໍ່ທັນເຂັ້ມແຂງແທ້ ແລະ ຍັງບໍ່ທັນມີສະຫະກອນການຜະລິດຈັກແຫ່ງຢູ່ໃນ 2 ແຂວງນີ້ ຊຶ່ງຍັງຜະລິດ ແລະ ຂາຍພໍໃຜພໍມັນຢູ່ (ກຸ່ມການຜະລິດທີ່ມີໜໍ່ແໜງແດ່ແລ້ວນັ້ນກໍ່ແມ່ນມາຈາກໂຄງການຊ່ວຍເຫຼືອເທົ່ານັ້ນ, ພາກລັດຍັງບໍ່ໄດ້ໃຫ້ການສະໜັບສະໜູນຢ່າງພຽງພໍ ແລະ ເຕັມທີ່). ກຳລັງການຜະລິດຍັງອ່ອນນ້ອຍ, ຫຼ້າຫຼັງ ເຊັ່ນ: ການນຳໃຊ້ກົນຈັກ, ເຕັກນິກ-ເຕັກໂນໂລຊີ ແລະ ວິທະຍາສາດຍັງຈຳກັດ, ຊາວກະສິກອນຍັງຂາດຄວາມຮູ້ດ້ານການປູກ-ການລ້ຽງ ແລະ ການປຸງແຕ່ງ, ແຕ່ກໍ່ມີຈຳນວນໜຶ່ງທີ່ຄົນຈີນເປັນຜູ້ຜະລິດ ຫຼື ມີການຮ່ວມມືຜະລິດລະຫວ່າງ ລາວ-ຈີນ ຕາມສັນຍາການຜະລິດ ແລະ ການຊື້-ຂາຍ ທີ່ໄດ້ຮັບການສະໜັບສະໜູນທາງດ້ານເຕັກນິກຈາກຝ່າຍຈີນ (ຜູ້ຜະລິດຢູ່ໃນສອງແຂວງນີ້ແມ່ນມີທັງຄົນຈີນ ແລະ ຄົນລາວ ທີ່ຜະລິດເພື່ອຕອບສະໜອງໃຫ້ແກ່ຕະຫຼາດພາຍໃນ ແລະ ສົ່ງອອກໄປຍັງ ສປ.ຈີນ ເປັນຫຼັກ). ສຳລັບການຜະລິດພືດຜັກສະບຽງອາຫານຕອບສະໜອງຕະຫຼາດພາຍໃນ

ແມ່ນເຫັນວ່າພຽງພໍ ແລະ ສາມາດສົ່ງອອກໄປຈີນນຳອີກ; ໝູ, ສັດປີກ ແລະ ປາ ກໍ່ພໍກຸ້ມກິນຢູ່ພາຍໃນແຂວງ, ແຕ່ປະເພດຊີ້ນ ແລະ ໄຂ່ແມ່ນຍັງບໍ່ພຽງພໍ ຈຶ່ງຈຳຕ້ອງນຳເຂົ້າຈາກຕ່າງແຂວງ ແລະ ຕ່າງປະເທດ. ໃນ 9 ເດືອນ ຂອງ ປີ 2020 ຜ່ານມານີ້ ແມ່ນສາມາດຜະລິດພືດເປັນສິນຄ້າໄດ້ທັງໝົດ 898.628 ໂຕນ, ມີງົວ 72.105 ໂຕ, ຄວາຍ 31.739 ໂຕ, ແບ້ 48.536 ໂຕ, ໝູ 253.825 ໂຕ, ສັດປີກ 1.809.731 ໂຕ, ປາ 7.352 ໂຕນ ແລະ ໄຂ່ ປະມານ 1.173 ໂຕນ.

ສຳລັບການຄ້າ-ຂາຍຜົນຜະລິດກະສິກຳຢູ່ໃນ 2 ແຂວງນີ້ ແມ່ນມີທັງຂາຍໃຫ້ແກ່ຜູ້ຄ້າມືກາງຂອງລາວ ເປັນຕົ້ນແມ່ນສາລີອາຫານສັດ, ມັນຕົ້ນ, ມັນດ້າງ, ໝາກອຶ ແລະ ຢາງພາລາ ແລ້ວສົ່ງອອກໄປ ສປ.ຈີນ ແລະ ມີບາງສ່ວນກໍ່ສົ່ງອອກໄປໄທ ແລະ ຫວຽດນາມ; ສ່ວນພໍ່ຄ້າຄົນຈີນແມ່ນມັກຈະມາເຊົ່າທີ່ດິນ ແລະ ຈ້າງແຮງງານລາວທຳການຜະລິດ ໂດຍທີ່ພໍ່ຄ້າຄົນຈີນເປັນຜູ້ຮັບຜິດຊອບດ້ານຕົ້ນທຶນ, ເຕັກນິກ ແລະ ກໍ່ເກັບກ່ຽວຜົນຜະລິດສົ່ງໄປ ສປ.ຈີນ ດ້ວຍຕົນເອງ ເປັນຕົ້ນແມ່ນກ້ວຍ, ອ້ອຍ, ໝາກໂມ, ໝາກແຕງ ແລະ ພືດຕະພືດຕະກູນຖົ່ວຕ່າງໆ. ສຳລັບຈຳພວກໝາກໄມ້, ຜັກສົດ, ປາ, ໝູ ແລະ ສັດປີກ ແມ່ນຜະລິດ ແລະ ຈຳໜ່າຍຕອບສະໜອງຢູ່ໃນຕະຫຼາດພາຍໃນເຂດການສຶກສາເປັນຫຼັກ ແລະ ສ່ວນອີກຈຳນວນໜ້ອຍໜຶ່ງກໍ່ສົ່ງໄປຕ່າງແຂວງນຳອີກ. ຜ່ານການຊຸກຍູ້ສົ່ງເສີມການຜະລິດກະສິກຳເປັນສິນຄ້າມາໃນທົດສະວັດກວ່າໆນີ້ ເຫັນວ່າປະຊາຊົນໃນສອງແຂວງນີ້ໄດ້ສຸມໃສ່ການຜະລິດຢ່າງເປັນຂະບວນ ເຮັດໃຫ້ຊາວກະສິກອນຈຳນວນຫຼາຍມີລາຍຮັບເປັນເງິນຕາ, ມີຊີວິດການເປັນຢູ່ທີ່ດີຂຶ້ນ ແລະ ອັດຕາຄວາມທຸກຍາກກໍ່ຫຼຸດລົງເປັນກ້າວໆ.

## 4.3 ຂະບວນການຄ້າຂາຍສິນຄ້າຂ້າມຊາຍແດນ

ແຜນທີ່ເສັ້ນທາງໃນການອຳນວຍຄວາມສະດວກດ້ານການຄ້າຂອງ ສປປ.ລາວ ສຳລັບ 2017-2022 ແມ່ນມີຄວາມສຳຄັນມາຢ່າງຕໍ່ເນື່ອງ ໃນການອຳນວຍຄວາມສະດວກໃຫ້ແກ່ການຄ້າ ຍ້ອນວ່າມັນໄດ້ປະຕິບັດຕາມແນວທາງ ແລະ ຈຸດປະສົງ-ເປົ້າໝາຍດຽວກັນ. ເຖິງຢ່າງໃດກຕາມ, ຄວາມແຕກຕ່າງແມ່ນມີຢູ່ໃນຈຸດສຸມ ແລະ ບຸລິມະສິດບາງອັນ ຍ້ອນວ່າແຜນທີ່ເສັ້ນທາງໃນການອຳນວຍຄວາມສະດວກໃຫ້ແກ່ການຄ້າໃໝ່ນີ້ ແມ່ນເນັ້ນໜັກໃສ່ການປັບປຸງກົນໄກການຈັດສົ່ງ ແລະ ມາດຕະການອຳນວຍຄວາມສະດວກດ້ານການຄ້າໃຫ້ດີກວ່າເກົ່າ ເພື່ອໃຫ້ເຂົາເຈົ້າປະຕິບັດຢ່າງເປັນເອກະພາບກັນໃນຂອບເຂດທົ່ວປະເທດ ແລະ ຮັບປະກັນວ່າຜົນປະໂຫຍດທີ່ຕັ້ງໄວ້ນັ້ນຈະບັນລຸຄວາມເພິ່ງພໍໃຈຂອງພາກເອກະຊົນ.

**ຮູບສະແດງທີ 10: ຕົວຢ່າງລະບົບການຜະລິດອ້ອຍຕາມສັນຍາຢູ່ເມືອງສິງ, ແຂວງຫຼວງນ້ຳທາ**




*ແຫຼ່ງຂໍ້ມູນ: ພະນົມ ເຄືອໄທ + ສະຖາບັນດົດ ອິນສີຊຽງໃໝ່ ແລະ ຄະນະ, 2012*

ແຂວງອຸດົມໄຊ ແລະ ຫຼວງນ້ຳທາ ມີຊາຍແດນຕິດຈອດ ແລະ ມີດ່ານເຂົ້າອອກເມືອງກັບ ສປ.ຈີນ ຫຼາຍດ່ານ, ປະຊາຊົນສອງຊາດຢູ່ໃນເຂດຊາຍແດນ ລາວ-ຈີນ ມີມູນເຊື້ອໃນການເຮັດການກະສິກຳ ແລະ ມີການຄ້າ-ຂາຍນຳກັນມາແຕ່ບູຮານນະການ. ມາຮອດປັດຈຸບັນນີ້, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ມີການເຈລະຈາດ້ານເຕັກນິກໃນການເປີດຕະຫຼາດ ແລະ ເຊັນສັນຍາສົ່ງສິນຄ້າກະສິກຳຂ້າມແດນໄປ ສປ.ຈີນ ສຳເລັດແລ້ວ 23 ລາຍການ (ລວມທັງງົວ), ໄປໄທ 12 ລາຍການ, ໄປຫວຽດນາມ 13 ລາຍການ ແລະ ອີຢູກໍ່ປະກາດຮັບທຸກປະເພດສິນຄ້າກະສິກຳທີ່ໄດ້ມາດຖານສຸຂະອະນາໄມຈາກ ສປປ.ລາວ ໄປຍັງອີຢູ ຊຶ່ງເປັນຜົນເຮັດໃຫ້ການຄ້າສິນຄ້າກະສິກຳຂ້າມແດນ ຂອງແຂວງອຸດົມໄຊ ແລະ ຫຼວງນ້ຳທາ

ມີການຂະຫຍາຍຕົວເປັນກ້າວໆ ໂດຍ 9 ເດືອນ ຂອງປີ 2020 ແມ່ນສາມາດສົ່ງອອກໄດ້ເປັນມູນຄ່າ 92.559.042 ໂດລາສະຫະລັດ ຊຶ່ງອັນທີ່ສົ່ງອອກໄດ້ຫຼາຍກວ່າໝູ່ແມ່ນສາລີອາຫານສັດ, ກ້ວຍຫອມ, ໝາກເຜັດນ້ອຍ, ຖົ່ວເບີ, ກ້ວຍອົບແຫ້ງ, ໝາກເດືອຍ, ອ້ອຍລຳ (ຮູບແບບຕົວຢ່າງໃຫ້ເບິ່ງຢູ່ໃນຮູບສະແດງທີ 10), ແກ່ນຫຍ້າ, ໝາກໂມ, ມັນດ້າງ, ໝາກອຶ, ຢາງພາລາ ແລະ ອື່ນໆ; ໃນນັ້ນ ແມ່ນສົ່ງໄປ ສປ.ຈີນ ເປັນຫຼັກ ແລະ ມີສ່ວນໜຶ່ງກໍ່ສົ່ງໄປໄທ ແລະ ຫວຽດນາມ.

ເຖິງແນວໃດກໍ່ຕາມ, ຂະບວນການຂາຍສິນຄ້າຂ້າມຊາຍແດນລະຫວ່າງ ແຂວງອຸດົມໄຊ ແລະ ຫຼວງນໍ້າທາ ເຂົ້າໄປສູ່ ສປ.ຈີນ ສ່ວນຫຼວງຫຼາຍແມ່ນຍັງບໍ່ທັນເປັນລະບົບ ແລະ ຍັງບໍ່ເປັນອັນລວມກັນໃນທຸກໆແຂວງ, ຍັງເປັນການຄ້າຊາຍແດນລະຫວ່າງພໍ່ຄ້າທ້ອງຖິ່ນ ທີ່ມີການພົວພັນແບບພີ່ນ້ອງເຄືອຍາດກັນຫຼາຍວ່າ, ພາກລັດຖະບານຍັງບໍ່ມີນະໂຍບາຍສົ່ງເສີມທີ່ລະອຽດ ແລະ ເປັນລະບົບຄົບຊຸດເທື່ອ; ສະນັ້ນ, ຈຶ່ງຍັງມີຂໍ້ຫຍຸ້ງຍາກບາງຢ່າງທີ່ທັງສອງຝ່າຍຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂຕໍ່ໄປ, ແຕ່ກໍ່ມີບາງລາຍການສິນຄ້າກະສິກຳທີ່ສົ່ງໄປ ສປ.ຈີນ ໄດ້ເຂົ້າສູ່ລະບົບ ແລະ ມີໂກຕາຄັກແນ່ ເຊັ່ນ: ອ້ອຍລຳ ແລະ ຢາງພາລາ, ສຳລັບໝາກກ້ວຍຫອມແມ່ນນັກລົງທຶນຈີນເປັນຜູ້ລົງທຶນເອງ ແລະ ຮັບຜິດຊອບດ້ານການຕະຫຼາດທັງໝົດ ໂດຍຈ້າງແຮງງານລາວເປັນຜູ້ບົວລະບັດ ແລະ ຈ່າຍຄ່າແຮງງານໃຫ້ຕາມປະລິມານຂອງຜົນຜະລິດ.

ສິນຄ້າຈາກປະເທດໄທ ແລະ ຫວຽດນາມ ສົ່ງຜ່ານປະເທດລາວ ເຂົ້າສູ່ ສປ.ຈີນ ແມ່ນມີຫຼາຍຜະລິດຕະພັນ ແລະ ມີມູນຄ່າສູງ. ໃນ 6 ເດືອນ ຕົ້ນປີ 2020 ບັນດາສິນຄ້າກະສິກຳຂອງປະເທດໃກ້ຄຽງທີ່ສົ່ງຜ່ານດ່ານ ບໍ່ເຕັນ-ບໍ່ຫານ ໄປມາຫາກັນ ແມ່ນມີດັ່ງຕາຕະລາງລຸ່ມນີ້:

**ຕາຕະລາງທີ 4: ສິນຄ້າກະສິກາທີ່ສົ່ງຜ່ານ ສປປ.ລາວ (ດ່ານ ບໍ່ເຕັນ-ບໍ່ຫານ) ໄປປະເທດຕ່າງໆ (6 ທັນວາ 2019 ຫາ 20 ມິຖຸນາ 2020)**

| ລດ | ລາຍການສິນຄ້າ | ໄທ ໄປ ຈີນ | | ຈີນ ໄປ ໄທ | | ຫວຽດນາມ ໄປ ຈີນ | | ລວມ | |
|---|---|---|---|---|---|---|---|---|---|
| | | ຈຳນວນ (ໂຕນ) | ມູນຄ່າ (ລ້ານໂດລາ) | ຈຳນວນ (ໂຕນ) | ມູນຄ່າ (ລ້ານໂດລາ) | ຈຳນວນ (ໂຕນ) | ມູນຄ່າ (ລ້ານໂດລາ) | ຈຳນວນ (ໂຕນ) | ມູນຄ່າ (ລ້ານໂດລາ) |
| 1 | ເຂົ້າສານຈ້າວ | 13.575 | 9,23 | - | - | - | - | 13.575 | 9,23 |
| 2 | ຢາງພາລາ | 3.952 | 4,74 | - | - | - | - | 3.952 | 4,74 |
| 3 | ໝາກກ້ວຍ | 13.775 | 4,13 | - | - | - | - | 13.775 | 4,13 |
| 4 | ໝາກມີ້ | 15.850 | 11,09 | - | - | - | - | 15.850 | 11,09 |
| 5 | ໝາກລຳໄຍສົດ | 62.775 | 32,95 | - | - | - | - | 62.775 | 32,96 |
| 6 | ໝາກມັດ | 16.875 | 4,22 | - | - | - | - | 16.875 | 4,22 |
| 7 | ໝາກມັງຄຸດ | 76.150 | 22,84 | - | - | - | - | 76.150 | 22,84 |
| 8 | ໝາກທຸລຽນ | 53.900 | 16,71 | - | - | - | - | 53.900 | 16,71 |
| 9 | ໝາກມ່ວງ | 3.150 | 1,19 | - | - | - | - | 3.150 | 1,19 |
| 10 | ຜັກກະລຳປີ | - | - | 71.087 | 21,33 | - | - | 71.087 | 21,32 |
| 11 | ຜັກກາດຫໍ່ | - | - | 26.053 | 7,81 | - | - | 26.053 | 7,81 |
| 12 | ໝາກແຕງຫອມ | - | - | 2.563 | 1,28 | - | - | 2.563 | 1,28 |
| 13 | ໝາກຖົ່ວລັນເຕົາ | - | - | 10.183 | 3,05 | - | - | 10.183 | 3,05 |
| 14 | ໝາກອາງຸ່ນ | - | - | 37.226 | 18,61 | - | - | 37.226 | 18,61 |
| 15 | ໝາກກ້ຽງ | - | - | 12.868 | 6,43 | - | - | 12.868 | 6,43 |
| 16 | ມັນດ້າງ | - | - | - | - | 28.913 | 23,13 | 28.913 | 23,13 |
| 17 | ອື່ນໆ | 14.191 | 6,47 | 39.677 | 15,45 | 5.639 | 0,52 | 59.507 | 22,44 |
| **ລວມທັງໝົດ** | | **274.193** | **113,60** | **199.657** | **73,97** | **34.552** | **23,65** | **508.402** | **211,23** |

*ແຫຼ່ງຂໍ້ມູນ: ດ່ານກັກກັນພືດສາກົນບໍ່ເຕັນ, ສປປ.ລາວ. ໝາຍເຫດ: ຜັກກະລຳປີ (ລຳດັບທີ 10) ມີ 5 ຊະນິດ (ຜັກກະລໍ່າປີ, ກະລໍ່າປີສີມ່ວງ, ກະລໍ່າປີດອກຂາວ, ກະລໍ່າປີດອກຂຽວ ແລະ ກະລໍ່າປີແຫຼມ)*

## 4.4 ບັນຫາຄວາມຫຍຸ້ງຍາກໃນການຜະລິດ ແລະ ການຄ້າຂາຍສິນຄ້າກະສິກຳ

ການຜະລິດ ແລະ ການຄ້າຂາຍສິນຄ້າກະສິກຳຢູ່ ແຂວງອຸດົມໄຊ ແລະ ຫຼວງນໍ້າທາ ໂດຍລວມແລ້ວແມ່ນມີການຂະຫຍາຍຕົວເປັນກ້າວໆ ແຕ່ກໍ່ຍັງມີຂໍ້ຈຳກັດ ແລະ ຂໍ້ຫຍຸ້ງຍາກບາງປະການ ເຊັ່ນ:

### 4.4.1 ດ້ານການຜະລິດ:

1) ການຜະລິດກະສິກຳເປັນສິນຄ້າຂອງ 2 ແຂວງນີ້ ສ່ວນໃຫຍ່ກໍ່ຍັງເປັນການຜະລິດຂະໜາດນ້ອຍ, ກະແຈກກະຈາຍ, ຂຶ້ນກັບທຳມະຊາດ, ຜະລິດຕາມລະດູການເປັນສ່ວນໃຫຍ່ ແລະ ຍັງບໍ່ມີການຈັດຕັ້ງເປັນກຸ່ມ-ສະຫະກອນການຜະລິດເປັນຈຳນວນຫຼາຍ ແລະ ມີຈຸດສຸມ ຈິ່ງເປັນສາເຫດເຮັດໃຫ້ມີຕົ້ນທຶນການຜະລິດສູງ, ຂາດຄວາມສາມາດໃນການແຂ່ງຂັນ ແລະ ບໍ່ສາມາດສະໜອງຜົນຜະລິດໄດ້ເປັນປົກກະຕິ (ຖ້າບໍ່ແມ່ນລະດູການຜະລິດ ແມ່ນຍັງຕ້ອງໄດ້ນຳເຂົ້າຈາກຈີນ ແລະ ໄທ).
2) ທີ່ດິນນາ ແລະ ທີ່ດິນກະສິກຳອື່ນໆຍັງບໍ່ໄດ້ຮັບການຄຸ້ມຄອງ, ວາງແຜນ, ຈັດສັນ, ແບ່ງເຂດນຳໃຊ້ສຳລັບການປູກ-ການລ້ຽງ ແລະ ຍັງບໍ່ທັນໄດ້ຂຸດຄົ້ນທ່າແຮງຕາມຄວາມສາມາດຕົວຈິງ, ເມື່ອມີນະໂຍບາຍ ແລະ ການສົ່ງເສີມກໍ່ພາກັນເຮັດຢ່າງເປັນຂະບວນ ໂດຍບໍ່ໄດ້ຄຳນຶງເຖິງຄວາມເໝາະສົມຂອງເຂດທີ່ຕັ້ງ ແລະ ຄຸນນະພາບຂອງດິນທີ່ຈະປູກ ຈິ່ງເຮັດໃຫ້ມີບາງພືດຢູ່ໃນບາງເຂດແມ່ນບໍ່ໄດ້ທັງປະລິມານ ແລະ ຄຸນນະພາບ ແລ້ວກໍ່ພາໃຫ້ຂາດທຶນ (ຕົວຢ່າງອ້ອຍ ແລະ ກ້ວຍຫອມ ຢູ່ບາງເຂດຂອງເມືອງນາໝໍ້, ແຂວງອຸດົມໄຊ).
3) ກຳລັງການຜະລິດຍັງອ່ອນນ້ອຍ, ຫຼໍ້າຫຼັງ, ການນຳໃຊ້ເຕັກນິກ-ເຕັກໂນໂລຊີ ແລະ ວິທະຍາສາດເຂົ້າໃນການຜະລິດຍັງຈຳກັດ, ຊາວກະສິກອນຈຳນວນຫຼາຍຍັງຂາດຄວາມຮູ້ດ້ານການປູກ, ການລ້ຽງ, ການປຸງແຕ່ງ ແລະ ມີຂີດຈຳກັດດ້ານການຫັນເປັນທັນສະໄໝໃນການເຊື່ອມໂຍງການຜະລິດເຂົ້າກັບເສດຖະກິດ.
4) ລະບົບຊົນລະປະທານຍັງບໍ່ທັນພຽງພໍ ແລະ ທົ່ວເຖິງ, ຍັງມີເຂດພື້ນທີ່ຮາບພຽງຈຳນວນບໍ່ໜ້ອຍທີ່ສາມາດຜະລິດກະສິກຳເປັນສິນຄ້າໄດ້ ແຕ່ກໍ່ຍັງຂາດນໍ້າຊົນລະປະທານ.
5) ການຜະລິດກະສິກຳທີ່ເປັນຕ່ອງໂສ້ບໍ່ທັນຄົບວົງຈອນ, ບໍ່ທັນຄົບຊຸດ ແລະ ຍັງບໍ່ທັນຕິດພັນກັບການປຸງແຕ່ງພໍເທົ່າໃດ; ການຈັດຕັ້ງການຜະລິດບໍ່ທັນເຂັ້ມແຂງແທ້ ແລະ ຍັງບໍ່ທັນມີສະຫະກອນການຜະລິດຈັກແຫ່ງຢູ່ໃນ 2 ແຂວງນີ້ ຊຶ່ງຍັງຜະລິດ ແລະ ຂາຍພໍໃຜພໍມັນ ຈຶ່ງເຮັດມີຄວາມຫຍຸ້ງຍາກແກ່ການເຂົ້າເຖິງສິນເຊື່ອ, ເຕັກໂນໂລຢີ, ເຕັກນິກວິຊາການ ແລະ ຂາດອຳນາດໃນການຕໍ່ລອງລາຄາ.
6) ການປ່ຽນແປງຂອງດິນຟ້າອາກາດຢ່າງກະທັນຫັນ, ໄພພິບັດທາງທຳມະຊາດ ແລະ ການລະບາດຂອງສັດຕູພືດ ກໍ່ເປັນຜົນກະທົບຮ້າຍແຮງຕໍ່ການຜະລິດກະສິກຳເປັນສິນຄ້າຂອງປະຊາຊົນຢູ່ໃນບາງປີ.
7) ສູນຄົ້ນຄວ້າກະສິກຳ ແລະ ສະຖານີບໍລິການເຕັກນິກຂັ້ນເມືອງຍັງບໍ່ທັນເຂັ້ມແຂງ, ຍັງບໍ່ທັນສາມາດເຮັດໜ້າທີ່ໃນການສະໜອງການບໍລິການໄດ້ຢ່າງເຕັມເມັດເຕັມໜ່ວຍ, ຍັງຂາດພະນັກງານວິຊາການທີ່ມີປະສົບປະການ ແລະ ຄວາມຊຳນານສະເພາະດ້ານ, ຕະຫຼອດຮອດງົບປະມານສຳລັບການເຄື່ອນໄຫວກໍ່ຍັງຈຳກັດ.
8) ງົບປະມານບໍ່ພຽງພໍກັບຄວາມຕ້ອງການ ໂດຍສະເພາະແມ່ນງົບປະມານສົ່ງເສີມວິຊາການຂອງໂຄງການສົ່ງເສີມການຜະລິດເປັນສິນຄ້າ ແລະ ການຄໍ້າປະກັນດ້ານສະບຽງອາຫານ ແມ່ນບໍ່ສາມາດອະນຸມັດໄດ້ທັນຕາມລະດູການຜະລິດ ເຮັດໃຫ້ການຈັດຕັ້ງປະຕິບັດໂຄງການພົບຂໍ້ຫຍຸ້ງຍາກ, ຊັກຊ້າ ແລະ ບໍ່ໄດ້ຮັບຜົນດີເທົ່າທີ່ຄວນ.
9) ການປະຕິບັດນະໂຍບາຍຊ່ວຍໜູນດ້ານຕ່າງໆ ກໍ່ຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ຢ່າງເປັນຮູບປະທຳເທື່ອ ຍ້ອນຍັງຂາດນິຕິກຳລະອຽດໃນການສະເໜີຂໍອະນຸມັດການຈັດຕັ້ງປະຕິບັດ, ເປັນຕົ້ນແມ່ນ: ພາສີ-ອາກອນ (ລວມທັງອາກອນມູນຄ່າເພີ່ມ), ນະໂຍບາຍສິນເຊື່ອ ແລະ ນະໂຍບາຍຫຼຸດຜ່ອນຄ່າໄຟຟ້າເພື່ອການກະສິກຳ.
10) ບັນຫາຂີ້ລັກງັດແງະ ແມ່ນຍັງເກີດມີປະຈຳຢູ່ໃນເຂດການຜະລິດ ເປັນຕົ້ນແມ່ນການລັກສາຍໄຟ ແລະ ທໍ່ນໍ້າ ຊຶ່ງພາໃຫ້ຜູ້ຜະລິດເສຍເວລາ ແລະມີ ຄ່າໃຊ້ຈ່າຍເພີ່ມຂຶ້ນ.

### 4.4.2 ດ້ານການຄ້າຂາຍ ແລະ ຈຳໜ່າຍຜະລິດຕະພັນ

1) ດັ່ງທີ່ພວກເຮົາຮູ້ແລ້ວວ່າ ຕະຫຼາດຜະລິດຕະພັນກະສິກຳທີ່ສຳຄັນຂອງ 2 ແຂວງນີ້ ແມ່ນຕະຫຼາດຂອງຈີນ ຊຶ່ງເປັນຕະຫຼາດຂ້າມຊາຍແດນ ແລະ ເປັນການຄ້າຂາຍລະຫວ່າງປະເທດ; ສະນັ້ນ, ຖ້າພວກເຮົາບໍ່ເຮັດເປັນລະບົບທີ່ດີນຳກັນ ມັນກໍ່ຈະພົບພໍ້ບັນຫາຕ່າງໆໃນດ້ານລະບຽບການ ແລະ ການປະຕິບັດຂອງທັງສອງປະເທດ ທີ່ແຕກຕ່າງກັນ ເຊັ່ນ: ປີ 2019 ສປປ.ລາວ ສາມາດສົ່ງມັນດ້າງໄປຈີນໄດ້ 10 ລ້ານກວ່າໂດລາສະຫະລັດ, ມາຮອດປີ 2020 ນີ້ ທັງ 2 ແຂວງກໍ່ໄດ້ສົ່ງເສີມການປູກມັນດ້າງໄດ້ເປັນຈຳນວນຫຼາຍ ແຕ່ພັດສົ່ງອອກໄປ ສປ.ຈີນ ບໍ່ໄດ້ເລີຍ ລວມທັງພືດຕະກຸນຖົ່ວ ຊຶ່ງຄາດວ່າມູນຄ່າຄວາມເສຍຫາຍອາດຈະສູງເຖິງ 205 ລ້ານໂດລາສະຫະລັດ *(ກະຊວງກະສິກຳ ແລະ ປ່າໄມ້, 2021)*. ສາເຫດຍ້ອນວ່າທາງອີງການຄຸ້ມຄອງບໍລິຫານດ້ານພາສີ ແຫ່ງ ສປ.ຈີນ ແລະ ນະຄອນຄຸນໝິງ, ສປ.ຈີນ ບໍ່ອະນຸຍາດໃຫ້ນຳພືດຕະກຸນຖົ່ວ ແລະ ມັນດ້າງເຂົ້າ ສປ.ຈີນ ແລະ ແຈ້ງໃຫ້ຝ່າຍລາວຊາບວ່າ ຖ້າຈະສົ່ງສິນຄ້າດັ່ງກ່າວເຂົ້າ ສປ.ຈີນ ແມ່ນຕ້ອງໄດ້ປະຕິບັດຕາມຫຼັກການການຄ້າສາກົນ ໂດຍສະເພາະແມ່ນປະຕິບັດຕາມຫຼັກການສຸຂານາໄມ ແລະ ສຸຂານາໄມພືດ (SPS) ຊຶ່ງຂະບວນການຜະລິດ ແລະ ສົ່ງອອກພືດດັ່ງກ່າວຂອງ ສປປ.ລາວ ໂດຍສະເພາະຢູ່ໃນແຂວງອຸດົມໄຊ ແລະ ຫຼວງນ້ຳທາ ແມ່ນຍັງບໍ່ທັນສາມາດປະຕິບັດໄດ້ຕາມາດຕະຖານເທື່ອ.
2) ການຄ້າສິນຄ້າກະສິກຳລະຫວ່າງ ລາວ-ຈີນ ແມ່ນເປັນການຄ້າຊາຍແດນຫຼາຍກວ່າ ແລະ ເປັນການສົ່ງເສີມໂດຍນັກທຸລະກິດແບບຄອບຄົວຢູ່ສອງຝັ່ງຊາຍແດນ, ພຽງແຕ່ພໍ່ຄ້າຄົນຈີນຄົນໃດຄົນໜຶ່ງມີໂອກາດຮັບຊື້ແລ້ວ ຈຶ່ງແຈ້ງມາໃຫ້ຜູ້ຄ້າຝ່າຍລາວເກັບຊື້ໃຫ້. ດັ່ງນັ້ນ,ຈຶ່ງມັກເກີດມີບັນຫາສິນຄ້າຜະລິດເຫຼືອ ຫຼື ບໍ່ພໍຢູ່ເປັນປະຈຳ.
3) ສຳລັບ 16 ພືດຈາກໂຄງການປູກພືດທົດແທນຝິ່ນທີ່ຝ່າຍຈີນໄດ້ເປີດໃຫ້ແກ່ການຄ້າຊາຍແດນນັ້ນ ແມ່ນຍັງບໍ່ມີໂອກາດທີ່ເປັນທາງການ ຊຶ່ງຝ່າຍລາວຕ້ອງໄດ້ສ້າງແຜນການຜະລິດ ແລະ ສົ່ງອອກໄປໃຫ້ຝ່າຍຈີນພິຈາລະນາເປັນລາຍປີໄປ ແຕ່ເລື່ອງຂັ້ນຕອນ ແລະ ຂະບວນການດຳເນີນການຕ່າງໆນັ້ນ ແມ່ນຍັງບໍ່ມີຂໍ້ມູນຈະແຈ້ງ ແລະ ຊັດເຈນເທື່ອ ຊຶ່ງແຕກຕ່າງຈາກ 6 ພືດທີ່ໄດ້ເຊັນສັນຍາຢ່າງເປັນທາງການນຳກັນມາກ່ອນໜ້ານັ້ນ.
4) ການກວດກາຄຸນນະພາບຂອງສິນຄ້າກະສິກຳລາວຍັງບໍ່ມີຄວາມເປັນເອກະພາບກັນ ໂດຍສະເພາະສາລີອາຫານສັດແມ່ນຍັງບໍ່ມີການຄັດເມັດ ແລະ ບໍ່ຢາກອົບຂ້າເຊື້ອຢູ່ກັບດ່ານລາວ ຊຶ່ງຜູ້ຄ້າມັກຈະໃຊ້ການຮົມຟົດສະຟີນເອົາເອງ ແລ້ວສົ່ງໄປຮອດເບື້ອງຈີນກໍ່ນຳເຂົ້າບໍ່ໄດ້ຖ້າບໍ່ຂ້າເຊື້ອຢູ່ກັບດ່ານຈີນກ່ອນ ຈຶ່ງພາໃຫ້ເສຍເວລາ ແລະ ເສຍຄ່າໃຊ້ ຈ່າຍເພີ່ມໃຫ້ແກ່ເບື້ອງດ່ານຈີນ.
5) ຜູ້ຄ້າຜະລິດຕະພັນກະສິກຳຂອງຝ່າຍລາວຍັງບໍ່ທັນຮັບຮູ້ ແລະ ເຂົ້າໃຈກົນໄກ-ລະບຽບການການຄ້າຂ້າມຊາຍແດນທີ່ດີເທື່ອ ຈຶ່ງມັກມີບັນຫາຢູ່ປາຍທາງ ແລະ ເມື່ອແກ້ໄຂກັນບໍ່ໄດ້ກໍ່ມັກຈະຖິ້ມໂທດໃສ່ພາກລັດຖະບານ.
6) ຝ່າຍຈີນບໍ່ໄດ້ແຈ້ງຂໍ້ມູນ ແລະ ມີໜັງສືໃຫ້ຝ່າຍລາວຮັບຊາບຢ່າງເປັນທາງການໃນລາຍລະອຽດຕ່າງໆ ຈຶ່ງເຮັດໃຫ້ການປະສານງານຮ່ວມມືກັບເຈົ້າໜ້າທີ່ໆກ່ຽວຂ້ອງປະຈຳດ່ານສາກົນ ລາວ-ຈີນ (ບໍ່ເຕັນ-ບໍ່ຫານ) ມີຄວາມຫຍຸ້ງຍາກ ແລະ ເຮັດໃຫ້ການແກ້ໄຂບັນຫາຕ່າງໆຊັກຊ້າ.
7) ເສັ້ນທາງຄົມມະນາຄົມຂົນສົ່ງສິນຄ້າຍັງມີຄວາມຫຍຸ້ງຍາກ (ຜ່ານເຂດພູສູງ ແລະ ຄ້ອຍຊັນ) ມັກເກີດອຸປະຕິເຫດ ແລະ ເຮັດໃຫ້ມີຕົ້ນທຶນໃນການຂົນສົ່ງສູງຫຼາຍ.
8) ລາຄາສິນຄ້າກະສິກຳບໍ່ປົກກະຕິ ແລະ ບາງເທື່ອ ຫຼື ບາງປີກໍ່ຕົກຕ່ຳຫຼາຍ ເພາະວ່າຜູ້ຊື້ເປັນຜູ້ມີອຳນາດໃນການກຳໜົດຕະຫຼາດຫຼາຍກວ່າຜູ້ຜະລິດ, ແລະ ຂະແໜງການຄ້າກໍ່ຍັງບໍ່ທັນເຮັດໜ້າທີ່ໄດ້ດີເທົ່າທີ່ຄວນ.

## 4.5 ຜົນທາງດ້ານເສດຖາມິຕິຕໍ່ກັບຄວາມທຸກຍາກ

### 4.5.1 ການປຽບທຽບຄຸນລັກສະນະຕ່າງໆລະຫວ່າງຜູ້ທີ່ທຸກຍາກ ແລະ ຜູ້ທີ່ພົ້ນທຸກ

ໂດຍທົ່ວໄປແລ້ວ, ຄວາມທຸກຍາກແມ່ນສະແດງອອກໃນຫຼາຍມິຕິ ແລະ ມີຫຼາຍປັດໄຈທີ່ສົ່ງຜົນກະທົບກໍ່ໃຫ້ເກີດຄວາມທຸກຍາກ ຊຶ່ງເຫັນໄດ້ເຖິງຄວາມແຕກຕ່າງລະຫວ່າງສະຖານະພາບຂອງກຸ່ມຄົນຜູ້ທີ່ທຸກຍາກ ແລະ ຜູ້ທີ່ພົ້ນທຸກ. ໃນຫຼາຍໆກໍລະນີ, ປັດໄຈສາຄັນທີ່ເຮັດໃຫ້ເຫັນເຖິງຄວາມແຕກຕ່າງດັ່ງກ່າວນັ້ນ ແມ່ນຄຸນລັກສະນະ ແລະ

ສະຖານະພາບຂອງຄົວເຮືອນ ຫຼື ບຸກຄົນຜູ້ທີ່ທຸກຍາກນັ້ນເອງ ຊຶ່ງກໍ່ມີຫຼາຍບົດຄົ້ນຄວ້າໄດ້ພິສູດໃຫ້ເຫັນຜ່ານມາແລ້ວ. ຕາຕະລາງທີ 4 ໃນບົດລາຍງານນີ້ ໄດ້ສະແດງໃຫ້ເຫັນເຖິງຕົວເລກການປຽບທຽບບັນດາຄຸນລັກສະນາຕ່າງໆ ລະຫວ່າງກຸ່ມຄົນຜູ້ທີ່ທຸກຍາກ ແລະ ກຸ່ມຄົນຜູ້ທີ່ພົ້ນທຸກແລ້ວ. ໂດຍສະເລັ່ຍແລ້ວ, ກຸ່ມຄົນຜູ້ທຸກຍາກຈະມີອາຍຸໜຸ່ມກວ່າກຸ່ມຄົນຜູ້ທີ່ພົ້ນທຸກ (ປະມານ 5 ປີ), ເຂົາເຈົ້າມີຈຳນວນສະມາຊິກໃນຄົວເຮືອນຫຼາຍກວ່າ ແລະ ມີລະດັບການສຶກສາຕໍ່າກວ່າ, ໂດຍກຸ່ມຄົນຜູ້ທີ່ທຸກຍາກສ່ວນໃຫຍ່ຈະແມ່ນກຸ່ມຊົນເຜົ່າ (ກວມເອົາປະມານ 95% ຂອງກຸ່ມຜູ້ທີ່ທຸກຍາກທັງໝົດ). ກຸ່ມຄົນຜູ້ທີ່ພົ້ນທຸກແລ້ວ ຈະມີການປະກອບອາຊີບໃນການຊອກຫາລາຍໄດ້ເພື່ອລ້ຽງຄອບຄົວ ທີ່ຫຼາກຫຼາຍອາຊີບກວ່າກຸ່ມຄົນຜູ້ທີ່ຍັງທຸກຍາກຢູ່ ໂດຍກຸ່ມຄົນຜູ້ທີ່ພົ້ນທຸກແລ້ວນັ້ນ ແມ່ນມີປະມານ 24% ທີ່ປະກອບອາຊີບຢູ່ໃນຂະແໜງການທີ່ບໍ່ແມ່ນການກະສິກຳ (ເປັນຕົ້ນແມ່ນພະນັກງານ, ຊາວຄ້າຂາຍ ແລະ ນັກທຸລະກິດ) ເມື່ອສົມທຽບກັບກຸ່ມຄົນຜູ້ທີ່ທຸກຍາກ ແມ່ນມີພຽງແຕ່ 7% ເທົ່ານັ້ນທີ່ປະກອບອາຊີບຫຼັກໃນຂະແໜງການທີ່ບໍ່ແມ່ນການກະສິກຳ. ກຸ່ມຄົນຜູ້ທຸກຍາກທີ່ດຳລົງຊີວິດໃນເຂດຕົວເມືອງ ແມ່ນມີພຽງແຕ່ 7% ເທົ່ານັ້ນ ເມື່ອສົມທຽບໃສ່ກຸ່ມຄົນຜູ້ທີ່ພົ້ນທຸກແລ້ວ ແມ່ນມີຢູ່ເຖິງ 30%, ແຕ່ໂດຍສະເລ່ຍຈາກຈຳນວນຕົວຢ່າງທັງໝົດນັ້ນແລ້ວ ແມ່ນມີຢູ່ປະມານ 24% ເທົ່ານັ້ນ ທີ່ດຳລົງຊີວິດໃນເຂດຕົວເມືອງ.

ຄຳທີ່ວ່າ " **ຄວາມທຸກຍາກ"** ຢູ່ໃນບົດລາຍງານນີ້ ແມ່ນເປັນການສົມທຽບມູນຄ່າການຊົມໃຊ້ຂອງບຸກຄົນຢູ່ໃນແຂວງຫຼວງນ້ຳທາ ແລະ ອຸດົມໄຊ; ຖ້າຫາກວ່າການຊົມໃຊ້ຕໍ່ຫົວຄົນຕໍ່ເດືອນຫາກສູງກວ່າເສັ້ນຄວາມທຸກຍາກແຫ່ງຊາດ ທີ່ກຳນົດໄວ້ ປະມານ 280.910 ກີບ/ຄົນ/ເດືອນ *(LSB, LECS VI 2018-2019)* ແມ່ນຖືວ່າເປັນບຸກຄົນຜູ້ທີ່ພົ້ນທຸກ. ໃນຕາຕະລາງທີ 4 ຂ້າງລຸ່ມນີ້ ສະແດງໃຫ້ເຫັນວ່າຄ່າສະເລັ່ຍຂອງການຊົມໃຊ້ສຳລັບກຸ່ມຄົນຜູ້ທີ່ທຸກຍາກ ແມ່ນຢູ່ທີ່ປະມານ 220.751 ກີບ/ຄົນ/ເດືອນ, ຖ້າສົມທຽບໃສ່ກຸ່ມຄົນຜູ້ທີ່ພົ້ນທຸກແລ້ວນັ້ນ ແມ່ນຕໍ່າກວ່າ 4 ເທົ່າ ຊຶ່ງມີຢູ່ທີ່ປະມານ 1.053.218 ກີບ/ຄົນ/ເດືອນ. ໂດຍສະເລ່ຍແລ້ວກຸ່ມຄົນຜູ້ທີ່ທຸກຍາກແມ່ນມີຊັບສິນໜ້ອຍກວ່າກຸ່ມຄົນຜູ້ທີ່ພົ້ນທຸກແລ້ວເກືອບ 10 ເທົ່າ ແລະ ການເຂົ້າເຖິງເງິນກູ້ຢືມກໍ່ໜ້ອຍກວ່າກຸ່ມຄົນຜູ້ທີ່ພົ້ນທຸກ. ໃນດ້ານການຜະລິດ, ເຖິງແມ່ນວ່າຂະໜາດຂອງການຄອບຄອງທີ່ດິນສຳລັບການຜະລິດກະສິກຳຈະບໍ່ມີຄວາມແຕກຕ່າງກັນປານໃດກໍ່ຕາມ ແຕ່ໂດຍສະເລັ່ຍແລ້ວ ເຫັນວ່າກຸ່ມຄົນຜູ້ທີ່ທຸກຍາກຈະໄດ້ຮັບຜົນຜະລິດຈາກການກະສິກຳ ໜ້ອຍກວ່າກຸ່ມຄົນຜູ້ທີ່ພົ້ນທຸກປະມານ 30% ແລະ ລວມຍອດການຂາຍຜົນຜະລິດກະສິກຳໂດຍສະເລັ່ຍຂອງເຂົາເຈົ້າກໍ່ຕໍ່າກວ່າກຸ່ມຄົນຜູ້ທີ່ພົ້ນທຸກ ເຖິງ 50%, ເຖິງແມ່ນວ່າກຸ່ມຄົນຜູ້ທີ່ທຸກຍາກຈະໄດ້ຮັບການແນະນຳຈາກພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການຜະລິດກະສິກຳແມ່ນມີຢູ່ສູງກວ່າກຸ່ມຄົນຜູ້ທີ່ພົ້ນທຸກກໍ່ຕາມ. ເມື່ອປຽບທຽບການຜະລິດສິນຄ້າຂອງກຸ່ມຄົນຜູ້ທີ່ພົ້ນທຸກນຳກັນແລ້ວ ແມ່ນເຫັນວ່າກຸ່ມຄົນຜູ້ທີ່ດຳລົງຊີວິດຢູ່ໃນຂົງເຂດທີ່ມີຊາຍແດນຕິດກັບ ສປ.ຈີນ ແມ່ນມີຄ່າສະເລັ່ຍຂອງຜົນຜະລິດສູງກວ່າກຸ່ມຄົນຜູ້ທີ່ດຳລົງຊີວິດ ຢູ່ໃນເຂດທີ່ຈະມີສະຖານີລົດໄຟ ລາວ-ຈີນ ຕັ້ງຢູ່ ປະມານ 8 ເທົ່າ. ໃນດ້ານການຂາຍສິນຄ້າກະສິກຳ, ຄ່າສະເລັ່ຍໂດຍລວມຂອງການຂາຍສິນຄ້າກະສິກຳຂອງກຸ່ມຄົນຜູ້ທີ່ທຸກຍາກ ແມ່ນຕໍ່າກວ່າກຸ່ມຄົນທີ່ພົ້ນທຸກປະມານໜຶ່ງເທົ່າຕົວ, ເມື່ອພິຈາລະ ນາຕາມເງື່ອນໄຂຂອງເຂດຊາຍແດນ ແລະ ເມືອງທີ່ຈະມີສະຖານີລົດໄຟຕັ້ງ ເຫັນວ່າຄ່າສະເລັ່ຍຂອງຍອດການຂາຍສິນຄ້າກະສິກຳຂອງກຸ່ມຄົນທີ່ຢູ່ໃນເຂດຊາຍແດນ ກໍ່ສູງກວ່າກຸ່ມຄົນທີ່ຢູ່ໃນເຂດທີ່ມີສະຖານີລົດໄຟ ລາວ-ຈີນ ຕັ້ງຢູ່ ປະມານ 3 ເທົ່າ, ອັນນີ້ກໍ່ເນື່ອງຈາກວ່າກຸ່ມຄົນທີ່ຢູ່ໃນເຂດຊາຍແດນ ແມ່ນມີຄວາມສະດວກສະບາຍໃນການຄ້າຂາຍຫຼາຍກວ່າ ແລະ ຢູ່ໃກ້ກັບຕະຫຼາດຈີນ ຊຶ່ງເປັນການກະຕຸກຊຸກຍູ້ໃຫ້ເຂົາເຈົ້າໄດ້ທຳການຜະລິດ ແລະ ຄ້າຂາຍສິນຄ້າກະສິກຳຂອງຕົນ.

**ຕາຕະລາງທີ 5: ປຽບທຽບຄ່າສະເລ່ຍຂອງບັນດາຕົວປ່ຽນຕ່າງສໍາລັບຜູ້ທີ່ທຸກຍາກ ແລະ ຜູ້ທີ່ພົ້ນທຸກ**

| **ຕົວປ່ຽນ** | ທຸກຍາກ P = 1 (ຈໍານວນ = 1.123) | | ພົ້ນທຸກ P = 0 (ຈໍານວນ = 3.815) | | ລວມ (ຈໍານວນ = 4.938) | |
|---|---|---|---|---|---|---|
| | Mean | Std. Dev. | Mean | Std. Dev. | Mean | Std. Dev. |
| Poor | - | - | - | - | 0,2274 | 0,4192 |
| HH size | 7,7907 | 2,9196 | 5,8010 | 2,4279 | 6,2535 | 2,6808 |
| Age | 22,8451 | 18,0393 | 27,7832 | 19,2113 | 26,6602 | 19,0621 |
| Education (year) | 1,0935 | 1,8988 | 1,8304 | 2,9783 | 1,6628 | 2,7870 |
| Gender | 0,4862 | 0,5000 | 0,4931 | 0,5000 | 0,4915 | 0,5000 |
| Married | 0,3980 | 0,4897 | 0,4771 | 0,4995 | 0,4591 | 0,4984 |
| Ethnic | 0,9564 | 0,2044 | 0,7473 | 0,4346 | 0,7949 | 0,4038 |
| Big Animal (Head) | 1,3598 | 2,2126 | 1,2163 | 2,5464 | 1,2489 | 2,4750 |
| Asset Value (kip) | 6.771.880 | 30.800.000 | 57.800.000 | 400.000.000 | 46.200.000 | 353.000.000 |
| Loan (kip) | 676.812 | 3.935.495 | 1.866.598 | 6.783.919 | 1.596.017 | 6.270.715 |
| Dummy_job | 0,0365 | 0,1876 | 0,0676 | 0,2511 | 0,0606 | 0,2385 |
| Off farm | 0,0748 | 0,2632 | 0,2391 | 0,4266 | 0,2017 | 0,4013 |
| Urban | 0,0730 | 0,2603 | 0,2965 | 0,4568 | 0,2456 | 0,4305 |
| Local market | 0,0561 | 0,2302 | 0,2836 | 0,4508 | 0,2319 | 0,4221 |
| Agriculture Extention | 0,5183 | 0,4999 | 0,3303 | 0,4704 | 0,3730 | 0,4837 |
| Distance City (km) | 33,5714 | 35,7529 | 37,2072 | 35,2097 | 36,3804 | 35,3632 |
| Border District | 0,1282 | 0,3345 | 0,3547 | 0,4785 | 0,3032 | 0,4597 |
| Rail Station District | 0,3802 | 0,4857 | 0,4210 | 0,4938 | 0,4117 | 0,4922 |
| Rail Station*Border District | 0,0988 | 0,2986 | 0,2482 | 0,4320 | 0,2143 | 0,4103 |
| Planted Area (ha) | 1,1918 | 1,1263 | 0,9454 | 1,1759 | 1,0014 | 1,1692 |
| Average Products (kg/ha) | 4.933 | 28.341 | 6.976 | 130.661 | 6.512 | 115.638 |
| Sold Product Value (kip) | 3.183.362 | 17.300.000 | 6.631.040 | 22.800.000 | 5.846.969 | 21.700.000 |
| Sold Product*Local market | 44.920 | 783.779 | 1.193.218 | 10.400.000 | 932.072 | 9.161.706 |
| Sold Product*border District | 525.060 | 3.810.568 | 3.867.832 | 18.300.000 | 3.107.619 | 16.300.000 |
| Sold Product*railstation | 2,424,886 | 16,800,000 | 1,242,694 | 10,300,000 | 1,511,548 | 12,100,000 |
| Border District*Product | 886,54 | 12.515.87 | 7.036 | 38.464 | 5.638 | 34.427 |
| Rail Station*Product | 901,05 | 1.993.53 | 579,21 | 2.114 | 653 | 2.091 |
| Real consumption per capita (kip) | 220.751 | 41.183 | 1.053.218 | 1.970.666 | 863.898 | 1.767.010 |

*ແຫຼ່ງຂໍ້ມູນ: ຄິດໄລ່ຈາກການນໍາໃຊ້ຂໍ້ມູນ LECS VI ຂອງ ແຂວງຫຼວງນໍ້າທາ ແລະ ອຸດົມໄຊ*

### 4.5.2 ຜົນກະທົບຕໍ່ກັບຄວາມທຸກຍາກ

ບັນດາຄ່າສໍາປະສິດຂອງຕົວປ່ຽນຕ່າງໆທີ່ຄິດໄລ່ໂດຍການນໍາໃຊ້ Binary Logit Model ເພື່ອຊອກຫາບັນດາປັດໄຈຕ່າງໆທີ່ສົ່ງຜົນກະທົບຕໍ່ກັບຄວາມທຸກຍາກທັງໃນ 3 ຮູບແບບທີ່ກ່າວນັ້ນ ແມ່ນໄດ້ສະແດງໄວ້ໃນຕາຕະລາງທີ 6. ບັນດາຄ່າສໍາປະສິດຂອງຕົວປ່ຽນເອກະລາດຕ່າງໆ (Independent Variables) ທີ່ໄດ້ສະແດງເຄື່ອງໝາຍສາຍພົວພັນ (ບວກ-ລົບ) ໄວ້ກັບຕົວປ່ຽນທີ່ຂຶ້ນກັບ (Dependent Variable) ນັ້ນ ແມ່ນເປັນໄປຕາມທິດທາງທີ່ຄາດເອົາໄວ້ ຊຶ່ງສ່ວນໃຫຍ່ແລ້ວ ບັນດາຕົວປ່ຽນຕ່າງໆແມ່ນມີການພົວພັນກັບຄວາມທຸກຍາກ ດ້ວຍຄວາມເຊື່ອໝັ້ນທາງສະຖິຕິ (Statistically Significant) ຢູ່ໃນລະດັບ 1% ໃນທັງ 3 ຮູບແບບດັ່ງທີ່ໄດ້ກ່າວໄວ້ນັ້ນ.

ເມື່ອພິຈາລະນາເຖິງຄຸນລັກສະນະຂອງບຸກຄົນ ກໍ່ເຫັນໄດ້ວ່າອາຍຸ ແລະ ການສຶກສາຂອງບຸກຄົນ ແມ່ນມີສາຍພົວພັນທາງລົບກັບຄວາມທຸກຍາກ ແລະ ມີຄວາມເຊື່ອໝັ້ນທາງດ້ານສະຖິຕິ ໃນລະດັບ 1% ຊຶ່ງອັນນັ້ນກໍ່ໝາຍຄວາມວ່າ

ອາຍຸ ແລະ ການສຶກສາ ໄດ້ກາຍເປັນປັດໄຈສຳຄັນໃນການກຳນົດຄວາມເປັນໄປໄດ້ໃນການຫຼຸດຜ່ອນຄວາມທຸກຍາກ. ສິ່ງນີ້ສາມາດອະທິບາຍໄດ້ວ່າ ເມື່ອຄົນເຮົາມີອາຍຸທີ່ສູງຂຶ້ນເຂົາເຈົ້າຈະມີຄວາມສາມາດໃນການປະກອບອາຊີບທີ່ສູງຂຶ້ນ, ມີວຽກເຮັດງານທຳ, ສາມາດສະສົມຊັບສິນ ຫຼື ສັດລ້ຽງ ໃຫ້ມີຄວາມພຽງພໍສຳລັບການແກ້ໄຂຄວາມທຸກຍາກໄດ້. ການສຶກສາກໍ່ເຊັ່ນດຽວກັນ, ຖ້າຫາກບຸກຄົນໃດມີການສຶກສາທີ່ສູງຂຶ້ນ ເຂົາເຈົ້າກໍ່ຈະມີໂອກາດຫຼາຍກວ່າໃນການປັບປຸງທັກສະສີມືໃນການເຮັດວຽກ ແລະ ສາມາດຮຽນຮູ້ໄດ້ຫຼາຍວິທີ ທັງໃນການຜະລິດກະສິກຳ, ການຄ້າຂາຍ ແລະ ມີຄວາມຮູ້ໃນການສ້າງລາຍຮັບ ທັງການນຳໃຊ້ລາຍຮັບດັ່ງກ່າວໄປເປັນທຶນໝູນວຽນໃນການເຮັດກິດຈະການໃດໜຶ່ງເປັນຂອງຕົນເອງ. ດັ່ງນັ້ນ, ການສຶກສາຈຶ່ງເປັນປັດໄຈສຳຄັນອັນໜຶ່ງທີ່ຈະຕ້ອງຖືກກຳນົດໃຫ້ເປັນຍຸດທະສາດໃນການແກ້ໄຂຄວາມທຸກຍາກຂອງ ສປປ.ລາວ ຊຶ່ງລັດຖະບານຈະຕ້ອງໄດ້ສຸມໃສ່ປັບປຸງລະບົບການສຶກສາໃຫ້ດີຂຶ້ນ ແລະ ຂະຫຍາຍຕາໜ່າງການສຶກສາທີ່ດີໄປສູ່ຊົນນະບົດ, ລວມທັງການຍົກສູງຄວາມຮູ້ດ້ານການວາງແຜນຄອບຄົວ, ການຄຸມກຳເນີດ ແລະ ການໂພຊະນາທີ່ດີເພື່ອສ້າງກາລະໂອກາດໃຫ້ແກ່ຄົນຜູ້ທີ່ທຸກຍາກ ໄດ້ຮັບການຍົກລະດັບທາງດ້ານການສຶກສາໃຫ້ສູງຂຶ້ນ, .

ຕົວປ່ຽນດ້ານເພດ ແລະ ການສົມລົດ ກໍ່ມີສາຍພົວພັນທາງລົບກັບຄວາມທຸກຍາກ ຊຶ່ງມີຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 1% ສຳລັບເພດໃນທຸກຮູບແບບຂອງ Logit Model ແລະ ສຳລັບການສົມລົດ ແມ່ນໃນລະດັບ 5% ໃນຮູບແບບທີສອງ ແລະ ທີສາມ. ຄ່າສະຖິຕິດັ່ງກ່າວສະແດງໃຫ້ເຫັນວ່າ ເພດຊາຍແມ່ນມີໂອກາດສູງກວ່າເພດຍິງໃນການເຮັດໃຫ້ຄວາມທຸກຍາກຫຼຸດລົງ ແລະ ເມື່ອມີການສົມລົດສ້າງຄອບຄົວແລ້ວ ຍິ່ງມີທ່າແຮງໃນການເຮັດໃຫ້ຄວາມທຸກຍາກຫຼຸດລົງເຊັ່ນກັນ. ອັນນີ້ກໍ່ຍ້ອນວ່າ ດ້ວຍວັດທະນະທຳຂອງປະຊາຊົນລາວ ເມື່ອເວລາມີສົມລົດສ້າງຄອບຄົວແລ້ວ ສ່ວນໃຫຍ່ເພດຊາຍກໍ່ຈະເປັນຫົວໜ້າຄອບຄົວ ແລະ ເປັນຜູ້ຮັບຜິດຊອບໃນການສ້າງເສດຖະກິດຂອງຄອບຄົວ ໂດຍມີເພດຍິງເປັນຜູ້ໃຫ້ການສະໜັບສະໜູນຊ່ວຍເຫຼືອຊຶ່ງກັນແລະກັນ ດັ່ງສຸພາສິດລາວທີ່ວ່າ “ *ຜົວເປັນຊ້າງເທົ້າໜ້າ ເມຍເປັນຊ້າງເທົ້າຫຼັງ* “ ຊຶ່ງເປັນເງື່ອນໄຂໜຶ່ງທີ່ເຮັດໃຫ້ຄວາມທຸກຍາກຫຼຸດລົງ. ເຖິງຢ່າງໃດກໍ່ຕາມ, ຄ່າສຳປະສິດຂອງຂະໜາດຄົວເຮືອນກໍ່ມີສາຍພົວພັນທາງບວກກັບຄວາມທຸກຍາກເຊັ່ນກັນ. ນັ້ນໝາຍຄວາມວ່າ ໃນບາງກໍລະນີເມື່ອຄອບຄົວ ຫຼື ຄົວເຮືອນມີຈຳນວນສະມາຊິກເພີ່ມຫຼາຍຂຶ້ນ ກໍ່ຈະເຮັດໃຫ້ມີພາລະເພີ່ມຂຶ້ນ, ການໃຊ້ຈ່າຍເຂົ້າໃນການດຳລົງຊີວິດກໍ່ເພີ່ມຂຶ້ນ ແລະ ຖ້າຫາກບໍ່ມີອາຊີບທີ່ແນ່ນອນ ແລະ ໝັ້ນຄົງ ກໍ່ບໍ່ສາມາດທຳການຜະລິດເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວໄດ້ ແລ້ວຍິ່ງຈະເຮັດໃຫ້ຄອບຄົວນັ້ນໆມີຄວາມທຸກຍາກເພີ່ມຂຶ້ນ ໂດຍສະເພາະແມ່ນປະຊາຊົນທີ່ດຳລົງຊີວິດຢູ່ໃນເຂດຊົນນະບົດຫ່າງໄກສອກຫຼີກ.

ຄ່າສຳປະສິດຂອງຕົວປ່ຽນ Dummy Jop ແລະ off farm ກໍ່ມີທ່າອ່ຽງໃນການເຮັດໃຫ້ຄວາມທຸກຍາກຫຼຸດລົງເຊັ່ນກັນ ຊຶ່ງມີຄວາມເຊື່ອໝັ້ນທາງດ້ານສະຖິຕິ ໃນລະດັບຕ່ຳກວ່າ 1%. Dummy Jop ທີ່ໝາຍເຖິງການມີອາຊີບຫຼາຍກວ່າໜຶ່ງອາຊີບນັ້ນ ຈະເຮັດໃຫ້ຄົນເຮົາມີຫຼາຍຊ່ອງທາງໃນການຊອກຫາເງິນ, ສ້າງລາຍຮັບ ແລະ ສ້າງເສດຖະກິດຄອບຄົວໂດຍສະເພາະແມ່ນປະຊາຊົນທີ່ດຳລົງຊີວິດຢູ່ໃນຕົວເມືອງ ແມ່ນມັກຈະມີການປະກອບອາຊີບຫຼາຍຢ່າງ ຊຶ່ງສິ່ງດັ່ງກ່າວກໍ່ແມ່ນໜຶ່ງໃນວິທີການແກ້ໄຂຄວາມທຸກຍາກ. ສຳລັບຕົວປ່ຽນ off farm ແມ່ນບຸກຄົນທີ່ປະກອບອາຊີບຢູ່ນອກທີ່ບໍ່ແມ່ນການກະສິກຳ ເປັນຕົ້ນແມ່ນການຄ້າຂາຍ, ເຮັດທຸລະກິດສ່ວນຕົວ, ການຂົນສົ່ງ, ພະນັກງານພາກລັດ ແລະ ເອກະຊົນ ຊຶ່ງບຸກຄົນທີ່ປະກອບອາຊີບດັ່ງກ່າວ ແມ່ນມີລາຍຮັບທີ່ໝັ້ນຄົງ ແລະ ມີເງິນເດືອນສູງ ຈຶ່ງມີຄວາມເປັນໄປໄດ້ທີ່ຈະເຮັດໃຫ້ຄວາມທຸກຍາກຫຼຸດລົງ. ຈາກຜົນການຄົ້ນພົບດັ່ງກ່າວນັ້ນ ຈຶ່ງຮຽກຮ້ອງໃຫ້ພາກລັດຖະບານ ກໍ່ຄືພາກເອກະຊົນເພີ່ມທະວີການສ້າງວຽກເຮັດງານທຳໃຫ້ມີຄວາມຫຼາກຫຼາຍຂຶ້ນ ເພື່ອເປັນການປະກອບສ່ວນໃຫ້ແກ່ການແກ້ໄຂຄວາມທຸກຍາກ.

ບັນດາຄ່າສຳປະສິດຂອງການມີສັດລ້ຽງໃຫຍ່ (ງົວ-ຄວາຍ), ການມີຊັບສິນໃນຄອບຄອງ ແລະ ການເຂົ້າເຖິງແຫຼ່ງເງິນກູ້ຢືມ ກໍ່ມີສາຍພົວພັນທາງລົບຕໍ່ກັບຄວາມທຸກຍາກ ແລະ ມີຄວາມເຊື່ອໝັ້ນໃນທາງດ້ານສະຖິຕິ ຢູ່ໃນລະດັບ 1%. ການມີສັດລ້ຽງໃຫຍ່ ແລະ ມີຊັບສິນໃນການຄອບຄອງ ແມ່ນສາມາດຫັນເປັນທຶນໄດ້ ໂດຍການຂາຍສັດລ້ຽງ ຫຼື ຊັບສິນເພື່ອນຳໃຊ້ເຂົ້າໃນການຂະຫຍາຍການຜະລິດ ແລະ ສ້າງເສດຖະກິດຂອງຕົນເອງ ແລະ ຄອບຄົວ. ການມີສັດລ້ຽງເພີ່ມຂຶ້ນ ແລະ ມີຊັບສິນຫຼາຍຂຶ້ນນັ້ນ ສະແດງໃຫ້ເຫັນວ່າບຸກຄົນດັ່ງກ່າວແມ່ນມີສະພາບການດຳລົງຊີວິດທີ່ດີຂຶ້ນ. ການເຂົ້າເຖິງເງິນ

ກູ້ຢືມ ກໍ່ເປັນປັດໄຈໜຶ່ງທີ່ເຮັດໃຫ້ບຸກຄົນດັ່ງກ່າວມີຕົ້ນທຶນພຽງພໍ ເພື່ອນຳໃຊ້ເຂົ້າໃນການປັບປຸງ ແລະ ຍົກລະດັບການຜະລິດກະສິກຳໃຫ້ໄດ້ທັງດ້ານປະລິມານ ແລະ ຄຸນນະພາບ ຊຶ່ງຜົນສຸດທ້າຍກໍ່ເຮັດໃຫ້ມີລາຍຮັບເພີ່ມສູງຂຶ້ນ ຈຶ່ງສາມາດຫຼຸດພົ້ນອອກຈາກຄວາມທຸກຍາກໄດ້.

**ຕາຕະລາງທີ 6: ບັນດາປັດໄຈຊຶ່ງເປັນໄປໄດ້ທີ່ຈະສົ່ງຜົນກະທົບຕໍ່ກັບຄວາມທຸກຍາກ (**Binary Logit coefficient estimates for determinant of Poverty)

| No | ຕົວປ່ຽນ | ຮູບແບບທີ 1 | | | ຮູບແບບທີ 2 | | | ຮູບແບບທີ 3 | | |
|---|---|---|---|---|---|---|---|---|---|---|
| | | Coef. | | Std. Err. | Coef. | | Std. Err. | Coef. | | Std. Err. |
| 1 | HH size | 0,2642 | *** | 0,0018 | 0,2779 | *** | 0,0018 | 0,2766 | *** | 0,0018 |
| 2 | Age | -0,0063 | *** | 0,0003 | -0,0059 | *** | 0,0003 | -0,0063 | *** | 0,0003 |
| 3 | Education (year) | -0,0874 | *** | 0,0018 | -0,0852 | *** | 0,0019 | -0,0911 | *** | 0,0019 |
| 4 | Gender | -0,0906 | *** | 0,0083 | -0,0708 | *** | 0,0084 | -0,0695 | *** | 0,0085 |
| 5 | married | -0,0509 | *** | 0,0114 | -0,0672 | *** | 0,0115 | -0,0629 | ** | 0,0116 |
| 6 | Ethnic | 0,9384 | *** | 0,0165 | 0,9204 | *** | 0,0167 | 0,8998 | *** | 0,0167 |
| 7 | Dummy_job | -0,6361 | *** | 0,0195 | -0,6493 | *** | 0,0198 | -0,6416 | *** | 0,0198 |
| 8 | Off-farm | -0,9398 | *** | 0,0156 | -1,0363 | *** | 0,0159 | -1,0757 | *** | 0,0159 |
| 9 | Big Animal | -0,1310 | *** | 0,0020 | -0,1399 | *** | 0,0021 | -0,1384 | *** | 0,0021 |
| 10 | Log (Asset_value) | -0,0391 | *** | 0,0006 | -0,0318 | *** | 0,0007 | -0,0315 | *** | 0,0007 |
| 11 | Log (loan) | -0,0201 | *** | 0,0007 | -0,0174 | *** | 0,0008 | -0,0184 | *** | 0,0008 |
| 12 | Urban | -0,7548 | *** | 0,0159 | -1,0244 | *** | 0,0165 | -0,9084 | *** | 0,0168 |
| 13 | Local market | -0,4223 | *** | 0,0204 | -0,4637 | *** | 0,0208 | -0,4840 | *** | 0,0208 |
| 14 | Agriculture Extention | 0,7184 | *** | 0,0088 | 0,7089 | *** | 0,0090 | 0,6926 | *** | 0,0090 |
| 15 | Distance City (km) | | | | 0,0035 | *** | 0,0001 | 0,0036 | *** | 0,0001 |
| 16 | Border Dist | | | | -0,6151 | *** | 0,0288 | -0,5982 | *** | 0,0317 |
| 17 | Rail Station Dist | | | | 0,9579 | *** | 0,0111 | 0,6943 | *** | 0,0123 |
| 18 | Rail Station*Border ist | | | | -0,8756 | *** | 0,0311 | -0,9448 | *** | 0,0317 |
| 19 | Planted Area (ha) | -0,0593 | *** | 0,0048 | -0,0611 | *** | 0,0049 | -0,0885 | ** | 0,0048 |
| 20 | Products | -0,00002 | *** | 0,00000 | -0,00002 | *** | 0,00000 | 0,0000 | *** | 0,0000 |
| 21 | Log (Sold Product) | -0,0134 | *** | 0,0007 | -0,0146 | *** | 0,0007 | -0,0460 | *** | 0,0009 |
| 22 | Log (Sold at market) | -0,0074 | *** | 0,0021 | -0,0102 | *** | 0,0022 | -0,0374 | *** | 0,0023 |
| 23 | Log (Sold at border Dist) | | | | | | | 0,0229 | *** | 0,0018 |
| 24 | Log (Sold at rail Dist) | | | | | | | 0,0703 | *** | 0,0015 |
| 25 | Luangnamtha Province | -1,0202 | *** | 0,0103 | -0,5729 | *** | 0,0118 | -0,61084 | *** | 0,01196 |
| | Constant | -2,3402 | *** | 0,0220 | -2,7824 | *** | 0,0237 | -2,6176 | *** | 0,0237 |
| | Log likelihood | -182804,76 | | | -177388,27 | | | -175770,11 | | |
| | Number of obs | 4.938 | | | 4.938 | | | 4.938 | | |
| | LR chi2(15) | 105997,7 | | | 116830,7 | | | 120067 | | |
| | Prob > chi2 | 0,0000 | | | 0,0000 | | | 0,0000 | | |
| | Pseudo R2 | 0,2248 | | | 0,2477 | | | 0,2546 | | |

*ໝາຍເຫດ: ***, **,* ສະແດງໃຫ້ຮູ້ວ່າ ຄ່າສຳປະສິດແມ່ນມີສາຍພົວພັນທາງສະຖິຕິ ດ້ວຍຄວາມສຳຄັນໃນລະດັບ 1%, 5% ແລະ 10% ຕາມລຳດັບ.*
*ແຫຼ່ງຂໍ້ມູນ: ຄິດໄລ່ຈາກການນຳໃຊ້ຂໍ້ມູນ LECS VI ຂອງ ແຂວງຫຼວງນ້ຳທາ ແລະ ອຸດົມໄຊ*

ຄ່າສຳປະສິດຂອງປະຊາຊົນທີ່ດຳລົງຊີວິດໃນຕົວເມືອງ ແມ່ນມີສາຍພົວພັນທາງລົບຕໍ່ກັບຄວາມທຸກຍາກ ແລະ ມີຄວາມເຊື່ອໝັ້ນທາງສະຖິຕິ ໃນລະດັບ 1%. ນັ້ນໝາຍຄວາມວ່າປະຊາຊົນທີ່ດຳລົງຊີວິດຢູ່ໃນເຂດຕົວເມືອງ ແມ່ນມີໂອ

ກາດສູງກວ່າປະຊາຊົນທີ່ດຳລົງຊີວິດຢູ່ໃນເຂດຊົນນະບົດ ໃນການຊອກຫາວຽກເຮັດງານທຳ, ຊອກຫາລາຍໄດ້ ແລະ ເງື່ອນໄຂຕ່າງໆຫຼາຍດ້ານໃນການດຳລົງຊີດວິດ ຊຶ່ງເຮັດໃຫ້ກາລະໂອກາດໃນການແກ້ໄຂຄວາທຸກຍາກແມ່ນມີຫຼາຍກວ່າຜູ້ທີ່ດຳລົງຊີວິດຢູ່ໃນເຂດຊົນນະບົດ. ດັ່ງນັ້ນ, ນະໂຍບາຍໃນການຫຼຸດຊ່ອງວ່າງການພັດທະນາລະຫວ່າງຕົວເມືອງ ແລະ ຊົນນະບົດ ແມ່ນຕ້ອງໄດ້ເອົາໃຈໃສ່ປະຕິບັດເພື່ອການແກ້ໄຂຄວາມທຸກຍາກ. ຄ່າສາປະສິດຂອງຕົວປ່ຽນການມີຕະຫຼາດທ້ອງຖິ່ນຢູ່ພາຍໃນບ້ານ ແມ່ນມີສາຍພົວພັນທາງລົບກັບຄວາມທຸກຍາກ ແລະ ມີຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 1% ເຊັ່ນກັນ. ການມີຕະຫຼາດທ້ອງຖິ່ນຢູ່ພາຍໃນບ້ານ ແມ່ນຈະເປັນໂອກາດອັນດີໃນການເຮັດໃຫ້ປະຊາຊົນມີການຊື້ຂາຍແລກປ່ຽນສິນຄ້າ, ສ້າງລາຍຮັບທີ່ແນ່ນອນ ແລະ ເປັນການສົ່ງເສີມຕ່ອງໂສ້ການຜະລິດ ແລະ ເຮັດໃຫ້ສິນຄ້າທີ່ຜະລິດໄດ້ມີບ່ອນຈຳ ໜ່າຍທີ່ແນ່ນອນ ແລະ ສຸດທ້າຍກໍ່ຈະເປັນໂອກາດທີ່ດີ ເພື່ອເຮັດໃຫ້ຄວາມທຸກຍາກໄດ້ຮັບການແກ້ໄຂໄດ້ຢ່າງທັນການ.

ຕົວປ່ຽນໄລຍະຫ່າງລະວ່າງບ້ານຫາໃຈກາງຕົວເມືອງທັງໃນສອງຮູບແບບ ກໍ່ເຫັນວ່າຄ່າສຳປະສິດແມ່ນມີສາຍພົວພັນທາງບວກຕໍ່ກັບຄວາມທຸກຍາກ ແລະ ມີຄວາມສຳຄັນທາງສະຖິຕິໃນລະດັບ 1%. ນັ້ນໝາຍຄວາມວ່າ ຖ້າປະຊາຊົນຫາກຢູ່ຫ່າງໄກຈາກຕົວເມືອງເທົ່າໃດ ຍິ່ງຈະເຮັດໃຫ້ຄວາມທຸກຍາກມີໂອກາດເພີ່ມຂຶ້ນຫຼາຍເທົ່ານັ້ນ ຊຶ່ງມີຄວາມສອດຄ່ອງກັບຄ່າສຳປະສິດຂອງຕົວປ່ຽນຕົວເມືອງເຊັ່ນກັນ ໂດຍສະເພາະແມ່ນປະຊາຊົນທີ່ດຳລົງຊີວິດໃນເຂດຫ່າງໄກສອກຫຼີກ ຍິ່ງມີຄວາມລຳບາກ, ຂາດສິ່ງອຳນວຍຄວາມສະດວກ, ການເດີນທາງໄປມາແມ່ນໃຊ້ທັງເວລາ ແລະ ຕົ້ນທຶນສູງ ຈຶ່ງເຮັດໃຫ້ໂອກາດໃນການນຳສິນຄ້າໄປຂາຍ, ການສ້າງລາຍຮັບ ຫຼື ການເຂົ້າເຖິງການບໍລິການດ້ານສາທາລະນຸປະໂພກຕ່າງໆ ມີຄວາມຫຍຸ້ງຍາກ ຊຶ່ງອາດຈະເຮັດໃຫ້ປະຊາຊົນມີຄວາມທຸກຍາກສູງຂຶ້ນ.

ຄ່າສຳປະສິດຕົວປ່ຽນຂອງບຸກຄົນທີ່ດຳລົງຢູ່ຊີວິດຢູ່ໃນເຂດເມືອງທີ່ມີດ່ານການຄ້າຊາຍແດນ ລາວ-ຈີນ ແມ່ນມີສາຍພົວພັນທາງລົບກັບຄວາມທຸກຍາກ ແລະ ມີຄວາມເຊື່ອໝັ້ໝທາງສະຖິຕິ ໃນລະດັບ 1% ຊຶ່ງຜົນດັ່ງກ່າວສະແດງໃຫ້ເຫັນວ່າ ປະຊາຊົນທີ່ດຳລົງຊີວິດຢູ່ໃນເຂດດັ່ງກ່າວ ແມ່ນມີໂອກາດສູງກວ່າປະຊາຊົນທີ່ດຳລົງຊີວິດຢູໃນເຂດອື່ນ ໃນການແກ້ໄຂຄວາມທຸກຍາກ. ໂອກາດດັ່ງກ່າວອາດຈະແມ່ນໂອກາດໃນການຄ້າຂາຍສິນຄ້າຂ້າມຊາຍແດນທີ່ດີກວ່າ, ມີຄວາມສະດວກຫຼາຍຢ່າງ ແລະ ເປັນເຂດທີ່ມີການພັດທະນາຢ່າງໄວວາ ໂດຍສະເພາະແມ່ນເຂດການຄ້າຊາຍແດນສາກົນ ບໍ່ເຕັນ-ບໍ່ຫານ ຢູ່ແຂວງຫຼວງນ້ຳທາ ຊຶ່ງເປັນຈຸດເຕົ້າໂຮມສິນຄ້າເພື່ອກະກຽມສົ່ງອອກໄປສູ່ຕະຫຼາດ ສປ.ຈີນ. ນອກຈາກນັ້ນ, ກໍ່ຍັງມີດ່ານປະເພນີ ແລະ ດ່ານທ້ອງຖິ່ນ ຄື: ດ່ານທ້ອງຖິ່ນປາງໄຮ, ດ່ານປະເພນີບ້ານມອມ (ຫຼວງນ້ຳທາ) ແລະ ດ່ານທ້ອງຖິ່ນພູຫຼັກຄຳ (ອຸດົມໄຊ) ຊຶ່ງເປັນເສັ້ນທາງຂົນສົ່ງ ແລະ ທຳມາຄ້າຂາຍສິນຄ້າຂອງປະຊາຊົນຢູ່ໃນຂົງເຂດດັ່ງກ່າວ ເປັນຕົ້ນແມ່ນປະຊາຊົນສ່ວນໃຫຍ່ຢູ່ໃນເມືອງສິງ (ຫຼວງນ້ຳທາ) ແຕ່ລະປີແມ່ນໄດ້ປູກອ້ອຍ, ສາລີ, ຢາງພາລາ ແລະ ພືດຜັກອື່ນໆ ໂດຍໄດ້ນຳໃຊ້ເຂດການຄ້າຊາຍແດນຢູ່ໃນດ່ານປະເພນີ ແລະ ດ່ານທ້ອງຖິ່ນຂອງເຂົາເຈົ້າ ເປັນຊ່ອງທາງໃນການລຳລຽງ ແລະ ຄ້າຂາຍສິນຄ້າໄປສູ່ຕະຫຼາດ ສປ.ຈີນ.

ສຳລັບຕົວປ່ຽນຂອງເຂດເມືອງທີ່ມີສະຖານີລົດໄປ ລາວ-ຈີນ ຕັ້ງຢູ່ ຄື: ສະຖານີລົດໄຟຢູ່ເຂດບ້ານນາເຕີຍ ແລະ ບໍ່ເຕັນ-ບໍ່ຫານ (ເມືອງນ້ຳທາ, ແຂວງຫຼວງນ້ຳທາ) ແລະ ສະຖານີຢູ່ເມືອງນາໝໍ້, ເມືອງໄຊ ແລະ ເມືອງງາ (ແຂວງອຸດົມໄຊ) ເຫັນວ່າຄ່າສຳປະສິດຂອງຕົວປ່ຽນຕ່າງໆ ແມ່ນມີສາຍພົວພັນທາງບວກກັບຄວາມທຸກຍາກ ແລະ ມີລະດັບຄວາມເຊື່ອໝັ້ນທາງສະຖິຕິ ຢູ່ໃນລະດັບ 1%, ນັ້ນສະແດງໃຫ້ເຫັນວ່າການທີ່ຈະມີສະຖານີລົດໄຟ ລາວ-ຈີນ ຢູ່ໃນບັນດາເຂດເມືອງດັ່ງກ່າວໃນໄລຍະອັນໃກ້ໆນີ້ ແມ່ນຍັງບໍ່ທັນສາມາດເວົ້າໄດ້ວ່າມັນຈະສ້າງກາລະໂອກາດທາງເສດຖະກິດໃຫ້ແກ່ປະຊາຊົນໄດ້ ຫຼື ເວົ້າອີກຢ່າງໜຶ່ງວ່າປະຊາຊົນເອງກໍ່ຍັງບໍ່ທັນມີຄວາມກະກຽມເພື່ອຮອງຮັບກາລະໂອກາດດັ່ງກ່າວ ເພື່ອເປັນຊ່ອງທາງໃນການແກ້ໄຂຄວາມທຸກຍາກຂອງເຂົາເຈົ້າໄດ້ເທື່ອ; ແຕ່ເມື່ອເອົາຕົວປ່ຽນຂອງເຂດການຄ້າຊາຍແດນ ແລະ ເຂດເມືອງທີ່ຈະມີສະຖາລົດໄຟ ລາວ-ຈີນ ຕັ້ງຢູ່ ມາມປະສານສົມທົບກັນ ກໍ່ເຫັນວ່າຄ່າສຳປະສິດຕ່າງໆແມ່ນມີສາຍພົວພັນທາງບວກ ແລະ ມີຄວາມເຊື່ອໝັ້ນທາງສະຖິຕິ ຢູ່ໃນໃນລະດັບ 1%. ຜົນທີ່ສະແດງອອກຄືດັ່ງກ່າວນັ້ນ ກໍ່ສະແດງໃຫ້ເຫັນວ່າ ຖ້າຫາກວ່າມີສິ່ງອຳນວຍຄວາມສະດວກທັງສອງຢ່າງນັ້ນ ກໍ່ຈະເຮັດໃຫ້ປະຊາຊົນມີທາງເລືອກເພີ່ມຂຶ້ນໃນການນຳໃຊ້ຊ່ອງທາງດັ່ງກ່າວ

ນັ້ນເພື່ອການແກ້ໄຂຄວາມທຸກຍາກ ເວົ້າລວມ, ເວົ້າສະເພາະ ກໍ່ແມ່ນເປັນການສົ່ງເສີມໃຫ້ປະຊາຊົນ ມີຊ່ອງທາງທີ່ສະດວກສະບາຍກວ່າຂົງເຂດອື່ນ ໃນການລໍາລຽງຂົນສົ່ງ ແລະ ຄ້າຂາຍສິນຄ້າຂອງຕົນເອງ ເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວ.

ໃນດ້ານການຜະລິດກະສິກໍາ, ຄ່າສໍາປະສິດຂອງຕົວປ່ຽນກ່ຽວກັບເນື້ອທີ່ທໍາການຜະລິດກະສິກໍາ ກໍ່ມີສາຍພົວພັນທາງລົບ ແລະ ມີຄວາມເຊື່ອໝັ້ນທາງສະຖິຕິ ຢູ່ໃນລະດັບ 1% ສໍາລັບຮູບແບບທີ 1 ແລະ ຮູບແບບທີ 2; ສ່ວນຜົນຜະລິດກໍ່ມີສາຍພົວພັນທາງລົບ ໂດຍມີຄວາມເຊື່ອໝັ້ນທາງສະຖິຕິ ຢູ່ໃນລະດັບ 1% ເຊັ່ນກັນ ໃນທັງໃນສາມຮູບແບບທີ່ໄດ້ກ່າວມານັ້ນ. ຜົນທີ່ສະແດງອອກຄືດັ່ງກ່າວນັ້ນ ແມ່ນສະແດງໃຫ້ເຫັນວ່າປະຊາຊົນຜູ້ທີ່ມີເນື້ອທີ່ທໍາການຜະລິດກະສິກໍາທີ່ເປັນປັດໄຈພື້ນຖານໃນການຜະລິດ ແລະ ສາມາດເກັບກ່ຽວຜົນຜະລິດໄດ້ນັ້ນ ກໍ່ຈະເຮັດໃຫ້ບຸກຄົນ ຫຼື ຄອບຄົວນັ້ນໆ ມີທ່າແຮງ ແລະ ມີຄວາມເປັນໄປໄດ້ຫຼາຍກວ່າໃນການຫຼຸດຜ່ອນຄວາມທຸກຍາກ. ໃນອີກດ້ານໜຶ່ງ, ຄ່າສໍາປະສິດຂອງການໄດ້ຮັບຄໍາແນະນໍາທາງດ້ານການຜະລິດກະສິກໍາ ກໍ່ມີສາຍພົວພັນທາງບວກກັບຄວາມທຸກຍາກດ້ວຍຄວາມສໍາຄັນທາງສະຖິຕິຢູ່ໃນລະດັບ 1%. ນັ້ນໝາຍຄວາມວ່າ ເຖິງວ່າຈະມີພະນັກງານກະສິກໍາລົງມາໃຫ້ຄວາມຮູ້ດ້ານການຜະລິດກະສິກໍາແກ່ປະຊາຊົນກໍ່ຕາມ ແຕ່ກໍ່ຍັງບໍ່ທັນສາມາດປະກອບສ່ວນໃຫ້ແກ່ການຫຼຸດຜ່ອນຄວາມທຸກຍາກໄດ້ເທື່ອ ຊຶ່ງສາເຫດກໍ່ອາດຈະຍ້ອນວ່າ ໃນບາງເຂດທີ່ໄດ້ມີການລົງໄປໃຫ້ການແນະນໍາທາງດ້ານການຜະລິດກະສິກໍານັ້ນ ແມ່ນຍັງບໍ່ທັນສອດຄ່ອງກັບສະພາບການຜະລິດກະສິກໍາຕົວຈິງຂອງທ້ອງຖິ່ນກໍ່ເປັນໄດ້ ຫຼືວ່າການລົງໄປໃຫ້ຄໍາແນະນໍາດັ່ງກ່າວຍັງເຮັດໄດ້ບໍ່ທັນທົ່ວເຖິງ ແລະ ບໍ່ທັນຕໍ່ເນື່ອງເທື່ອ. ສ່ວນປະຊາຊົນເອງກໍ່ອາດມີບາງກໍລະນີທີ່ບໍ່ໄດ້ໃຫ້ຄວາມສົນໃຈ ຫຼື ປະຕິບັດຕາມຄາແນະນໍາທາງດ້ານວິຊາການໃນການຜະລິດກະສິກໍາຢ່າງຖືກຕ້ອງເໝາະສົມ, ຍັງເຮັດການຜະລິດຕາມແບບຮີດຄອງເດີມ, ເຮັດຕາມແບບທໍາມະຊາດທີ່ຊິ້ນເຄີຍມາ ຫຼືບໍ່ກໍ່ອາດຈະສາມາດເຂົ້າໃຈໄດ້ເຖິງການແນະນໍານັ້ນເລີຍກໍ່ເປັນໄດ້ (ຍ້ອນລະດັບການສຶກສາ) ຈຶ່ງເຮັດໃຫ້ການແນະນໍາໃຫ້ຄໍາປຶກສາໃນການຜະລິດກະສິກໍານັ້ນ ຍັງບໍ່ທັນສາມາດຕອບສະໜອງໄດ້ກັບວຽກງານແກ້ໄຂຄວາມ ທຸກຍາກ. ຈາກຜົນຂອງການສຶກສາທີ່ສະແດງໃຫ້ເຫັນຄືດັ່ງກ່າວນັ້ນ ຈຶ່ງສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ລວມທັງຊາວກະສິກອນ ແມ່ນຈະຕ້ອງໄດ້ສຸມໃສ່ເລື່ອງການຍົກສູງປະສິດທິພາບ ແລະ ປະສິດທິຜົນໃນການຜະລິດກະສິກໍາ ແລະ ມີການນໍາໃຊ້ເນື້ອທີ່ດິນທີ່ມີຢູ່ຢ່າງຈໍາກັດໃຫ້ເກີດຜົນປະໂຫຍດສູງສຸດ. ພ້ອມດຽວກັນນັ້ນ, ກໍ່ຕ້ອງໄດ້ເອົາໃຈໃສ່ໃນການລົງໄປເຮັດວຽກໃນການແນະນໍາ-ສົ່ງເສີມການຜະລິດກະສິກໍາຂອງປະຊາຊົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ ທັງຕ້ອງໄດ້ມີການປະສານງານກັບບັນດາຂະແໜງການທີ່ກ່ຽວຂ້ອງໃນການລົງໄປເຮັດວຽກກ່ຽວກັບການແນະນໍາ ແລະ ໃຫ້ຄໍາປຶກສາດ້ານການຜະລິດກະສິກໍາຂອງປະຊາຊົນຢ່າງແໜ້ນແຟ້ນຂຶ້ນຕື່ມ.

ການຄ້າຂາຍສິນຄ້າກະສິກໍາໃນຕາຕະລາງທີ 7 ໄດ້ສະແດງໃຫ້ເຫັນເຖິງຜົນຂອງບັນດາຕົວປ່ຽນໃນການຂາຍຜະລິດຕະພັນກະສິກໍາຂອງບຸກຄົນ ແລະ ໄດ້ນໍາໃຊ້ຕົວປ່ຽນຂອງຂາຍສິນຄ້າດັ່ງກ່າວແຊກເຂົ້າກັບຕົວປ່ຽນອື່ນໆ ເປັນຕົ້ນແມ່ນການຂາຍສິນຄ້າໂດຍມີຕະຫຼາດຢູ່ພາຍໃນບ້ານ, ການຂາຍສິນຄ້າຢູ່ໃນເຂດເມືອງທີ່ມີດ່ານຊາຍແດນ ແລະ ການຂາຍສິນຄ້າຢູ່ໃນເຂດເມືອງທີ່ມີສະຖານີລົດໄຟ ລາວ-ຈີນ. ໂດຍຜົນຈາກການວິເຄາະນີ້ໄດ້ສະແດງໃຫ້ເຫັນວ່າ ຄ່າສໍາປະສິດຂອງການຂາຍສິນຄ້າ ແລະ ຄ່າສໍາປະສິດຂອງການຂາຍສິນຄ້າຢູ່ໃນບ້ານທີ່ມີຕະຫຼາດ ແມ່ນມີສາຍພົວພັນທາງລົບກັບຄວາມທຸກຍາກ ແລະ ມີຄວາມເຊື່ອໝັ້ນທາງສະຖິຕິ ຢູ່ໃນລະດັບ 1%, ສ່ວນການຂາຍສິນຄ້າຢູ່ໃນເຂດເມືອງທີ່ມີດ່ານຊາຍແດນ ແລະ ເຂດເມືອງທີ່ມີສະຖານີລົດໄຟ ລາວ-ຈີນ ຕັ້ງຢູ່ ແມ່ນຍັງບໍ່ທັນສະແດງໃຫ້ເຫັນເຖິງຄວາມສໍາພັນທາງສະຖິຕິຕໍ່ກັບການຫຼຸດຜ່ອນຄວາມທຸກຍາກເທື່ອ.

ຕາຕະລາງທີ 7 ສະແດງໃຫ້ເຫັນເຖິງການຄາດຄະເນຜົນກະທົບຂອງບັນດາຕົວປ່ຽນຕ່າງໆຕໍ່ກັບຄວາມທຸກຍາກພາຍຫຼັງທີ່ໄດ້ມີການນໍາໃຊ້ logit model. ໂດຍລວມແລ້ວ ເມື່ອບັນດາຕົວປ່ຽນນັ້ນໆມີການປ່ຽນແປງ 1 ຫົວໜ່ວຍ ກໍ່ຈະເຮັດໃຫ້ຄວາມທຸກຍາກມີໂອກາດຫຼຸດລົງ ປະມານ 13% ໂດຍມີເງື່ອນໄຂສົມມຸດວ່າຕົວປ່ຽນອື່ນໆທີ່ບໍ່ໄດ້ກໍານົດໃນຮູບແບບນີ້ແມ່ນໃຫ້ມີຄ່າສະເລ່ຍຄົງທີ່, ແຕ່ເມື່ອເບິ່ງເຖິງລາຍລະອຽດຂອງແຕ່ລະຕົວປ່ຽນທີ່ມີຜົນກະທົບຕໍ່ກັບຄວາມທຸກຍາກແລ້ວ ເຫັນວ່າມີຕົວປ່ຽນດ້ານອາຍຸ, ລະດັບການສຶກສາ, ການມີອາຊີບຫຼາຍກວ່າໜຶ່ງອາຊີບຂຶ້ນໄປ, ການປະກອບອາຊີບທີ່ບໍ່ແມ່ນກະສິກໍາ, ການມີຊັບສິນໃນຄອບຄອງ ເປັນຕົ້ນແມ່ນການມີສັດລ້ຽງໃຫຍ່ ແລະ ສັບຊິນຕ່າງໆຢູ່ພາຍໃນຄົວເຮືອນ, ການເຂົ້າເຖິງເງິນກູ້ຢືມ, ການດໍາລົງຊີວິດຢູ່ໃນເຂດຕົວເມືອງ ໂດຍສະເພາະແມ່ນໃນເຂັດເມືອງທີ່ດ່ານການຄ້າຊາຍ

ແດນ, ການມີເນື້ອທີ່ທຳການຜະລິດ, ມີຜົນຜະລິດ ແລະ ໄດ້ຂາຍຜົນຜະລິດຂອງຕົນເອງ ແມ່ນມີໂອກາດໃນການເຮັດໃຫ້ຄວາມ ທຸກຍາກຫຼຸດລົງ.

**ຕາຕະລາງທີ 7: ຄວາມເປັນໄປໄດ້ໃນການກໍ່ໃຫ້ເກີດຄວາມທຸກຍາກ** (Marginal Effect)

| No | ຕົວປ່ຽນ | ຂອບເຂດຂອງຜົນກະທົບ<br>Marginal Effect (dy/dx) | | Std. Err. |
|---|---|---|---|---|
| 1 | HH size | 0,0348 | *** | 0,0022 |
| 2 | Age | -0,0006 | * | 0,0003 |
| 3 | Education (year) | -0,0122 | *** | 0,0021 |
| 4 | Gender | -0,0072 | | 0,0092 |
| 5 | married | -0,0078 | | 0,0123 |
| 6 | Ethnic | 0,0928 | *** | 0,0122 |
| 7 | Dummy_job | -0,0560 | *** | 0,0149 |
| 8 | Off_farm | -0,0960 | *** | 0,0109 |
| 9 | Big Animal | -0,0115 | *** | 0,0021 |
| 10 | Log (Asset_value) | -0,0033 | *** | 0,0007 |
| 11 | Log (loan) | -0,0033 | *** | 0,0009 |
| 12 | Urban | -0,1111 | *** | 0,0143 |
| 13 | Local market | -0,0334 | | 0,0216 |
| 14 | Agriculture Extention | 0,0925 | *** | 0,0115 |
| 15 | Distance City (km) | 0,0002 | | 0,0001 |
| 16 | Border District | -0,0872 | *** | 0,0214 |
| 17 | Rail Station District | 0,1112 | *** | 0,0156 |
| 18 | Rail Station*Border Dist | -0,0940 | *** | 0,0196 |
| 19 | Planted Area (ha) | -0,0143 | *** | 0,0049 |
| 20 | Products | -0,000001 | *** | 0,000000 |
| 21 | Log (Sold Product) | -0,0056 | *** | 0,0010 |
| 22 | Log (Sold at market) | -0,0047 | * | 0,0028 |
| 23 | Log (Sold at border Dist) | 0,0015 | | 0,0018 |
| 24 | Log (Sold at rail Dist) | 0,0078 | *** | 0,0016 |
| | Marginal effect after logit model<br>Y= Pr (poor) (Predict) = 0.13051152 | | | |

*ໝາຍເຫດ: ***, **,* ສະແດງໃຫ້ຮູ້ວ່າ ຄ່າສຳປະສິດແມ່ນມີຜົນກະທົບຕໍ່ຄວາມທຸກຍາກທາງດ້ານສະຖິຕິ ດ້ວຍຄວາມເຊື່ອໝັ້ນໃນລະດັບ 1%, 5% ແລະ 10% ຕາມລາດັບ.*

*ແຫຼ່ງຂໍ້ມູນ: ຄິດໄລ່ຈາກການນຳໃຊ້ຂໍ້ມູນ LECS VI ຂອງ ແຂວງຫຼວງນ້ຳທາ ແລະ ອຸດົມໄຊ*

ຈຸດສຳຄັນທີ່ສະແດງອອກໃນຕາຕະລາງຂ້າງເທິງນັ້ນ ອັນທີໜຶ່ງແມ່ນການສຶກສາທີ່ເປັນປັດໄຈສຳຄັນໃນການແກ້ໄຂຄວາມທຸກຍາກໃຫ້ແກ່ປະຊາຊົນຢູ່ໃນຂົງເຂດດັ່ງກ່າວ ຊຶ່ງຜົນທີ່ສະແດງອອກຢູ່ໃນຕາຕະລາງຂ້າງເທິງນັ້ນໄດ້ສະແດງໃຫ້ເຫັນວ່າ ຖ້າວ່າຫາກທີ່ມີການສຶກສາທີ່ເພີ່ມສູງຂຶ້ນ 1 ປີ ແມ່ນອາດສາມາດເຮັດໃຫ້ຄວາມທຸກຍາກ ຫຼຸດລົງ 1,2%. ອັນທີສອງແມ່ນການມີເນື້ອທີ່ທຳການຜະລິດກະສິກຳ ຊຶ່ງຖ້າປະຊາຊົນຫາກມີເນື້ອທີ່ທຳການຜະລິດກະສິກຳ ເພີ່ມຂຶ້ນ 1 ເຮັກຕາ ກໍ່ອາດຈະສາມາດເຮັດໃຫ້ຄວາມທຸກຍາກຫຼຸດລົງປະມານ 1,43%; ເຊັ່ນດຽວກັນ ຖ້າຫາກວ່າມີຜົນຜະລິດກະສິກຳເພີ່ມ

ຂຶ້ນ ແລະ ໄດ້ຂາຍຜົນຜະລິດດັ່ງກ່າວແລ້ວ ແມ່ນມີໂອກາດເຮັດໃຫ້ຄວາມທຸກຍາກຫຼຸດລົງເຊັ່ນດຽວກັນ, ແຕ່ຜົນກະທົບດັ່ງກ່າວແມ່ນສະແດງໃຫ້ເຫັນເປັນເປີເຊັນໜ້ອຍຫຼາຍ. ຈຸດສຳຄັນອັນທີສາມ ແມ່ນສຳລັບປະຊາຊົນທີ່ດຳລົງຊີວິດໃນເຂດຕົວເມືອງ ແລະ ຢູ່ໃນເຂດການຄ້າຊາຍແດນ ແມ່ນມີໂອກາດໃນການສ້າງລາຍຮັບ ແລະ ມີຄວາມເປັນໄປໄດ້ໃນການແກ້ໄຂຄວາມທຸກຍາກໃນອັດຕາສ່ວນທີ່ສູງກວ່າປະຊາຊົນທີ່ຢູ່ໃນເຂດອື່ນໆ. ດັ່ງນັ້ນ, ຈາກຜົນຂອງການສຶກສານີ້ ແມ່ນສະເໜີໃຫ້ລັດຖະບານມີວິທີການແກ້ໄຂຄວາມທຸກຍາກ ແລະ ສົ່ງເສີມການຜະລິດກະສິກຳຢ່າງເໝາະສົມ ເປັນຕົ້ນແມ່ນການຍົກລະດັບການສຶກສາ, ຍົກສູງປະສິດທິພາບການຜະລິດກະສິກຳ ໂດຍສະເພາະແມ່ນການໃຫ້ຄວາມຮູ້ທາງດ້ານເຕັກນິກໃໝ່ໃນການຜະລິດກະສິກຳ ພ້ອມທັງຊຸກຍູ້ ແລະ ສົ່ງເສີມໃຫ້ປະຊາຊົນມີໂອກາດ ແລະ ມີຄວາມສະດວກຫຼາຍຂຶ້ນ ໃນການຄ້າຂາຍສິນຄ້າ ທັງຢູ່ໃນຕະຫຼາດພາຍໃນ ແລະ ການຄ້າຂາຍຂ້າມດ່ານຊາຍແດນ.

# 5. ສະຫຼຸບ ແລະ ຂໍ້ສະເໜີທາງດ້ານນະໂຍບາຍ

## 5.1 ສະຫຼຸບ

ໃນໄລຍະທົດສະວັດທີ່ຜ່ານມາ ການຜະລິດສິນຄ້າກະສິກຳຂອງຊາວກະສິກອນຢູ່ແຂວງອຸດົມໄຊ ແລະ ຫຼວງນ້ຳທາ ແມ່ນມີການຂະຫຍາຍຕົວຂຶ້ນເປັນກ້າວໆ, ເລີ່ມມີໜໍ່ແໜງໃນການຫັນເປັນກຸ່ມການຜະລິດ ແລະ ຄ້າຂາຍ, ການຜະລິດຊີ້ນ ແລະ ປາ ເລີ່ມມີການຫັນເປັນຟາຣ໌ມ. ພືດສິນຄ້າທີ່ຜະລິດຫຼາຍຢູ່ໃນເຂດນີ້ແມ່ນຢາງພາລາ, ກ້ວຍ, ອ້ອຍ, ມັນຕົ້ນ, ສາລີ, ເຂົ້າ, ໝາກໂມ, ມັນດ້າງ, ໝາກອຶ, ໝາກແຕງ, ຊາຕົ້ມນ້ຳ ແລະ ພືດຕະກູນຖົ່ວ... ເຖິງຢ່າງໃດກໍ່ຕາມ, ການຜະລິດກະສິກຳເປັນສິນຄ້າຂອງ 2 ແຂວງນີ້ ສ່ວນໃຫຍ່ແມ່ນຍັງເປັນການຜະລິດຂະໜາດນ້ອຍ, ກະແຈກກະຈາຍ, ຂຶ້ນກັບທຳມະຊາດ ແລະ ເຮັດຕາມລະດູການ; ສະມັດຕະພາບ ແລະ ຄຸນນະພາບຍັງຕ່ຳ, ຍັງບໍ່ມີການຈັດສັນແບ່ງເຂດການຜະລິດທີ່ຊັດເຈນ. ການຜະລິດຍັງບໍ່ທັນເປັນຕ່ອງໂສ້ຄົບວົງຈອນ, ບໍ່ທັນຕິດພັນກັບການປຸງແຕ່ງ ແລະ ຕະຫຼາດພໍປານໃດ, ການຈັດຕັ້ງການຜະລິດບໍ່ທັນເຂັ້ມແຂງ ແລະ ຍັງບໍ່ທັນມີສະຫະກອນການຜະລິດຈັກແຫ່ງຢູ່ໃນ 2 ແຂວງນີ້ ຊຶ່ງຍັງຜະລິດ ແລະ ຂາຍພໍໃຜພໍລາວຢູ່. ກຳລັງການຜະລິດຍັງອ່ອນນ້ອຍ-ຫຼູ້ຫຼັ້ງ, ການນຳໃຊ້ກົນຈັກ, ເຕັກນິກ-ເຕັກໂນໂລຊີ ແລະ ວິທະຍາສາດຍັງຈຳກັດ, ຊາວກະສິກອນຍັງຂາດຄວາມຮູ້ດ້ານການປູກ-ການລ້ຽງ ແລະ ການປຸງແຕ່ງ, ຜູ້ຜະລິດຢູ່ໃນສອງແຂວງນີ້ແມ່ນມີທັງຄົນຈີນ ແລະ ຄົນລາວ ເປັນສ່ວນໃຫຍ່ ທີ່ຜະລິດເພື່ອຕອບສະໜອງໃຫ້ແກ່ຕະຫຼາດພາຍໃນ ແລະ ສົ່ງອອກໄປ ສປ.ຈີນ ເປັນຫຼັກ. ສຳລັບການຜະລິດພືດຜັກສະບຽງອາຫານເພື່ອຕອບສະໜອງໃຫ້ແກ່ຕະຫຼາດພາຍໃນແມ່ນເຫັນວ່າພຽງພໍ ແລະ ສາມາດສົ່ງອອກໄປຈີນອີກດ້ວຍ; ສຳລັບໝູ, ສັດປີກ ແລະ ປາ ແມ່ນພໍກຸ້ມກິນຢູ່ແຕ່ພາຍໃນແຂວງ, ແຕ່ປະເພດຊີ້ນ ແລະ ໄຂ່ ແມ່ນຍັງບໍ່ພຽງພໍເທື່ອ.

ຈາກຜົນຂອງການວິເຄາະທາງດ້ານເສດຖາມິຕິຕໍ່ກັບການຜະລິດກະສິກຳ ແລະ ຄວາມທຸກຍາກ ໂດຍການນຳໃຊ້ຂໍ້ມູນຈາກການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ ຄັ້ງທີ VI (Lao Comsumption and Expenditure Survey - LECS VI, 2018/2019) ຂອງສອງແຂວງດັ່ງກ່າວ ພົບວ່າການຄາດຄະເນຜົນກະທົບຂອງບັນດາປັດໄຈຕ່າງໆຕໍ່ກັບຄວາມທຸກຍາກຢູ່ໃນບົດສຶກສານີ້ ໂດຍສ່ວນໃຫຍ່ແລ້ວແມ່ນເປັນປັດໄຈສຳຄັນທີ່ສາມາດເຮັດໃຫ້ຄວາມທຸກຍາກມີໂອກາດຫຼຸດລົງ ຊຶ່ງບົດລາຍງານນີ້ໄດ້ສະແດງໃຫ້ເຫັນຢູ່ໃນສາມດ້ານທີ່ສຳຄັນຄືດັ່ງລຸ່ມນີ້:

*ດ້ານການຜະລິດກະສິກຳຕໍ່ກັບການແກ້ໄຂຄວາມທຸກຍາກ:* ໃນບົດສຶກສານີ້ໄດ້ສະຫຼຸບໃຫ້ເຫັນໄດ້ວ່າ ເຖິງແມ່ນວ່າຂະໜາດຂອງການຄອບຄອງທີ່ດິນກະສິກຳຈະບໍ່ແຕກຕ່າງກັນປານໃດກໍ່ຕາມ ແຕ່ເຫັນວ່າກຸ່ມຜູ້ທີ່ທຸກຍາກຈະໄດ້ຮັບຜົນຜະລິດກະສິກຳໜ້ອຍກວ່າກຸ່ມຜູ້ທີ່ພົ້ນທຸກ ປະມານ 30% ແລະ ລວມຍອດການຂາຍຜົນຜະລິດກະສິກຳຂອງເຂົາເຈົ້າກໍ່ຕ່ຳກວ່າ 50%. ເມື່ອປຽບທຽບກັນລະຫວ່າງກຸ່ມຄົນທີ່ຜະລິດກະສິກຳຢູ່ໃນເຂດເມືອງທີ່ມີຊາຍແດນຕິດກັບ ສປ.ຈີນ ແມ່ນເຫັນໄດ້ວ່າ ກຸ່ມຄົນຜູ້ທີ່ທຸກຍາກສາມາດຜະລິດຜົນຜະລິດກະສິກຳໂດຍສະເລ່ຍໄດ້ໜ້ອຍກວ່າກຸ່ມຄົນຜູ້ທີ່ພົ້ນທຸກ ປະມານ 8 ເທົ່າ; ອີກດ້ານໜຶ່ງ ສຳລັບການຜະລິດສິນຄ້າຂອງກຸ່ມຄົນຜູ້ທີ່ພົ້ນທຸກນັ້ນ ເຫັນວ່າກຸ່ມຄົນທີ່ດຳລົງຊີວິດຢູ່ໃນຂົງເຂດທີ່ມີຊາຍແດນຕິດກັບ ສປ.ຈີນ ແມ່ນມີຜົນຜະລິດສູງກວ່າກຸ່ມຄົນທີ່ດຳລົງຊີວິດຢູ່ໃນເຂດທີ່ຈະມີສະຖານີລົດໄຟລາວ-ຈີນ ຕັ້ງຢູ່ ປະມານ 8 ເທົ່າ. ພ້ອມດຽວກັນນັ້ນ, ບັນດາປັດໄຈທາງດ້ານກະສິກຳທີ່ມີຜົນກະທົບຕໍ່ກັບຄວາມທຸກຍາກ

ໃນບົດສຶກສານີ້ແມ່ນໄດ້ພົບວ່າ ການມີເນື້ອທີ່ທຳການຜະລິດ, ມີຜົນຜະລິດເປັນສິນຄ້າ ແລະ ໄດ້ຂາຍສິນຄ້ານັ້ນ ແມ່ນເປັນປັດໄຈສຳຄັນໃນການເຮັດໃຫ້ຄວາມທຸກຍາກຫຼຸດລົງ, ແຕ່ເຖິງຢ່າງໃດກໍ່ຕາມ ການໃຫ້ຄຳແນະນຳທາງດ້ານວິຊາການໃນການຜະລິດກະສິກຳຂອງຂະແໜງການທີ່ກ່ຽວຂ້ອງ ແມ່ນຍັງບໍ່ທັນສາມາດຊຸກຍູ້ເຮັດໃຫ້ຄວາມທຸກຍາກຫຼຸດລົງໄດ້ເທື່ອ ເນື່ອງຈາກວ່າບາງຂົງເຂດແມ່ນມີຄວາມຫຍຸ້ງຍາກໃນການປະສານງານ, ການສື່ສານ ແລະ ຄວາມເຂົ້າໃຈຂອງຊາວກະສິກອນຕໍ່ກັບເລື່ອງເຕັກນິກວິຊາການຍັງບໍ່ທັນເລິກເຊິ່ງ ຫຼື ບາງເຕັກນິກວິທີການທີ່ໄດ້ແນະນຳໃຫ້ແກ່ຊາວກະສິກຳຢູ່ໃນຂົງເຂດດັ່ງກ່າວ ແມ່ນຍັງບໍ່ທັນສອດຄ່ອງກັບສະພາບແວດລ້ອມໃນການຜະລິດກະສິກຳຕົວຈິງຂອງເຂົາເຈົ້າ.

*ດ້ານການຄ້າຂາຍສິນຄ້າກະສິກຳຂອງຊາວກະສິກອນ ເພື່ອແກ້ໄຂຄວາມທຸກຍາກ:* ໃນບົດສຶກສານີ້ກໍ່ສະແດງໃຫ້ເຫັນໄດ້ວ່າ ໂດຍລວມແລ້ວການຂາຍສິນຄ້າກະສິກຳຂອງກຸ່ມຄົນຜູ້ທີ່ທຸກຍາກແມ່ນຕໍ່າກວ່າກຸ່ມຄົນຜູ້ທີ່ພົ້ນທຸກປະມານໜຶ່ງເທົ່າຕົວ; ເຖິງວ່າໃນຫຼາຍໆບ້ານຈະມີຕະຫຼາດຄ້າຂາຍສິນຄ້າແລ້ວກໍ່ຕາມ ລວມທັງໃນເຂດການຄ້າຊາຍແດນ ແຕ່ກຸ່ມຄົນຜູ້ທີ່ທຸກຍາກກໍ່ຍັງມີຄວາມສາມາດໃນການຂາຍສິນຄ້າໄດ້ໜ້ອຍກວ່າກຸ່ມຄົນຜູ່ທີ່ພົ້ນທຸກຢູ່; ເມື່ອພິຈາລະນາຕາມເງື່ອນໄຂຂອງກຸ່ມຄົນທີ່ຢູ່ໃນເຂດຊາຍແດນ ແລະ ເຂດເມືອງທີ່ມີສະຖານີທາງລົດໄຟຕັ້ງຢູ່ແລ້ວ ກໍ່ເຫັນວ່າການຂາຍສິນຄ້າກະສິກຳຂອງກຸ່ມຄົນທີ່ຢູ່ໃນເຂດຊາຍແດນ ແມ່ນສູງກວ່າກຸ່ມຄົນທີ່ຢູ່ໃນເຂດທີ່ມີສະຖານີລົດໄຟ ລາວ-ຈີນ ຕັ້ງຢູ່ ປະມານ 7 ເທົ່າ, ບາງສາເຫດທີ່ສາມາດອະທິບາຍໄດ້ນັ້ນ ຄືກຸ່ມຄົນທີ່ຢູ່ໃນເຂດຊາຍແດນແມ່ນມີຄວາມສະດວກໃນການຄ້າຂາຍຫຼາຍກວ່າ ແລະ ຢູ່ໃກ້ກັບຕະຫຼາດຈີນ ຊຶ່ງເປັນການກະຕຸກຊຸກຍູ້ໃຫ້ເຂົາເຈົ້າໄດ້ທຳການຜະລິດ ແລະ ຄ້າຂາຍສິນຄ້າກະສິກຳຂອງຕົນ. ອີກດ້ານໜຶ່ງ, ຜົນຂອງການນຳໃຊ້ logit model ໄດ້ສະແດງໃຫ້ເຫັນວ່າ ການຂາຍສິນຄ້າກະສິກຳ ໂດຍສະເພາະການຂາຍໃນຕະຫຼາດທ້ອງຖິ່ນທີ່ມີຢູ່ໃນແຕ່ລະບ້ານນັ້ນ ແມ່ນເປັນຊ່ອງທາງທີ່ສຳຄັນໃນການແກ້ໄຂຄວາມທຸກຍາກ. ແຕ່ເຖິງຢ່າງໃດກໍ່ຕາມ, ການຄ້າຂາຍສິນຄ້າກະສິກາຢູ່ໃນເຂດຊາຍແດນ ແລະ ເຂດທີ່ມີສະຖານີລົດໄຟຕັ້ງຢູ່ນັ້ນ ແມ່ນຍັງບໍ່ທັນສະແດງໃຫ້ເຫັນເຖິງຄວາມສຳພັນໃນການແກ້ໄຂຄວາມທຸກຍາກ ອັນນີ້ກໍ່ອາດຈະເປັນຍ້ອນເຫດຜົນທີ່ວ່າ ການຄ້າຂາຍຢູ່ໃນເຂດຊາຍແດນ ໂດຍສະເພາະແມ່ນເຂດຊາຍແດນທີ່ເປັນດ່ານສາກົນ ສ່ວນໃຫຍ່ແມ່ນນັກທຸລະກິດ, ນັກລົງທຶນ, ແມ່ຄ້າລາຍໃຫຍ່ ແລະ ມີຄວາມສາມາດທາງດ້ານການເງິນທີ່ພຽງພໍ ຈຶ່ງຈະມີເງື່ອນໄຂໃນການຄ້າຂາຍສິນຄ້າຂ້າມແດນໄດ້; ສ່ວນຄົນຜູ້ທີ່ທຸກຍາກສ່ວນຫຼາຍ ແມ່ນໄດ້ຂາຍສິນຄ້າຂອງຕົນໃຫ້ແກ່ຜູ້ຄ້າມືກາງ ຫຼື ຂາຍໃຫ້ບໍລິສັດທີ່ໄດ້ເຮັດສັນຍາໃນການຜະລິດ ແລະ ຊື້-ຂາຍສິນຄ້າກະສິກຳ. ສ່ວນສິ່ງອຳນວຍຄວາມສະດວກໃນການມີສະຖານີລົດໄຟກໍ່ອາດຈະເປັນເງື່ອນໄຂທີ່ຄ້າຍຄືກັນ ຊຶ່ງຄົນຜູ້ທີ່ທຸກຍາກຈຳນວນຫຼາຍບໍ່ສາມາດມີທຶນຮອນພຽງພໍໃນການນຳສົ່ງສິນຄ້າຂອງຕົນໄປຂາຍໄດ້ ໂດຍການຄ້າຂາຍຜ່ານລະບົບທາງລົດໄຟນັ້ນ ແມ່ນຕ້ອງມີສິນຄ້າເປັນຈຳນວນຫຼາຍ, ຕ້ອງໄດ້ຜ່ານລະບົບສາງສິນຄ້າ ແລະ ມີການຂົນສົ່ງທີ່ເປັນລະບົບຄົບຊຸດ ຊຶ່ງມີແຕ່ນັກທຸລະກິດ ແລະ ຜູ້ຄ້າມືກາງເປັນສ່ວນໃຫຍ່ ຈຶ່ງສາມາດມີທຶນຮອນພຽງພໍໃນການນຳໃຊ້ລະບົບດັ່ງກ່າວ ເພື່ອທຳການຄ້າຂາຍສິນຄ້າໃນຮູບແບບການຂົນສົ່ງຂະໜາດໃຫຍ່ໄດ້. ສະນັ້ນ, ທຸກພາກສ່ວນທີ່ກ່ຽວຂ້ອງ ລວມທັງຊາວກະສິ ກອນເອງ ແມ່ນຕ້ອງໄດ້ເອົາໃຈໃສ່ໃນການສຶກສາຄົ້ນຄວ້າ ແລະ ກະກຽມຄວາມພ້ອມ ເພື່ອສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ຊາວກະສິກອນທຸກຄົນ ສາມາດນຳໃຊ້ກາລະໂອກາດ ແລະ ເງື່ອນໄຂທີ່ຈະມີທາງລົດໄຟແລ່ນຜ່ານ ໂດຍສະເພາະແມ່ນຢູ່ໃນເຂດທີ່ຈະມີສະຖານີລົດໄຟຕັ້ງຢູ່ນັ້ນ ເພື່ອເຮັດໃຫ້ເຂົາເຈົ້າສາມາດຜະລິດ ແລະ ນຳເອົາຜົນຜະລິດຂອງເຂົາ ເຈົ້າໄປທຳມາຄ້າຂາຍ ໂດຍຜ່ານການນຳໃຊ້ເສັ້ນທາງລົດໄຟດັ່ງກ່າວໃຫ້ໄດ້ຜົນຜະໂຫຍດສູງສຸດ. ດັ່ງນັ້ນ, ໃນຈຸດນີ້ແມ່ນຕ້ອງໄດ້ມີການສຶກສາຄົ້ນຄວ້າໃຫ້ເລິກເຊິ່ງ ແລະ ລະອຽດຍິ່ງຂຶ້ນຕື່ມ ເພື່ອເປັນຖານຂໍ້ມູນຮັບໃຊ້ໃຫ້ແກ່ການວາງນະໂຍບາຍ ແລະ ແຜນງານລະອຽດ ໃນການຍາດແຍ່ງເອົາຜົນປະໂຫຍດຈາກການນຳໃຊ້ເສັ້ນທາງລົດໄຟດັ່ງກ່າວ.

*ສຳລັບປັດໄຈທີ່ເປັນຄຸນລັກສະນະຂອງບຸກຄົນຕໍ່ກັບຄວາມທຸກຍາກ:* ໃນບົດສຶກສານີ້ແມ່ນພວກເຮົາສາມາດສະຫຼຸບໄດ້ວ່າ ເມື່ອເບິ່ງເຖິງລາຍລະອຽດຂອງແຕ່ລະຕົວປ່ຽນທີ່ມີຜົນກະທົບຕໍ່ກັບຄວາມທຸກຍາກແລ້ວ ເຫັນວ່າມີຕົວປ່ຽນດ້ານອາຍຸ, ລະດັບການສຶກສາ, ການມີອາຊີບທີ່ຫຼາກຫຼາຍ, ການປະກອບອາຊີບທີ່ບໍ່ແມ່ນການກະສິກຳ, ການມີຊັບສິນໃນຄອບຄອງ, ການມີສັດລ້ຽງໃຫຍ່, ການເຂົ້າເຖິງແຫຼ່ງເງິນກູ້ຢືມ, ການດຳລົງຊີວິດຢູ່ໃນເຂດຕົວເມືອງ (ໂດຍສະເພາະແມ່ນເມືອງດ່ານການຄ້າຊາຍແດນ) ແລະ ບ້ານທີ່ຢູ່ບໍ່ຫ່າງໄກຈາກຕົວເມືອງ ແມ່ນມີໂອກາດເຮັດໃຫ້ຄວາມທຸກຍາກຫຼຸດລົງ ຊຶ່ງ

ສອດຄ່ອງກັນກັບການສຶກສາຄົ້ນຄວ້າໃນຫຼາຍໆຫົວບົດທີ່ຜ່ານມາ; ແຕ່ອັນສຳຄັນທີ່ສະແດງໃຫ້ເຫັນຢູ່ໃນກຸ່ມປັດໄຈເຫຼົ່ານີ້ ແມ່ນການທີ່ຊາວກະສິກອນມີລະດັບການສຶກສາທີ່ດີ ແລະ ມີເງື່ອນໄຂອື່ນໆທີ່ໃຫ້ການສະໜັບສະໜູນໃຫ້ແກ່ກຸ່ມຄົນຜູ້ທີ່ທຸກຍາກ ໂດຍສະເພາະແມ່ນກຸ່ມຄົນທີ່ມີອາຊີບທາງດ້ານກະສິກຳນັ້ນ ແມ່ນຈະຊ່ວຍເຮັດໃຫ້ເຂົາເຈົ້າມີເງື່ອນໄຂ ແລະ ມີກາລະໂອກາດສູງຂຶ້ນໃນການທຳການຜະລິດກະສິກຳ ລວມທັງການຜະລິດກະສິກຳຕາມສັນຍາ ແລະ ການທຳມາຄ້າຂາຍສິນຄ້າກະສິກຳຂອງຕົນ ເພື່ອສ້າງລາຍຮັບໃຫ້ແກ່ຕົນເອງ ແລະ ຄອບຄົວ, ທັງເປັນການສະສົມທຶນຮອນໄວ້ລົງທຶນໃນການຂະຫຍາຍການຜະລິດຕໍ່ໄປ ຊຶ່ງທັງໝົດນັ້ນກໍ່ຈະເປັນເງື່ອນໄຂເຮັດໃຫ້ເຂົາເຈົ້າສາມາດແກ້ໄຂຄວາມທຸກຍາກໄດ້ຢ່າງຍືນຍົງ.

## 5.2 ບາງຂໍ້ສະເໜີແນະທີ່ສຳຄັນຈາກຜົນຂອງການສຶກສາ

- ***ດ້ານການຜະລິດກະສິກຳເປັນສິນຄ້າ***

(1) ເອົາໃຈໃສ່ ແລະ ສຸມທຸກຄວາມພະຍາຍາມເຂົ້າໃນການຄຸ້ມຄອງທີ່ດິນນາ ແລະ ທີ່ດິນກະສິກຳອື່ນໆຢ່າງຮັດກຸມ; ວາງແຜນ, ຈັດສັນ, ວິໄຈດິນ ແລະ ແບ່ງເຂດນຳໃຊ້ທີ່ດິນສຳລັບການປູກ-ການລ້ຽງ ຕາມທ່າແຮງ, ຄວາມເໝາະສົມຂອງຄຸນນະພາບດິນ ແລະ ຄວາມສາມາດຕົວຈິງຂອງແຕ່ລະເຂດ ແລະ ຂອງແຕ່ລະຄົວເຮືອນ ໂດຍສະເພາະແມ່ນຄົວເຮືອນທີ່ທຸກຍາກ ສຳລັບການປູກພືດ ແລະ ການລ້ຽງສັດແຕ່ລະຊະນິດ ເພື່ອຮັບປະກັນການຜະລິດໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ.

(2) ສຸມການລົງທຶນໃສ່ໂຄງລ່າງພື້ນຖານດ້ານການກະສິກຳຢູ່ໃນເຂດພື້ນທີ່ທີ່ມີທ່າແຮງ ແລະ ສຳຄັນຕົ້ນຕໍ ເປັນຕົ້ນແມ່ນຊົນລະປະທານ, ໄຟຟ້າ ແລະ ເສັ້ນທາງຄົມມະນາຄົມ ຕ້ອງພັດທະນາໄປຄຽງຄູ່ກັນ ເພື່ອເຮັດໃຫ້ການຜະລິດກະສິກຳກາຍເປັນການຜະລິດແບບຊົນລະກະເສດ, ສາມາດເຮັດໃຫ້ຊາວກະສິກອນໃນເຂດຊົນນະບົດ ຫຼື ຄົວເຮືອນທຸກຍາກສາມາດນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າສູ່ການຜະລິດໄດ້ຢ່າງກວ້າງຂວາງ, ຫຼາກຫຼາຍ ແລະ ສາມາດທຳການຜະລິດໄດ້ໃນຫຼາຍລະດູການ.

(3) ສົ່ງເສີມ ແລະ ຊ່ວຍໜູນໃນການຈັດຕັ້ງກຸ່ມການຜະລິດ ແລະ ສະຫະກອນການຜະລິດຢ່າງແຂງແຮງ ເພື່ອເພີ່ມອຳນາດໃຫ້ແກ່ຊາວກະສິກອນ ແລະ ຜູ້ທຸກຍາກເຂົ້າເຖິງສິນເຊື່ອ, ເຕັກໂນໂລຊີ, ເຕັກນິກວິຊາການ ແລະ ມີອຳນາດໃນການຕໍ່ລອງລາຄາ; ພ້ອມທັງເຮັດໃຫ້ການຜະລິດກະສິກຳທີ່ເປັນຕ່ອງໂສ້ທີ່ຄົບຊຸດ, ຕິດພັນກັບການປຸງແຕ່ງ ແລະ ການບໍລິການ.

(4) ສ້າງຄວາມເຂັ້ມແຂງໃຫ້ແກ່ສູນຄົ້ນຄວ້າກະສິກຳ ແລະ ສະຖານີບໍລິການເຕັກນິກຂັ້ນເມືອງ ໃຫ້ເຂົາເຈົ້າສາມາດເຮັດໜ້າທີ່ໃນການສະໜອງການບໍລິການໄດ້ຢ່າງເຕັມເມັດເຕັມໜ່ວຍ ເປັນຕົ້ນແມ່ນການຈັດສັນພະນັກງານວິຊາການທີ່ມີປະສົບປະການ ແລະ ຄວາມຊຳນານງານສະເພາະດ້ານເຂົ້າປະຈຳການ, ສະໜອງງົບປະມານສົ່ງເສີມວິຊາການຂອງໂຄງການສົ່ງເສີມການຜະລິດເປັນສິນຄ້າ ແລະ ການຄ້ຳປະກັນດ້ານສະບຽງອາຫານ ໃຫ້ໄດ້ທັນຕາມລະດູການຜະລິດຂອງຊາວກະສິກອນ ໂດຍສະເພາະແມ່ນຊາວກະສິກອນຜູ້ທີ່ທຸກຍາກ.

(5) ທົບທວນ ແລະ ຈັດຕັ້ງປະຕິບັດບັນດານະໂຍບາຍຊ່ວຍໜູນດ້ານຕ່າງໆໃຫ້ໄດ້ຢ່າງເປັນຮູບປະທຳ ເປັນຕົ້ນແມ່ນບັນດານິຕິກຳລະອຽດໃນການສົ່ງເສີມການຄ້າຂາຍຢູ່ເຂດຊາຍແດນ, ການຄ້າຂາຍຂ້າມແດນ ໂດຍສະເພາະແມ່ນການຄ້າຂາຍສິນຄ້າກະສິກຳໃນຂົງເຂດທີ່ມີສະຖານີລົດໄຟຕັ້ງຢູ່ ພ້ອມທັງສະເໜີຂໍອະນຸມັດການຈັດຕັ້ງປະຕິບັດນະໂຍບາຍດ້ານພາສີ-ອາກອນ (ລວມທັງອາກອນມູນຄ່າເພີ່ມ), ນະໂຍບາຍສິນເຊື່ອ ແລະ ນະໂຍບາຍຫຼຸດຜ່ອນຄ່າໄຟຟ້າຢ່າງທັນການ ເພື່ອການຜະລິດກະສິກຳເປັນສິນຄ້າ.

(6) ນອກຈາກທີ່ເນັ້ນໜັກໃສ່ການຜະລິດພືດ ແລະ ສັດ ເພື່ອສົ່ງອອກໄປຕ່າງປະເທດແລ້ວ ແມ່ນຍັງຕ້ອງສົ່ງເສີມການຜະລິດສະບຽງອາຫານເພື່ອເປັນສິນຄ້າຕອບສະໜອງໃຫ້ແກ່ຕະຫຼາດຢູ່ພາຍໃນແຂວງໄປພ້ອມໆກັນ ເພື່ອເປັນການຫຼຸດຜ່ອນການນຳເຂົ້າຈາກແຂວງອື່ນ ແລະ ຕ່າງປະເທດ ເປັນຕົ້ນແມ່ນຊີ້ນໝູ, ປາ, ສັດປີກ, ໄຂ່, ໝາກໄມ້ ແລະ ພືດຜັກສີດອື່ນໆ. ພ້ອມກັນນັ້ນ, ກໍ່ຕ້ອງເນັ້ນໃສ່ການຜະລິດພືດຜັກສະອາດເອກະລັກພື້ນເມືອງ ເພື່ອສົ່ງ

ອອກໄປສູ່ຕ່າງແຂວງ ແລະ ຕ່າງເມືອງທີ່ບໍ່ມີຄວາມສາມາດຜະລິດໄດ້ ເຊັ່ນ: ນະຄອນຫຼວງພະບາງ, ເມືອງວັງວຽງ ແລະ ນະຄອນຫຼວງວຽງຈັນ ແລະ ບ່ອນອື່ນໆ.

- ***ດ້ານການຄ້າຂາຍ ແລະ ຈໍາໜ່າຍຜະລິດຕະພັນກະສິກໍາ***

(1) ສືບຕໍ່ຮ່ວມມືກັບຝ່າຍ ສປ.ຈີນ ຊອກຫາກົນໄກ ແລະ ວິທີການ ເພື່ອເຮັດໃຫ້ 16 ຊະນິດພືດ ຈາກໂຄງການປູກພືດທົດແທນການຝິ່ນທີ່ຝ່າຍຈີນໄດ້ເປີດໃຫ້ແກ່ການຄ້າຊາຍແດນນັ້ນ ມີຂັ້ນຕອນ ແລະ ຂະບວນການດໍາເນີນການຕ່າງໆທີ່ຈະແຈ້ງ, ຊັດເຈນ ແລະ ກະທັດລັດ ຄືກັນກັບ 6 ຊະນິດພືດ ທີ່ໄດ້ເຊັນສັນຍາຢ່າງເປັນທາງການນໍາກັນມາກ່ອນໜ້ານັ້ນ. ຖ້າເປັນໄປໄດ້ແມ່ນໃຫ້ມີໂກຕາປະຈໍາປີຄັກແນ່ ຄືກັນກັບອ້ອຍລໍາ, ຢາງພາລາ, ເຂົ້າ ແລະ ງົວ ກໍ່ແຫ່ງເປັນການດີ.

(2) ຍົກສູງການຮ່ວມມືກັບຝ່າຍ ສປ.ຈີນ ໃນການຄຸ້ມຄອງສັນຍາການຜະລິດ ແລະ ສັນຍາການຊື້ຂາຍສິນຄ້າກະສິກໍາເຮັດໃຫ້ການຄ້າຊາຍແດນ, ການຄ້າຂ້າມແດນເຂົ້າສູ່ລະບົບທີ່ເຂັ້ມງວດ ຊຶ່ງເມື່ອຝ່າຍໃດຝ່າຍໜຶ່ງຫາກຜິດສັນຍາກໍ່ສາມາດດໍາເນີນການຕາມລະບຽບກົດໝາຍຂອງທັງສອງປະເທດໄດ້.

(3) ຈັດຕັ້ງປະຕິບັດໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ການຄ້າຢ່າງເປັນລະບົບ ແລະ ສ້າງຄວາມເຂົ້າໃຈກ່ຽວກັບກົນໄກ-ລະບຽບການການຄ້າຂ້າມຊາຍແດນໃຫ້ແກ່ຜູ້ຄ້າ ແລະ ຊາວກະສິກອນທີ່ຜະລິດກະສິກໍາເປັນສິນຄ້າຂອງຝ່າຍລາວ ເປັນຕົ້ນແມ່ນການກວດກາເລື່ອງຄຸນນະພາບ, ລະບົບສຸຂານາໄມພືດ ແລະ ການຂ້າອົບເຊື້ອຂອງສິນຄ້າກະສິກໍາລາວກ່ອນທີ່ຈະນໍາເຂົ້າ ສປ.ຈີນ ເພື່ອຫຼີກເວັ້ນບັນຫາທີ່ຈະຕາມມາຢູ່ປາຍທາງ ແລະ ສາມາດແກ້ໄຂບັນຫາໄດ້ຢ່າງຖືກຕ້ອງທັນການ.

(4) ຮ່ວມກັບຝ່າຍ ສປ.ຈີນ ພິຈາລະນາ ເພື່ອເຮັດໃຫ້ດ່ານຊາຍແດນທຸກດ່ານມີການຮ່ວມມືກັນຢ່າງໃກ້ສິດ, ມີການແຈ້ງຂໍ້ມູນໃຫ້ກັນຊາບຢ່າງເປັນທາງການ ແລະ ເປັນປະຈໍາ ກ່ຽວກັບສະພາບການປ່ຽນແປງຕ່າງໆທາງດ້ານການຄ້າ ແລະ ການບໍລິການຂອງດ່ານ ເພື່ອພ້ອມກັນແກ້ໄຂບັນຕ່າງໆທີ່ອາດຈະເກີດຂຶ້ນໄດ້ຢ່າງທັນການ.

- ***ດ້ານການແກ້ໄຂຄວາມທຸກຍາກຜ່ານການກະສິກໍາ***

(1) ການສຶກສາເປັນປັດໄຈສໍາຄັນອັນດັບໜຶ່ງຕໍ່ກັບທຸກໆອາຊີບ ຊຶ່ງເປັນສິ່ງສົມຄວນຢ່າງຍິ່ງທີ່ຈະຕ້ອງຖືກກໍານົດໃຫ້ເປັນຍຸດທະສາດໃນການແກ້ໄຂຄວາມທຸກຍາກຂອງ ສປປ.ລາວ ໂດຍລັດຖະບານຈະຕ້ອງໄດ້ສຸມໃສ່ປັບປຸງລະບົບການສຶກສາໃຫ້ດີຂຶ້ນ ແລະ ຂະຫຍາຍຕາໜ່າງການສຶກສາທີ່ດີໄປສູ່ຊົນນະບົດ (ທັງການສຶກສາພາກບັງຄັບ , ການຝຶກອົບຮົມສີມືແຮງງານ ແລະ ວິຊາຊີບ), ລວມທັງການຍົກລະດັບຄວາມຮູ້ດ້ານການວາງແຜນຄອບຄົວ ແລະ ການໂພຊະນາການທີ່ດີ ໂດຍສະເພາະແມ່ນການສ້າງກໍາລັງແຮງງານຂອງຄອບຄົວໃນວຽກງານກະສິກໍາ ເພື່ອສ້າງກາລະໂອກາດໃຫ້ແກ່ຜູ້ທີ່ທຸກຍາກໄດ້ຮັບການຍົກລະດັບຄວາມຮູ້ເພີ່ມສູງຂຶ້ນ.

(2) ພາກສ່ວນທີ່ກ່ຽວຂ້ອງ ແລະ ຊາວກະສິກອນ ຕ້ອງໄດ້ສຸມໃສ່ເລື່ອງການຍົກສູງປະສິດທິພາບ ແລະ ປະສິດທິຜົນໃນການຜະລິດກະສິກໍາເປັນສິນຄ້າ ດ້ວຍການນໍາໃຊ້ເນື້ອທີ່ດິນ ແລະ ປັດໄຈການຜະລິດທີ່ມີຢູ່ຢ່າງຈໍາກັດໃຫ້ເກີດຜົນປະໂຫຍດສູງສຸດ ໂດຍເອົາໃຈໃສ່ໃນການແນະນໍາ-ສົ່ງເສີມໃຫ້ປະຊາຊົນເຮັດການຜະລິດຕາມເຕັກນິກວິຊາການທີ່ຖືກຕ້ອງສອດຄ່ອງກັບສະພາບເສດຖະກິດ ແລະ ສັງຄົມຂອງເຂດນັ້ນໆ, ທັງຕ້ອງໄດ້ມີການປະສານງານຮ່ວມມືກັບບັນດາຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດບັນດາໂຄງການຕ່າງໆໃຫ້ເປັນໄປໃນລວງດຽວກັນ (Convergene Approach).

(3) ສ້າງເງື່ອນໄຂສະໜັບສະໜູນໃຫ້ທັງພາກລັດຖະບານ ແລະ ເອກະຊົນ ໃນການສ້າງວຽກເຮັດງານທໍາໃຫ້ມີຄວາມຫຼາກຫລາຍໃນທຸກສາຂາອາຊີບ (ໂດຍສະເພາະແມ່ນອາຊີບທີ່ມີຄວາມຈໍາເປັນ ແລະ ມີຄວາມໂດດເດັ່ນ) ທີ່ກໍາລັງຕ້ອງການແຮງງານທີ່ມີຄຸນນະພາບເປັນຈໍານວນຫຼາຍ.

(4) ພິຈາລະນານໍາໃຊ້ນະໂຍບາຍເລັ່ງດ່ວນ ແລະ ງ່າຍດາຍ (ພາຍໃນ 5 ປີ) ໃນການຫຼຸດຊ່ອງວ່າງການພັດທະນາລະຫວ່າງຕົວເມືອງ ແລະ ຊົນນະບົດໃຫ້ເປັນຮູບປະທໍາ ແລະ ດີຂຶ້ນກວ່າເກົ່າ ຜ່ານການພັດທະນາຜູ້ທີ່ທຸກຍາກຢູ່

ໃນເຂດຊົນນະບົດໃຫ້ມີທ່າແຮງດ້ານຄວາມຮູ້, ຄວາມຄິດ ແລະ ຄວາມກະຕືລືລົ້ນໃນການເຮັດໃຫ້ຕົນເອງ ແລະ ຄອບຄົວຫຼຸດພົ້ນອອກຈາກຄວາມທຸກຍາກ ແລະ ດ້ອຍພັດທະນາ.

## ເອກະສານອ້າງອີງ

ກະຊວງກະສິກຳ ແລະ ປ່າໄມ້ (2021). ບົດລາຍງານແລະ ຂໍ້ທິດຊີ້ນຳ ສະພາບການຈັດຕັ້ງປະຕິບັດ ແລະ ຄວາມຄືບໜ້າ ໃນການແກ້ໄຂບັນຫາການສົ່ງອອກມັນດ້າງ, ພືດຕະກຸນຖົ່ວ, ງົວ ແລະ ສືບຕໍ່ເຈລະຈາເປີດຕະຫຼາດ ເພື່ອສົ່ງອອກ ພືດຈາກ ສປປ ລາວ ໄປ ສປ ຈີນ, ສະບັບ ເລກທີ 0058/ກປ, ວັນທີ 2 ກຸມພາ 2021.

ກະຊວງກະສິກຳ ແລະ ປ່າໄມ້ (2020a). ບົດລາຍງານ ແລະ ການສະເໜີຂໍທິດຊີ້ນຳກ່ຽວກັບການສົ່ງພືດ ແລະ ຜະລິດ ຕະພັນພືດຈາກ ສປປ.ລາວ ໄປຍັງ ສປ. ຈີນ ຂອງກົມປູກຝັງ ຕໍ່ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 2703/ກປຜ, ລົງວັນທີ 28 ທັນວາ 2020.

ກະຊວງກະສິກຳ ແລະ ປ່າໄມ້ (2020b) ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາກະສິກຳ-ປ່າໄມ້ ແລະ ພັດທະ ນາຊົນນະບົດ ປະຈຳປີ 2019 ແລະ ທິດທາງແຜນການປີ 2020.

ກະຊວງອຸດສາຫະກຳ ແລະ ການຄ້າ, ກົມນຳເຂົ້າ ແລະ ສົ່ງອອກ (2021), ສະຖິຕິການສົ່ງອອກ ສິນຄ້າກະສິກຳ 2016-2020.

ກະຊວງແຜນການ ແລະ ການລົງທຶນ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (2015), ບົດຄົ້ນຄວ້າກ່ຽວກັບຜົນກະ ທົບຂອງການຜະລິດກະສິກຳຕາມສັນຍາ ຕໍ່ກັບຄວາມທຸກຍາກ ແລະ ສິ່ງແວດລ້ອມ ຢູ່ໃນ ສປປ.ລາວ, ໂຄງການ PEI-LAO.

ກະຊວງແຜນການ ແລະ ການລົງທຶນ, ສູນສະຖິຕິແຫ່ງຊາດ (2020), ບົດລາຍງານຜົນການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ ຄັ້ງທີ VI (Lao Comsumption and Expenditure Survey - LECS VI, 2018/2019)

ຄະນະໂຄສະນາອົບຮົມສູນກາງພັກ, (2016), ເອກະສານຊີ້ແຈງອະທິບາຍເພື່ອເຊື່ອມຊຶມກຳແໜ້ນເນື້ອໃນຂອງມະຕິ ກອງປະຊຸມໃຫຍ່ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ.

ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍກຸ່ມ ແລະ ສະຫະກອນ ສະບັບເລກທີ 606 ລບ, ລົງວັນທີ 26 ພະຈິກ 2020

ມະຕິກອງປະຊຸມຄົບຄະນະ ຄັ້ງທີ 7 ຂອງຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ສະໄໝທີ X.

ການປະເມີນການຈັດຕັ້ງປະຕິບັດແຜນດຳເນີນງານອິສະຕັນບູນສຳລັບປະເທດດ້ອຍພັດທະນາ, ທົດສະວັດ 2011-202 ຢູ່ໃນ ສປປ.ລາວ.

ສະພາວິທະຍາສາດສັງຄົມແຫ່ງຊາດ (2019), ບົດຄົ້ນຄວ້າໃນຫົວຂໍ້: "ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຢູ່ ສປປ ລາວ", ໂຄງການຄົ້ນຄວ້າວິທະຍາສາດສັງຄົມລະດັບຊາດ, ວັນທີ 21 ພຶດສະພາ 2019, ສະບັບປັບປຸງ.

ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ສູນຄົ້ນຄວ້າວິທະຍາສາດ ແລະ ນະໂຍບາຍເສດຖະກິດ-ສັງຄົມ (2020), ບົດ ຄົ້ນຄວ້າກ່ຽວກັບການປັບປຸງຮູບແບບທຸລະກິດກະສິກຳ ເພື່ອຊຸກຍູ້ກິດຈະກຳທຸລະກິດໃຫ້ມີປະສິດທິຜົນ ແນໃສ່ ຮັບປະກັນລາຍໄດ້ຂອງຊາວກະສິກອນໃຫ້ຍືງຍົງຢູ່ ສປປ.ລາວ.

ພະແນກແຜນການ ແລະ ການລົງທຶນແຂວງອຸດົມໄຊ (2020), ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະ ກິດ-ສັງຄົມ 9 ເດືອນ ແລະ ທິດທາງແຜນການ 3 ເດືອນທ້າຍປີ 2020 ຂອງແຂວງອຸດົມໄຊ.

ພະແນກແຜນການ ແລະ ການລົງທຶນແຂວງຫຼວງນ້ຳທາ (2020), ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດ ຖະກິດ-ສັງຄົມ 9 ເດືອນ ແລະ ທິດທາງແຜນການ 3 ເດືອນທ້າຍປີ 2020 ຂອງແຂວງຫຼວງນ້ຳທາ.

Ayalneh, B,. Konrad, H,. Benedikt, K,. (2005): Determinants of Poverty in Rural Ethiopia. Quartery Journal of international Agriculture 44, No.2: 101-120.

FOSTER, J., J. GREER and E. THORBECKE (1984): A Class of Decomposable Poverty Measures. In: Econometrica 52 (3): 761-766.

Grace, Y.W., Darachanthara, S., and Soukkhamthat, T., (2014). Economic valuation of land use in Oudomxay province, Lao PDR: Can REDD+ be effective in Maintaining Forests? *Land Journal 2014, 3, 1059-1074*; doi: 10.3390/land3031059.

Southavilay. B., Teruaki. N., and Shigeyoshi. T., (2012). Analysis on technical efficiency of maize farmers in the northern province if Lao PDR. *African Journal of Agriculture Research*. Vol. 7(49), pp. 6579-6587. December 27, 2012.

Thanthathep, K., Douangphila, P., Skamphanh, S., and Phichit, S., (2008). *Socio-Economic and Environment Impacts from Rubber Tree Plantation in Hat Nhao and Houay Dam Villages, Luang Namtha Province, Lao PDR*. Khon-Kaen, Thailand: Mekong Institute (MI).

Agricultural value chain - Wikipedia.

JENNIFER CHAIT Updated June 30, 2020.

www.definitions.net/definition/Commercial agriculture.

## ເອກະສານຊ້ອນທ້າຍ

**ຕາຕະລາງ 1**: **ອັດຕາການຕອບຂອງຂະໜາດຕົວຢ່າງທີ່ບັນລຸໄດ້, ແບ່ງຕາມແຕ່ລະແຂວງ**
(ຂະໜາດຕົວຢ່າງທີ່ບັນລຸໄດ້ສຳລັບ LECS VI ແມ່ນ: 10.029 ຄົວເຮືອນ, 48.910 ຄົນ)

| No | ແຂວງ | ຄົວເຮືອນທີ່ໄດ້ເກັບກຳຂໍ້ມູນຕົວຈິງ | ແຜນເກັບກຳຂໍ້ມູນຈຳນວນຄົວເຮືອນ | ອັດຕາສ່ວນຂອງການຕອບ (%) |
|---|---|---|---|---|
| | ສປປ.ລາວ | 10.029 | 10.144 | 98,56 |
| 1 | ນະຄອນຫຼວງວຽງຈັນ | 683 | 736 | 92,80 |
| 2 | ຜົ້ງສາລີ | 478 | 480 | 99,58 |
| 3 | ຫຼວງນ້ຳທາ | 495 | 496 | 99,80 |
| 4 | ອຸດົມໄຊ | 556 | 560 | 99,29 |
| 5 | ບໍ່ແກ້ວ | 491 | 496 | 98,99 |
| 6 | ຫຼວງພະບາງ | 621 | 624 | 99,52 |
| 7 | ຫົວພັນ | 544 | 544 | 100,00 |
| 8 | ໄຊຍະບູລີ | 606 | 608 | 99,67 |
| 9 | ຊຽງຂວາງ | 519 | 528 | 98,30 |
| 10 | ວຽງຈັນ | 624 | 624 | 100,00 |
| 11 | ບໍລິຄຳໄຊ | 541 | 544 | 99,45 |
| 12 | ຄຳມ່ວນ | 624 | 624 | 100,00 |
| 13 | ສະຫວັນນະເຂດ | 735 | 736 | 99,86 |
| 14 | ສາລະວັນ | 607 | 608 | 99,84 |
| 15 | ເຊກອງ | 410 | 416 | 98,56 |
| 16 | ຈຳປະສັກ | 678 | 688 | 98,55 |
| 17 | ອັດຕະປື | 417 | 432 | 89,87 |
| 18 | ໄຊສົມບູນ | 400 | 400 | 100,00 |

*ໝາຍເຫດ: ຢູ່ໃນແຂວງອັດຕະປື ແມ່ນມີຢູ່ 2 ບ້ານ ທີ່ບໍ່ໄດ້ຖືກສຳພາດ ເນື່ອງຈາກເຄື່ອນໄຟຟ້າແຕກ*

## ທີມງານສຶກສາຄົ້ນຄວ້າ

1. ທ່ານ ປອ ສິດທິຣິດ ຣາດຊະພົນ, ຮັກສານການຫົວໜ້າສູນຄົ້ນຄວ້ານະໂຍບາຍການພັດທະນາ, ກພຫ
2. ທ່ານ ສຸພິດ ດາຣາຈັນທຣາ, ທີ່ປຶກສາອາວຸໂສ ສູນຄົ້ນຄວ້ານະໂຍບາຍການພັດທະນາ, ກພຫ *(ຜູ້ຄົ້ນຄວ້າຫຼັກ)*
3. ທ່ານ ປອ ທະນົງຊາຍ ສຸກຄຳທັດ, ຮອງຫົວໜ້າ ສູນຄົ້ນຄວ້ານະໂຍບາຍການພັດທະນາ, ກພຫ *(ຜູ້ຄົ້ນຄວ້າຫຼັກ)*
4. ທ່ານ ນ ບຸບຜາວັນ ແກ້ວມີໄຊ, ຫົວໜ້າພະແນກຄົ້ນຄວ້າພັດທະນາເຂດແຄວ້ນ ແລະ ຫຼຸດຜ່ອນຄວາມທຸກຍາກ
5. ທ່ານ ພຸດທະຈັນ ຕົ້ນແພງ, ຮອງຫົວໜ້າພະແນກຄົ້ນຄວ້າສັງຄົມ ແລະ ສິ່ງແວດລ້ອມ
6. ທ່ານ ບຸນນະພົນ ແສງຄຳຢອງ, ພະແນກຄົ້ນຄວ້າພັດທະນາເຂດແຄວ້ນ ແລະ ຫຼຸດຜ່ອນຄວາມທຸກຍາກ
7. ທ່ານ ພັດທະນາ ເພັດໄຊສີ, ພະແນກຄົ້ນຄວ້າພັດທະນາເຂດແຄວ້ນ ແລະ ຫຼຸດຜ່ອນຄວາມທຸກຍາກ
8. ທ່ານ ນ. ນິພາລັກ ອຸ່ນອາລົມ, ພະແນກຄົ້ນຄວ້າພັດທະນາເຂດແຄວ້ນ ແລະ ຫຼຸດຜ່ອນຄວາມທຸກຍາກ
9. ທ່ານ ຈິດປະສົງ ວັນທອງທິບ, ພະແນກຄົ້ນຄວ້າພັດທະນາເຂດແຄວ້ນ ແລະ ຫຼຸດຜ່ອນຄວາມທຸກຍາກ
10. ທ່ານ ສົມເດດ ຂັນຕິວົງ, ພະແນກຄົ້ນຄວ້າພັດທະນາເຂດແຄວ້ນ ແລະ ຫຼຸດຜ່ອນຄວາມທຸກຍາກ

## ຄຳສະແດງຄວາມຂອບໃຈ :

ຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງມາຍັງອົງການສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ.ລາວ ທີ່ໄດ້ສະໜັບສະໜູນທາງດ້ານທຶນຮອນໃຫ້ແກ່ການສຶກສານຄົ້ນຄວ້າຄັ້ງນີ້. ຂໍຂອບອົກຂອບໃຈມາຍັງບັນດາຂະແໜງການທັງສູນກາງ ແລະ ທ້ອງຖິ່ນ ໂດຍສະເພາະແມ່ນ ພະແນກແຜນການ ແລະ ການລົງທຶນ, ພະແນກກະສິກຳ ແລະ ປ່າໄມ້, ພະແນກອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຂວງແຂວງຫຼວງນ້ຳທາ ແລະ ອຸດົມໄຊ; ສູນກັກກັນພືດ, ດ່ານການຄ້າຊາຍແດນສາກົນ ບໍ່ເຕັນ-ບໍ່ຫານ, ຫ້ອງການແຜນການ ແລະ ການລົງທຶນ ເມືອງນ້ຳທາ ແລະ ເມືອງຮຸນ, ບັນດາຜູ້ປະກອບການດ້ານການກະສິກຳ ແລະ ສູນສະຖິຕິແຫ່ງຊາດ ທີ່ໄດ້ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນອັນເປັນປະໂຫຍດ ແລະ ມີຄຸນຄ່າຢ່າງສູງໃຫ້ທີມງານສຶກສາຄົ້ນຄວ້າໃນຄັ້ງນີ້ ມານະທີ່ນີ້ດ້ວຍ.

**ສາລະບານ**


1. ພາກສະເໜີ ........................................................ 1
  1.1. ຄວາມເປັນມາ ........................................................ 1
  1.2. ຈຸດປະສົງຂອງການສຶກສາ ........................................................ 2
  1.3. ວິທີວິທະຍາສາລັບການສຶກສາ-ຄົ້ນຄວ້າ ........................................................ 2
2. ທົບທວນເອກະສານວັນນະກໍາ ກ່ຽວກັບການຜະລິດກະສິກໍາເປັນສິນຄ້າເພື່ອແກ້ໄຂຄວາມທຸກຍາກ ........................ 3
  2.1. ຄວາມສໍານຶກ ........................................................ 3
  2.2. ທິດທາງ, ນະໂຍບາຍ ແລະ ຍຸດທະສາດໃນການສົ່ງເສີມການຜະລິດກະສິກໍາເປັນສິນຄ້າເພື່ອແກ້ໄຂຄວາມທຸກຍາກຂອງພັກ ແລະ ລັດຖະບານ ແຫ່ງ ສປປ ລາວ. ........................................................ 3
  2.3. ຮູບແບບຂອງການຜະລິດກະສິກໍາເປັນສິນຄ້າ ຢູ່ໃນ ສປປ.ລາວ ........................................................ 5
  2.4. ຂະບວນການຫັນປ່ຽນຈາກການຜະລິດກະສິກໍາແບບກຸ້ມກິນ ໄປສູ່ການຜະລິດເປັນສິນຄ້າເພື່ອແກ້ໄຂຄວາມທຸກຍາກ ຢູ່ໃນ ສປປ ລາວ ........................................................ 10
  2.5. ໂສ້ການຜະລິດ ແລະ ການຄ້າສິນຄ້າກະສິກໍາ ຢູ່ໃນ ສປປ.ລາວ ........................................................ 15
  2.6. ສະພາບລວມຂອງເຂດພື້ນທີ່ການສຶກສາ ........................................................ 17
3. ຮູບແບບຈໍາລອງຜົນກະທົບຕໍ່ກັບລາຍໄດ້ຂອງຄົວເຮືອນ ........................................................ 18
    3.1. ຂໍ້ມູນ ........................................................ 18
    3.2. ຮູບແບບຈໍາລອງເສດຖາມິຕິ ........................................................ 21
4. ຜົນຂອງການສຶກສາຄົ້ນຄວ້າ ........................................................ 22
  4.1 ທ່າແຮງ ແລະ ສິ່ງອໍານວຍຄວາມສະດວກຕ່າງໆທີ່ເປັນເງື່ອນໄຂໃນການສະໜັບສະໜູນການຜະລິດ ແລະ ການຂາຍສິນຄ້າກະສິກໍາຂອງຊາວກະສິກອນ ........................................................ 22
  4.2. ການຜະລິດ ແລະ ການສະໜອງສິນຄ້າກະສິກໍາຂອງຊາວກະສິກອນ ........................................................ 24
  4.3. ຂະບວນການຄ້າຂາຍສິນຄ້າຂ້າມຊາຍແດນ ........................................................ 25
  4.4. ບັນຫາຄວາມຫຍຸ້ງຍາກໃນການຜະລິດ ແລະ ການຄ້າຂາຍສິນຄ້າກະສິກໍາ ........................................................ 27
    4.4.1. ດ້ານການຜະລິດ: ........................................................ 27
    4.4.2. ດ້ານການຄ້າຂາຍ ແລະ ຈໍາໜ່າຍຜະລິດຕະພັນ ........................................................ 28
  4.5. ຜົນທາງດ້ານເສດຖາມິຕິຕໍ່ກັບຄວາມທຸກຍາກ ........................................................ 28
    4.5.1. ການປຽບທຽບຄຸນລັກສະນະຕ່າງໆລະຫວ່າງຜູ້ທີ່ທຸກຍາກ ແລະ ຜູ້ທີ່ພົ້ນທຸກ ........................................................ 28
    4.5.2. ຜົນກະທົບຕໍ່ກັບຄວາມທຸກຍາກ ........................................................ 30
5. ສະຫຼຸບ ແລະ ຂໍ້ສະເໜີທາງດ້ານນະໂຍບາຍ ........................................................ 36
  5.1 ສະຫຼຸບ ........................................................ 36
  5.2. ບາງຂໍ້ສະເໜີແນະທີ່ສໍາຄັນຈາກຜົນຂອງການສຶກສາ ........................................................ 38
ເອກະສານອ້າງອີງ ........................................................ 41
ເອກະສານຊ້ອນທ້າຍ ........................................................ 43
ທີມງານສຶກສາຄົ້ນຄວ້າ ........................................................ 44
ຄໍາສະແດງຄວາມຂອບໃຈ: ........................................................ 44

## ສາລະບານຮູບ

ຮູບສະແດງທີ 1: ການຜະລິດກະສິກຳເປັນສິນຄ້າຕາມຮູບແບບທີ່ຄົວເຮືອນ/ຄອບຄົວຜະລິດເອງ ........................ 6
ຮູບສະແດງທີ 2: ການຜະລິດກະສິກຳເປັນສິນຄ້າຕາມຮູບແບບກຸ່ມການຜະລິດ........................................... 7
ຮູບສະແດງທີ 3: ການຜະລິດກະສິກຳເປັນສິນຄ້າຕາມຮູບແບບສະຫະກອນການຜະລິດ ................................ 7
ຮູບສະແດງທີ 4: ການຜະລິດກະສິກຳເປັນສິນຄ້າຕາມຮູບແບບການຜະລິດກະສິກຳຕາມສັນຍາ.......................... 9
ຮູບສະແດງທີ 5: ການຜະລິດກະສິກຳຕາມຮູບແບບຟາຣ໌ມຂະໜາດໃຫຍ່ ໂດຍບໍລິສັດ/ວິສາຫະກິດ.................. 10
ຮູບສະແດງທີ 6: ສິນຄ້າກະສິກຳທີ່ສົ່ງອອກໄປຫາປະເທດຄູ່ຄ້າ ........................................................ 14
ຮູບສະແດງທີ 7: ຕ່ອງໂສ້ຄຸນຄ່າທາງການກະສິກຳ .................................................................... 15
ຮູບສະແດງທີ 8: ຕ່ອງໂສ້ຄຸນຄ່າທາງການກະສິກຳ ຢູ່ໃນ ສປປ.ລາວ.................................................. 16
ຮູບສະແດງທີ 9: ແຜນທີ່ແຂວງຫຼວງນ້ຳທາ ແລະ ອຸດົມໄຊ ............................................................ 17
ຮູບສະແດງທີ 10: ຕົວຢ່າງຮູບແບບຂອງລະບົບການຜະລິດອ້ອຍຕາມສັນຍາຢູ່ເມືອງສິງ, ແຂວງຫຼວງນ້ຳທາ .......... 25

## ສາລະບານຕາຕະລາງ

ຕາຕະລາງທີ 1: ການສົ່ງອອກສິນຄ້າກະສິກຳຂອງ ສປປ ລາວ ໃນໄລຍະ 5 ປີ (2016-2020)....................... 13
ຕາຕະລາງທີ 2: ການຂະຫຍາຍຕົວທາງເສດຖະກິດ ຂອງ ແຂວງອຸດົມໄຊ ແລະ ຫຼວງນ້ຳທາ (2016-2020).......... 18
ຕາຕະລາງທີ 3: ຕົວປ່ຽນ ແລະ ຄ່າສະຖິຕິຂອງບັນດາຕົວປ່ຽນ ........................................................ 20
ຕາຕະລາງທີ 4: ສິນຄ້າກະສິກຳທີ່ສົ່ງຜ່ານ ສປປ.ລາວ ໄປປະເທດຕ່າງໆ (6 ທັນວາ 2019 ຫາ 20 ມິຖຸນາ 2020). 26
ຕາຕະລາງທີ 5: ປຽບທຽບຄ່າສະເລ່ຍຂອງບັນດາຕົວປ່ຽນຕ່າງສຳລັບຜູ້ທີ່ທຸກຍາກ ແລະ ຜູ້ທີ່ພົ້ນທຸກ.................. 30
ຕາຕະລາງທີ 6: ບັນດາປັດໄຈຊຶ່ງເປັນໄປໄດ້ທີ່ຈະສົ່ງຜົນກະທົບຕໍ່ກັບຄວາມທຸກຍາກ (Binary Logit coefficient estimates for determinant of Poverty)............................................................................ 32
ຕາຕະລາງທີ 7: ຄວາມເປັນໄປໄດ້ໃນການກໍ່ໃຫ້ເກີດຄວາມທຸກຍາກ (Marginal Effect)............................ 35

ກະຊວງແຜນການ ແລະ ການລົງທຶນ ສະຖາບັນຄົ້ນຄວ້າວິໄຈການພັດທະນາ
ຖະໜົນສພານຸວົງ ບ້ານ ສີຖານເໜືອ ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ
ໂທ: +85621 254826 ແຟັກ: +85621 254827